ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

23-30 ມິຖຸນາ 2024
ປີທີ 13
ສະບັບທີ 975
ລາຍສັປະດາ

## 6 ເດືອນຕົ້ນປີເສດຖະກິດຂະຫຍາຍຕົວ 4.7%



ອີງຕາມການລາຍງານໂດຍສັງເຂບຂອງທ່ານນາຍົກລັດຖະມົນຕີ ສອນໄຊ ສີພັນດອນ ໃນການຕີລາຄາສະພາບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານ ແລະ ແຜນເງິນຕາ ຕິດພັນກັບການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ໄລຍະ 6 ເດືອນຕົ້ນປີ 2024 ໂດຍສະເພາະແມ່ນວຽກງານຂົງເຂດເສດຖະກິດໃຫ້ຮູ້ວ່າ: ການຂະຫຍາຍຕົວທາງດ້ານເສດຖະກິດ ບັນລຸໄດ້ 4.7% ຄາດຄະເນໝົດປີຈະບັນລຸໄດ້ຕາມມະຕິສະພາແຫ່ງຊາດກຳນົດ (4.5%), GDP ຈະບັນລຸ 148,043 ຕື້ກີບ ຫຼື ເທົ່າກັບ 50,4% ຂອງແຜນການ (ມະຕິສະພາແຫ່ງຊາດ: 293,786 ຕື້ກີບ).

**ການປະຕິບັດແຜນງົບປະມານແຫ່ງລັດ ຮອດວັນທີ 07 ມິຖຸນາ 2024:**

- ການຈັດເກັບລາຍຮັບປະຕິບັດໄດ້ 25,957 ຕື້ກີບ ເທົ່າກັບ 52% ຂອງແຜນການປີ ທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 64% ເທົ່າກັບ 10,165 ຕື້ກີບ ໃນນັ້ນ: ລາຍຮັບພາຍໃນ 24,104 ຕື້ກີບ ເທົ່າກັບ 54% ຂອງແຜນການປີ ທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 56% ເທົ່າກັບ 8,700 ຕື້ກີບ; ສຳລັບຂັ້ນທ້ອງຖິ່ນ ໂດຍສະເລ່ຍປະຕິບັດໄດ້ 70% ໃນນີ້ ແຂວງໄຊສົມບູນປະຕິບັດໄດ້ເກີນແຜນຄື 136% ແລະ ມີ 5 ແຂວງປະຕິບັດໄດ້ 70 % ຂຶ້ນໄປ (ຫຼວງພະບາງ 74%, ບໍລິຄຳໄຊ

ອ່ານຕໍ່ໜ້າ 3

## ວຽກງານສະພາແຫ່ງຊາດ ມີຜົນສຳເລັດຫຼາຍດ້ານ

(ສພຊ) - ວັນທີ 18 ມິຖຸນາ 2024 ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງປະທານສະພາແຫ່ງຊາດ ໄດ້ຕາງໜ້າໃຫ້ຄະນະປະຈຳສະພາແຫ່ງຊາດຖະແຫຼງຂ່າວຕໍ່ສື່ມວນຊົນກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານແຕ່ກອງປະຊຸມສະໄໝສາມັນເທື່ອທີ 6 ຫາເທື່ອທີ 7 ຂອງສະພາແຫ່ງຊາດຊຸດທີ IX ເຊິ່ງສາມາດຍາດໄດ້ຜົນສຳເລັດຫຼາຍດ້ານດັ່ງນີ້:



1. ດ້ານນິຕິບັນຍັດ

1) ສຳເລັດການປັບປຸງ, ຮຽບຮຽງກົດໝາຍ 7 ສະບັບ ທີ່ໄດ້ຮັບຮອງເອົາຢູ່ກອງປະຊຸມສະໄໝສາມັນເທື່ອທີ 6; ກະກຽມໃຫ້ແກ່ການປັບປຸງລັດຖະທຳມະນູນ ແຫ່ງ ສປປ ລາວ ສະບັບປີ 2015.

2) ນຳເອົາຮ່າງກົດໝາຍ 13 ສະບັບ ທີ່ຜ່ານຂັ້ນຕອນຕາມລະບຽບການ ເຂົ້າພິຈາລະນາຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 7.

3) ຊີ້ນຳການຄົ້ນຄວ້າ, ການຕີຄວາມໝາຍ ແລະ ອະທິບາຍກົດໝາຍ ຕາມການສະເໜີຂອງພາກສ່ວນກ່ຽວຂ້ອງ 2 ຫົວຂໍ້ຄື: ມາດຕາ 152 ວັກທີ 3 ຂອງປະມວນກົດໝາຍແພ່ງ ແລະ ມາດຕາ 298 ຂອງປະມວນກົດໝາຍອາຍາ.

4) ຈັດຕັ້ງການໂຄສະນາເຜີຍແຜ່ກົດໝາຍຜ່ານສື່ມວນຊົນຂອງສະພາແຫ່ງຊາດ ເປັນຕົ້ນ ໜັງສືພິມຜູ້ແທນປະຊາຊົນ, ລາຍການໂທລະພາບ ແລະ ລາຍການວິທະຍຸ ຜູ້ແທນປະຊາຊົນ,

ອ່ານຕໍ່ໜ້າ 4

## ຮອງປະທານສະພາແຫ່ງຊາດ ຕ້ອນຮັບຂ້າຫຼວງໃຫຍ່ອົງການ ສປຊ



ອ່ານຕໍ່ໜ້າ 2

## ສະພາແຫ່ງຊາດ ມອບໃຫ້ລັດຖະບານປະຕິບັດ 7 ມາດຕະການ ຕໍ່ວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ

(ສພຊ) - ໃນຕອນເຊົ້າຂອງວັນພະຫັດທີ 13 ມິຖຸນາ 2024 ທ່ານ ຄຳໃບ ດຳລັດ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ ໄດ້ຖະແຫຼງຂ່າວເພື່ອໃຫ້ບັນດາທ່ານພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ ຕະຫຼອດຮອດພໍ່ແມ່ປະຊາຊົນລາວບັນດາເຜົ່າໃນທົ່ວປະເທດ ກໍຄືພີ່ນ້ອງເຊື້ອຊາດລາວທີ່ອາໄສຢູ່ຕ່າງປະເທດໄດ້ຮັບຮູ້ກ່ຽວກັບຜົນສຳເລັດການພິຈາລະນາຮ່າງມະຕິວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານໃນການຈັດຕັ້ງປະຕິບັດບັນດາຄາດໝາຍຂອງວຽກງານພັດທະນາຊົນນະບົດແລະແກ້ໄຂຄວາມທຸກຍາກ ໃນໄລຍະຜ່ານມາ (2021-2023) ແລະ ທິດທາງແຜນການໃນຕໍ່ໜ້າ ຕິດພັນກັບການຈັດຕັ້ງປະຕິບັດມະຕິ ເລກທີ 82/ສພຊ, ລົງວັນທີ 30 ທັນວາ 2022 ວ່າ: ໃນຕອນບ່າຍຂອງວັນທີ 12 ມິຖຸນາຜ່ານມາ, ກອງປະຊຸມສະໄໝສາມັນເທື່ອທີ 7ຂອງສະພາແຫ່ງຊາດຊຸດທີ IX ໄດ້ຮັບຟັງການລາຍງານໂດຍສັງເຂບຈາກລັດຖະບານທີ່ນຳສະເໜີໂດຍທ່ານຮອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້; ຫຼັງຈາກນັ້ນ, ຜູ້ຕາງໜ້າຄະນະປະຈຳສະພາແຫ່ງຊາດ ໄດ້ຂຶ້ນມີຄຳເຫັນຕໍ່ບົດລາຍງານດັ່ງກ່າວ, ບັນດາທ່ານສະມາຊິກສະພາແຫ່ງຊາດ ໄດ້ສຸມໃສ່ຄົ້ນຄວ້າ ແລະ ປະກອບຄຳຄິດເຫັນຢ່າງກົງໄປກົງມາ ດ້ວຍຄວາມຮັບຜິດຊອບສູງ ໃນຖານະທີ່ເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດອັນຊອບທຳຂອງປະຊາຊົນລາວບັນດາເຜົ່າ ພ້ອມທັງສະເໜີວິທີການ ແລະ ມາດຕະການເພື່ອໃຫ້ລັດຖະບານ ກໍຄືພາກສ່ວນກ່ຽວຂ້ອງນຳໄປຄົ້ນຄວ້າ, ປັບປຸງວຽກງານດັ່ງກ່າວໃຫ້ມີຜົນສຳເລັດດີຂຶ້ນ.



ກອງປະຊຸມໄດ້ມີຄວາມເອກະພາບ ແລະ ສະແດງຄວາມຊົມເຊີຍຕໍ່ລັດຖະບານ ທີ່ໄດ້ມີຄວາມພະຍາຍາມຈັດຕັ້ງປະຕິບັດບັນດາຄາດໝາຍການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ຕາມມະຕິກອງປະຊຸມສະໄໝສາ ມັນເທື່ອທີ 4 ຂອງສະພາແຫ່ງຊາດຊຸດທີ IX (ເລກທີ 82/ສພຊ, ລົງວັນທີ 30 ທັນວາ 2022) ເປັນຕົ້ນແມ່ນ 9 ຄາດໝາຍການພັດທະນາຊົນ

ອ່ານຕໍ່ໜ້າ 8

## ຄະນະປະຈຳສະພາແຫ່ງຊາດ ສະເໜີ ລັດຖະບານເອົາໃຈໃສ່ 12 ມາດຕະການ



ເພື່ອຮັບປະກັນໃຫ້ແກ່ການຈັດຕັ້ງປະຕິບັດຄາດໝາຍທິດທາງ ແລະ ແຜນວຽກງານຈຸດສຸມ 6 ເດືອນທ້າຍປີ 2024 ຂອງລັດຖະບານ, ທ່ານ ສົມມາດ ພົລເສນາ ຮອງປະທານສະພາແຫ່ງຊາດ ຕາງໜ້າໃຫ້ຄະນະປະຈຳສະພາແຫ່ງຊາດ ໄດ້ສະເໜີເອົາໃຈໃສ່ບາງມາດຕະການເພີ່ມຕື່ມ ດັ່ງນີ້:

1. ຜັນຂະຫຍາຍມະຕິຂອງກົມການເມືອງສູນກາງພັກ ສະບັບເລກທີ 04/ກມສພ, ລົງວັນທີ 11 ເມສາ 2024 ວ່າດ້ວຍການສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງໃນໄລຍະໃໝ່ເຂົ້າໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານ

ອ່ານຕໍ່ໜ້າ 5




ມະນຸດສະທຳ (ໜ້າ 9)



ສັບພະຄຸນ... (ໜ້າ 10)



ສະພາແຫ່ງຊາດ... (ໜ້າ 11)




ລະບຽບການເພື່ອຄວບຄຸມ... (ໜ້າ 12)

# ຄົ້ນຄວ້າປະກອບຄໍາເຫັນໃສ່ຮ່າງແຜນດໍາເນີນງານ WPPL



(ສພຊ) - ຕອນແລງວັນທີ 17 ມິຖຸນາຜ່ານມາ, ຄະນະສະມາຊິກສະພາແຫ່ງຊາດ (ສສຊ) ເພດຍິງ ຊຸດທີ IX ໄດ້ຈັດກອງປະຊຸມຄົ້ນຄວ້າປະກອບຄໍາເຫັນໃສ່ຮ່າງແຜນດໍາເນີນງານວ່າດ້ວຍການສົ່ງເສີມການມີສ່ວນຮ່ວມທາງດ້ານການເມືອງ ແລະ ຄວາມເປັນຜູ້ນໍາຂອງເພດຍິງ (WPPL) ແລະ ແຜນການຈັດຕັ້ງປະຕິບັດ 2024-2030 ໂດຍການເປັນປະທານຂອງທ່ານ ນາງ ທຸມມາລີ ວົງພະຈັນ ປະທານຄະນະສະມາຊິກສະພາແຫ່ງຊາດເພດຍິງ ຊຸດທີ IX, ປະທານສະມາຊິກລັດຖະສະພາເພດຍິງຂອງສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ (WAIPA); ມີ ສສຊ ເພດຍິງ ຊຸດທີ IX ແລະ ແຂກຖືກເຊີນເຂົ້າຮ່ວມຢ່າງພ້ອມພຽງ. ໃນກອງປະຊຸມ, ຜູ້ເຂົ້າຮ່ວມໄດ້ຮັບຟັງ ແລະ ສຸມໃສ່ປະກອບຄໍາຄິດຄໍາເຫັນໃສ່ຮ່າງແຜນດໍາເນີນງານວ່າດ້ວຍການສົ່ງເສີມການມີ ສ່ວນຮ່ວມທາງດ້ານການເມືອງ ແລະ ຄວາມເປັນຜູ້ນໍາຂອງເພດຍິງເຊິ່ງເປັນບົດອະທິບາຍເຖິງຄວາມເປັນມາ ແລະ ການກໍານົດສາມເສົາຄໍ້າ; ພ້ອມນັ້ນ, ຍັງໄດ້ຮັບຟັງ ແລະ ສຸມໃສ່ປະກອບຄໍາຄິດຄໍາເຫັນໃສ່ຮ່າງແຜນການຈັດຕັ້ງປະຕິບັດວ່າດ້ວຍການສົ່ງເສີມການມີສ່ວນຮ່ວມທາງດ້ານການເມືອງ ແລະ ຄວາມເປັນຜູ້ນໍາຂອງເພດຍິງ 2024-2030 ເຊິ່ງໄດ້ກໍານົດກິດຈະກໍາ, ເນື້ອໃນກິດຈະກໍາ ແລະ ໄລຍະເວລາທີ່ຈະຈັດຕັ້ງປະຕິບັດໃນແຕ່ລະປີ. ທັງນີ້, ກໍເພື່ອເປັນການກະກຽມໃຫ້ແກ່ກອງປະຊຸມໄອປາ (AIPA) ຄັ້ງທີ 45 ທີ່ ສປປ ລາວ ຈະເປັນເຈົ້າພາບໃນເດືອນຕຸລາທີ່ຈະມາເຖິງນີ້; ລັດຖະສະພາ 10 ປະເທດ ໄດ້ຮ່ວມກັນຮ່າງແຜນດໍາເນີນງານ ແລະ ແຜນການຈັດຕັ້ງປະຕິ ບັດດັ່ງກ່າວ ເຊິ່ງໄດ້ນໍາເຂົ້າພິຈາລະນາໃນກອງປະຊຸມສໍາມະນາວຽກງານໄອປາ ຄັ້ງທີ 2 ຢູ່ ສປປ ລາວ ເມື່ອເດືອນກຸມພາຜ່ານມາ ແລ້ວສົ່ງໃຫ້ບັນດາລັດຖະສະພາທີ່ເປັນສະມາຊິກໄອປາປະກອບຄໍາເຫັນກ່ອນຈະສົ່ງໃຫ້ກອງເລຂາໄອປາ ໃນວັນທີ 21 ມິຖຸນານີ້.

**(ນາງ ອາລິ່ນ ສຸພົມມະປະກິດ)**

# ມອບ-ຮັບນໍ້າດື່ມ ຊຸກຍູ້ກອງປະຊຸມສະໄໝສາມັນເທື່ອທີ 7




(ສພຊ) - ໃນວັນທີ 12 ມິຖຸນາ 2024 ທີ່ສະພາແຫ່ງຊາດ ໄດ້ມີພິທີມອບ-ຮັບນໍ້າດື່ມແຮ່ທາດມີນີໂຣ ຈໍານວນ 500 ແພັກ ລວມມູນຄ່າ 20 ລ້ານກີບ ແລະ ນໍ້າດື່ມແຮ່ທາດ ພຣີມຽມ ຈໍານວນ 200 ແພັກ ລວມມູນຄ່າ 40 ລ້ານກີບ ຈາກໂຮງງານນໍ້າດື່ມແຮ່ທາດ ມີນີໂຣ ແລະ ນໍ້າໝາກໄມ້ ຈໍາກັດ ເພື່ອປະກອບສ່ວນຊຸກຍູ້ກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດຊຸດທີ IX, ຕາງໜ້າມອບໂດຍທ່ານ ນາງ ພອນໄພລິນ ທອງສີ ຜູ້ຈັດການການຂາຍ ແລະ ການຕະຫຼາດຂອງໂຮງງານດັ່ງກ່າວ, ຕາງໜ້າຮັບໂດຍທ່ານ ປອ. ບຸນທັນ ບຸນວິໄລ ຮອງເລຂາທິການສະພາແຫ່ງຊາດ ເຊິ່ງມີພາກສ່ວນກ່ຽວຂ້ອງເຂົ້າຮ່ວມເປັນສັກຂີພະຍານ; ໂອກາດດັ່ງກ່າວ, ທ່ານ ປອ. ບຸນທັນ ບຸນວິໄລ ໄດ້ສະແດງຄວາມຂອບໃຈ ແລະ ມອບໃບຍ້ອງຍໍຂອງຄະນະເລຂາທິການສະພາແຫ່ງຊາດໃຫ້ໂຮງງານນໍ້າດື່ມແຮ່ທາດ ມີນີໂຣ ແລະ ນໍ້າໝາກໄມ້ ຈໍາກັດ ທີ່ມີຜົນງານດີເດັ່ນໃນການປະກອບສ່ວນອຸປະຖໍາໃນຄັ້ງນີ້.

**(ນາງ ກຸກກິກ ບຸດດາໄຊ)**



## ຮອງປະທານ...

(ຕໍ່ຈາກໜ້າ 1)

(ສພຊ) - ວັນທີ 7 ມິຖຸນາຜ່ານມາ, ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງທ່ານ ວອນເກີ ເຕີກ (Volker Türk) ຂ້າຫຼວງໃຫຍ່ອົງການສະຫະປະຊາຊາດ (ສປຊ) ເພື່ອສິດທິມະນຸດ (UN High Commissioner for Human Rights) ພ້ອມດ້ວຍຄະນະ ໃນໂອກາດທີ່ເດີນທາງມາຢ້ຽມຢາມ ແລະ ເຮັດວຽກ ຢູ່ ສປປ ລາວ ເຊິ່ງເປັນການຢ້ຽມຢາມຄັ້ງທໍາອິດຂອງເຈົ້າໜ້າທີ່ຂັ້ນສູງດ້ານສິດທິມະນຸດຂອງອົງການ ສປຊ; ທັງນີ້ ກໍເພື່ອເປັນແຮງສະໜັບສະໜູນ ສປປ ລາວ ໃນການເປັນປະທານອາຊຽນ 2024 ແລະ ປະທານຄະນະກໍາມາທິການລະຫວ່າງລັດຖະບານອາຊຽນວ່າດ້ວຍສິດທິມະນຸດ (ASEAN Intergovernmental Commission on Human Rights "AICHR").

ໃນການເຂົ້າຢ້ຽມຂໍ່ານັບ, ທ່ານ ວອນເກີ ເຕີກ ໄດ້ຕີລາຄາສູງຕໍ່ການຮ່ວມມືທີ່ດີລະຫວ່າງລັດຖະບານລາວ ແລະ ຫ້ອງການຂ້າຫຼວງໃຫຍ່ ສປຊ ເພື່ອສິດທິມະນຸດໃນໄລຍະຜ່ານມາ ແລະ ສະແດງຄວາມຊົມ ເຊີຍຕໍ່ຄວາມພະຍາຍາມ ແລະ ຜົນສໍາເລັດເປັນກ້າວໆມາຂອງວຽກງານການສົ່ງເສີມ ແລະ ປົກປ້ອງສິດ ທິມະນຸດຢູ່ ສປປ ລາວ ໂດຍສະເພາະການຈັດຕັ້ງປະຕິບັດພັນທະ ແລະ ຄໍາໝັ້ນສັນຍາສາກົນພາຍໃຕ້ສົນທິສັນຍາດ້ານສິດທິມະນຸດ ທີ່ ສປປ ລາວ ເປັນພາຄີ ກໍຄືພາຍໃຕ້ກົນໄກທົບທວນປະຈໍາໄລຍະ (UPR) ລວມທັງການສ້າງແລະປ້ອງກັນບົດລາຍງານແຫ່ງຊາດຂອງ ສປປ ລາວ ແລະ ຊົມເຊີຍຕໍ່ບົດບາດຂອງ ສປປລາວໃນການເປັນປະທານອາຊຽນ2024ພາຍໃຕ້ຄໍາຂວັນ "ເພີ່ມທະວີການເຊື່ອມຈອດ ແລະ ຄວາມເຂັ້ມແຂງອາຊຽນ"; ນອກນັ້ນ, ກໍໄດ້ແລກປ່ຽນຄໍາຄິດເຫັນກ່ຽວກັບການສົ່ງເສີມບົດບາດຍິງ-ຊາຍ, ການປະຕິບັດກົດໝາຍທີ່ກ່ຽວຂ້ອງກັບສິດທິມະນຸດ ແລະ ສິດທິທາງດ້ານເສດຖະກິດ, ສັງຄົມ ແລະ ວັດທະນະທໍາ.

ທ່ານຮອງປະທານສະພາແຫ່ງຊາດ ໄດ້ຍົກໃຫ້ເຫັນຜົນສໍາເລັດເປັນກ້າວໆມາໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX, ການສຸມໃສ່ຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ການແກ້ໄຂບັນຫາຢາເສບຕິດ, ການຈັດຕັ້ງປະຕິບັດເປົ້າໝາຍການພັດທະນາແບບຍືນຍົງ ລວມທັງເປົ້າໝາຍສະເພາະສໍາລັບ ສປປ ລາວ ກ່ຽວກັບການແກ້ໄຂຜົນກະທົບຂອງລະເບີດບໍ່ທັນແຕກເຊິ່ງເປັນສິ່ງກີດຂວາງອັນສໍາຄັນຕໍ່ການພັດທະນາເສດຖະກິດ-ສັງຄົມ, ຕໍ່ການລຶບລ້າງຄວາມທຸກຍາກ ກໍຄືຕໍ່ການຊົມໃຊ້ສິດທິມະນຸດຂອງປະຊາຊົນລາວບັນດາເຜົ່າ; ສປປ ລາວ ຍາມໃດກໍມີຄວາມພະຍາຍາມໃນການຈັດຕັ້ງຜັນຂະຫຍາຍພັນທະສາກົນ ພາຍໃຕ້ສົນທິສັນຍາສາກົນດ້ານສິດທິມະນຸດ ທີ່ ສປປ ລາວ ເປັນພາຄີ ເຂົ້າໃນລະບົບກົດໝາຍຂອງຕົນ ດ້ວຍການບັນຍັດສິດທິພື້ນຖານ ແລະ ພັນທະຂອງປະຊາຊົນລາວ ໄວ້ໃນລັດຖະທໍາມະນູນ, ກົດໝາຍ ແລະ ນິຕິກໍາຫຼາຍໆສະບັບ ແລະ ເອົາໃຈໃສ່ສ້າງຄວາມຮັບຮູ້ ແລະ ຄວາມເຂົ້າ ໃຈຢ່າງຖືກຕ້ອງກ່ຽວກັບສິດທິມະນຸດໃຫ້ພະນັກງານ ແລະ ເຈົ້າໜ້າທີ່ຂັ້ນສູນກາງ, ຂັ້ນທ້ອງຖິ່ນ ກໍຄືອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງທາງສັງຄົມ ແລະ ປະຊາຊົນລາວບັນດາເຜົ່າ.

# ຄະນະຜູ້ແທນສະພາແຫ່ງຊາດ ເຂົ້າຮ່ວມ ກອງປະຊຸມຄະນະປະສານງານໄອປາ ຄັ້ງທີ 15



(ສພຊ) - ລະຫວ່າງວັນທີ 10-12 ມິຖຸນາ 2024 ຄະນະຜູ້ແທນສະພາແຫ່ງຊາດລາວ ນໍາໂດຍ ທ່ານ ຈັນທະວົງ ແສນອາມາດມົນຕີ ຮອງປະທານກໍາມາທິການການຕ່າງປະເທດ, ທ່ານ ຄໍາມ່ວນ ຊົມສີທາປັນຍາ ຮອງປະທານກໍາມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ໄດ້ເຂົ້າຮ່ວມກອງປະຊຸມຄະນະປະສານງານສະມັດຊາລັດຖະສະພາລະຫວ່າງຊາດອາຊຽນ (AIPA Caucus) ຄັ້ງທີ 15 ທີ່ນະຄອນຫຼວງບານດາເສຣີເບກາວັນ, ປະເທດບຣູໄນ ດາຣູຊາລາມ ພາຍໃຕ້ຫົວຂໍ້: "ການເສີມຂະຫຍາຍຄວາມເຂັ້ມແຂງທາງໄຊເບີໃນອາຊຽນ ໂດຍຜ່ານການຮ່ວມມືລັດຖະສະພາ: ມຸ່ງໝັ້ນໄປສູ່ອະນາຄົດທີ່ປອດໄພ ແລະ ເສດຖະກິດດິຈິຕອນທີ່ສົດໃສ" ເຂົ້າຮ່ວມກອງປະຊຸມຄັ້ງນີ້ ມີທ່ານປະທານລັດຖະສະພາບຣູໄນດາຣູຊາລາມ, ທ່ານເລຂາທິການໃຫຍ່ໄອປາ, ຄະນະຜູ້ແທນຈາກປະເທດສະມາຊິກໄອປາ ຄື: ກໍາປູເຈຍ, ອິນໂດເນເຊຍ, ລາວ, ມາເລເຊຍ, ຟີລິບປິນ, ສິງກະໂປ, ໄທ, ຫວຽດນາມ ແລະ ປະເທດເຈົ້າພາບ ພ້ອມດ້ວຍກອງເລຂາໄອປາ, ກອງເລຂາອາຊຽນ, ຜູ້ຕາງໜ້າຈາກສະຖາບັນຄົ້ນຄວ້າເສດຖະກິດອາຊຽນ, ຄະນະຜູ້ແທນຈາກລັດຖະສະພາບຣູໄນ ດາຣູຊາລາມ ລວມທັງໝົດ 90 ທ່ານ.

ຄະນະຜູ້ແທນທີ່ເຂົ້າຮ່ວມກອງປະຊຸມໄດ້ພ້ອມກັນທົບທວນຄືນ, ສົນທະນາ ແລະ ປຶກສາຫາລືກັນຢ່າງກົງໄປກົງມາ ແລະ ສ້າງສັນ ກ່ຽວກັບການຈັດຕັ້ງປະຕິບັດບັນດາມະຕິຈໍານວນ 16 ສະບັບ ໃນຂົງເຂດວຽກງານການເມືອງ, ເສດຖະກິດ, ສັງຄົມ, ສະມາຊິກລັດຖະສະພາເພດຍິງ ແລະ ວຽກງານສະມາຊິກລັດຖະສະພາໜຸ່ມຂອງໄອປາທີ່ໄດ້ຮັບຮອງເອົາໃນກອງປະຊຸມສະມັດຊາໃຫຍ່ໄອປາ ຄັ້ງທີ 44 ທີ່ນະຄອນຫຼວງຈາກາຕາ, ປະເທດອິນໂດເນເຊຍ ໃນປີ 2023.

ການເຂົ້າຮ່ວມກອງປະຊຸມຄັ້ງນີ້, ຄະນະຜູ້ແທນສະພາແຫ່ງຊາດລາວ ໄດ້ລາຍງານແລະປະກອບຄໍາເຫັນຮ່ວມກັບບັນດາປະເທດສະມາຊິກໄອປາ ໃນສອງວຽກງານຕົ້ນຕໍ ຄື: 1. ການຜັນຂະຫຍາຍ ແລະ ການຈັດຕັ້ງປະຕິບັດບັນດາມະຕິຕ່າງໆຂອງກອງປະຊຸມໃຫຍ່ໄອປາ ຄັ້ງທີ 44 ເພື່ອຊຸກຍູ້ສົ່ງເສີມການຮ່ວມມືຂອງລັດຖະສະພາອາຊຽນ, ການເຕີບໂຕຂອງເສດຖະກິດແບບຍືນຍົງ ແລະ ກວມລວມ, ການຫັນເປັນດິຈິຕອນເພື່ອການຟື້ນຟູເສດຖະກິດ, ການແກ້ໄຂບັນຫາຢາເສບຕິດ, ການປົກປ້ອງສຸຂະພາບ ແລະ ສັງຄົມຢ່າງເທົ່າທຽມ, ການເພີ່ມທະວີຄວາມອາດສາມາດໃຫ້ແກ່ຊາວໜຸ່ມ ໃນການມີສ່ວນຮ່ວມຢ່າງຫ້າວຫັນຕໍ່ການພັດທະນາເສດຖະກິດ-ສັງຄົມ, ການສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ ແລະ ການສົ່ງເສີມບົດບາດຂອງສະມາຊິກລັດຖະສະພາເພດຍິງ; 2. ການຈັດຕັ້ງປະຕິບັດວຽກງານການພັດທະນາດິຈິຕອນ ໃນ ສປປ ລາວ ໂດຍສອດຄ່ອງກັບຍຸດທະສາດການເຊື່ອມໂຍງ-ເຊື່ອມຈອດກັບພາກພື້ນ ແລະ ສາກົນ ໂດຍສະເພາະແມ່ນແຜນພັດທະນາເຊື່ອມຈອດອາຊຽນ ຮອດປີ 2025 ພາຍໃຕ້ຫົວຂໍ້ ການເສີມຂະຫຍາຍຄວາມເຂັ້ມແຂງທາງໄຊເບີໃນອາຊຽນ ໂດຍຜ່ານການຮ່ວມມືລັດຖະສະພາ: ມຸ່ງໝັ້ນໄປສູ່ອະນາຄົດທີ່ປອດໄພ ແລະ ເສດຖະກິດດິຈິຕອນທີ່ສົດໃສ.

ກອງປະຊຸມໄດ້ເຫັນດີເປັນເອກະພາບ ແລະ ລົງລາຍເຊັນຮັບຮອງເອົາບົດລາຍງານຂອງກອງປະຊຸມຄະນະປະສານງານໄອປາ ຄັ້ງທີ 15 ເພື່ອນໍາໄປລາຍງານໃນກອງປະຊຸມສະມັດຊາໃຫຍ່ໄອປາ ຄັ້ງທີ 45 ທີ່ ສປປລາວ ໄດ້ຮັບກຽດເປັນເຈົ້າພາບໃນເດືອນຕຸລາ 2024; ພ້ອມນັ້ນ, ຍັງໄດ້ຕົກລົງເຫັນດີໃຫ້ລາຊະອານາຈັກກໍາປູເຈຍເປັນເຈົ້າພາບຈັດກອງປະຊຸມຄະນະປະສານງານໄອປາ (AIPA Caucus) ຄັ້ງທີ 16 ໃນປີ 2025.

ນອກຈາກນັ້ນ, ຄະນະຜູ້ແທນລາວ ຍັງໄດ້ເຂົ້າຮ່ວມກອງປະຊຸມສາມຝ່າຍລະຫວ່າງພາກສ່ວນຫົວໜ່ວຍທຸລະກິດ, ລັດຖະບານ ແລະ ລັດຖະສະພາ ໃນການປຶກສາຫາລືຮ່ວມກັນເພື່ອສ້າງກົນໄກພັດທະນາເສດຖະກິດດິຈິຕອນຂອງອາຊຽນ ກໍຄືຂອງບັນດາປະເທດສະມາຊິກພາຍໃຕ້ຍຸດທະສາດ "ການເສີມຂະຫຍາຍຄວາມເຂັ້ມແຂງທາງໄຊເບີແລະການພັດທະນາວຽກງານດິຈິຕອນກ້າວໄປສູ່ຄວາມສີວິໄລຮ່ວມກັນ."

# ກອງປະຊຸມໃຫຍ່ຄັ້ງທີ II ຂອງໜ່ວຍຊາວໜຸ່ມຣາກຖານກົມການເງິນ




(ສພຊ) - ກອງປະຊຸມໃຫຍ່ຄັ້ງທີ II ຂອງໜ່ວຍຊາວໜຸ່ມຣາກຖານກົມການເງິນໄດ້ຈັດຂຶ້ນເມື່ອວັນພຸດທີ 12 ມິຖຸນາຜ່ານມາພາຍໃຕ້ການເປັນປະທານຮ່ວມຂອງສະຫາຍ ນາງ ດາວເພັດ ສີຫາວົງ ຄະນະພັກຣາກຖານຄະນະເລຂາທິການສະພາແຫ່ງຊາດ, ຮອງເລຂາໜ່ວຍພັກກົມການເງິນ, ສະຫາຍ ພອນແກ້ວ ຕົ້ນວໍລະຈິດ ກໍາມະການຄະນະບໍລິຫານງານສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ, ເລຂາຄະນະບໍລິຫານງານຊາວໜຸ່ມສະພາແຫ່ງຊາດ, ສະຫາຍ ນັດທີ ເພັດມີໄຊ ເລຂາໜ່ວຍຊາວໜຸ່ມຣາກຖານກົມການເງິນ; ມີຜູ້ແທນສົມບູນ ແລະ ແຂກຖືກເຊີນເຂົ້າຮ່ວມຫຼາຍກວ່າ 20 ສະຫາຍ.

ກອງປະຊຸມໄດ້ເປັນເອກະສັນຮັບຮອງເອົາລາຍງານການເມືອງ ແລະ ສະແດງຄວາມເຫັນດີເຫັນພ້ອມຕໍ່ບົດສະຫຼຸບຕີລາຄາຜົນງານຂອງໜ່ວຍຊາວໜຸ່ມຣາກຖານກົມການເງິນ ທີ່ຍາດມາໄດ້ໃນໄລຍະຜ່ານມາ ເຊິ່ງແມ່ນຜົນງານໃນການນໍາພາ-ຊີ້ນໍາຂອງຄະນະໜ່ວຍຊາວໜຸ່ມຣາກຖານ ຕໍ່ຂົງເຂດວຽກງານຕ່າງໆຕາມຄວາມຮັບຜິດຊອບ; ພ້ອມກັນນີ້, ກໍເປັນເອກະພາບຕາມທິດທາງລວມ, ຄາດໝາຍສູ້ຊົນ ແລະ ທິດທາງວຽກງານລະອຽດແຕ່ລະດ້ານ ໃນ 5 ປີຕໍ່ໜ້າ; ຮັບຟັງການລາຍງານ ແລະ ຮັບຮອງເອົາບົດສໍາຫຼວດການນໍາພາຂອງຄະນະໜ່ວຍຊາວໜຸ່ມຣາກຖານໃນໄລຍະຜ່ານມາເຊິ່ງໄດ້ຕີລາຄາດ້ານດີ, ດ້ານອ່ອນ ຂໍ້ຄົງຄ້າງ ແລະ ບົດຮຽນຖອດຖອນໄດ້ຈໍານວນໜຶ່ງ ທີ່ຄະນະໜ່ວຍຊາວໜຸ່ມຣາກຖານຊຸດໃໝ່ ຈະໄດ້ປັບປຸງແກ້ໄຂຂໍ້ບົກຜ່ອງ ແລະ ເສີມຂະຫຍາຍດ້ານຕັ້ງໜ້າຢ່າງແຂງແຮງ.

ຜູ້ແທນສົມບູນ ໄດ້ໃຊ້ສິດປະຊາທິປະໄຕປ່ອນບັດເລືອກເອົາຄະນະໜ່ວຍຊາວໜຸ່ມຣາກຖານກົມການເງິນ ຊຸດໃໝ່ ບົນພື້ນຖານຕາມຫຼັກການລວມສູນປະຊາທິປະໄຕ, ຖືກຕ້ອງຕາມມາດຕະຖານເງື່ອນໄຂທີ່ໄດ້ກໍານົດໄວ້ ເຊິ່ງມີຜູ້ສະໝັກທັງໝົດ 5 ສະຫາຍ ຍິງ 2 ສະຫາຍ, ເລືອກເອົາ 3 ສະຫາຍ; ກອງປະຊຸມຄັ້ງປະຖົມມະລືກຂອງຄະນະໜ່ວຍຊາວໜຸ່ມຣາກຖານຊຸດໃໝ່ ໄດ້ເປັນເອກະພາບເລືອກເອົາສະຫາຍ ສຸກສະໄຫວ ພົມມີສຸກ ເປັນເລຂາ, ສະຫາຍ ນາງ ນຸດທິລາ ວິໄລພອນ ເປັນຮອງເລຂາ ແລະ ປະທານກວດກາ, ສະຫາຍ ວັນໄຊ ຄູນສະໄໝ ເປັນກໍາມະການ.

ສະຫາຍ ນາງ ດາວເພັດ ສີຫາວົງ ໄດ້ມີຄໍາເຫັນໂອ້ລົມຕໍ່ທີ່ປະຊຸມ ເຊິ່ງໄດ້ສະແດງຄວາມຍ້ອງຍໍຊົມເຊີຍ ແລະ ຕີລາຄາສູງຕໍ່ຜົນງານທີ່ໜ່ວຍຊາວໜຸ່ມຣາກຖານກົມການເງິນຍາດມາໄດ້ໃນໄລຍະຜ່ານມາ. ພ້ອມນັ້ນ, ກໍໄດ້ຮຽກຮ້ອງມາຍັງບັນດາສະຫາຍໃນຄະນະໜ່ວຍຊາວໜຸ່ມຊຸດໃໝ່ເພີ່ມທະວີການຊີ້ນໍາ-ນໍາພາຈັດຕັ້ງປະຕິບັດວຽກງານຕາມທິດທາງແຜນການທີ່ກໍານົດໄວ້, ຫັນມະຕິກອງປະຊຸມໃຫຍ່ຄັ້ງທີ II ຂອງໜ່ວຍຊາວໜຸ່ມຣາກຖານກົມການເງິນ ມາເປັນແຜນການ ແລະ ຈັດຕັ້ງປະຕິບັດໃຫ້ມີຜົນສໍາເລັດ; ເອົາໃຈໃສ່ສຶກສາອົບຮົມຄຸນທາດການເມືອງ, ຄຸນສົມບັດສິນທໍາປະຕິວັດສະມາຊິກຊາວໜຸ່ມໃຫ້ມີຄວາມໜັກແໜ້ນເຂັ້ມແຂງ, ມີຄວາມຮັບຜິດຊອບສູງຕໍ່ໜ້າທີ່ການເມືອງທີ່ໄດ້ຮັບມອບໝາຍ; ຕັ້ງໜ້າຄົ້ນຄວ້າຮໍ່າຮຽນເພື່ອຍົກສູງຄວາມຮູ້, ຄວາມສາມາດ; ປັບປຸງແຜນການນໍາພາ ແລະ ວິທີເຮັດວຽກໃຫ້ດີຂຶ້ນຕື່ມ ແລະ ຕ້ອງເປັນແບບຢ່າງໃນການດໍາລົງຊີວິດໃຫ້ສົມກັບຄວາມເຊື່ອໝັ້ນ ແລະ ຄວາມໄວ້ວາງໃຈຂອງສະມາຊິກຊາວໜຸ່ມທີ່ໄດ້ເລືອກເອົາບັນດາສະຫາຍ. ເອົາໃຈໃສ່ເຕົ້າໂຮມຄວາມສາມັກຄີ, ຊຸກຍູ້ສະມາຊິກຊາວໜຸ່ມເຂົ້າຮ່ວມຂະບວນການຂອງອົງການຈັດຕັ້ງຢ່າງເປັນເຈົ້າການ; ສືບຕໍ່ປັບປຸງສະມາຊິກຊາວໜຸ່ມໃຫ້ມີຄວາມເຂັ້ມແຂງທາງດ້ານການເມືອງ-ແນວຄິດ, ການຈັດຕັ້ງ, ແບບແຜນວິທີເຮັດວຽກຢ່າງມີວິທະຍາສາດ ແລະ ມີຫົວຄິດປະດິດສ້າງ ບົນພື້ນຖານລະບຽບຫຼັກການ, ດໍາເນີນຊີວິດການເມືອງເປັນປົກກະຕິ ໂດຍຖືເອົາການຕໍານິຕິຊົມຕົນເອງ, ການຕິຊົມເຊິ່ງກັນ ແລະ ກັນເປັນປັດໄຈສໍາຄັນ; ປະຕິບັດຫຼັກການລວມສູນປະຊາທິປະໄຕ, ນໍາພາເປັນໝູ່ຄະນະ, ມີການແບ່ງງານ, ແບ່ງຄວາມຮັບຜິດຊອບໃຫ້ບຸກຄົນຢ່າງຈະແຈ້ງ; ຕັ້ງໜ້າເຄື່ອນໄຫວປະຕິບັດຂໍ້ແຂ່ງຂັນ "4 ບຸກທະລຸ" ຂອງຊາວໜຸ່ມໂດຍຕິດພັນກັບຂໍ້ແຂ່ງຂັນ "ຮັກຊາດ ແລະ ພັດທະນາ" ເພື່ອເຮັດໃຫ້ໜ່ວຍຊາວໜຸ່ມຣາກຖານກົມການເງິນ ສາມາດຍາດໄດ້ຜົນງານທີ່ດີຂຶ້ນກວ່າເກົ່າ.

**(ອານຸສອນ ພູມມີທອນ)**

## 6 ເດືອນຕົ້ນປີ...

(ຕໍ່ຈາກໜ້າ 1)

94%, ຄໍາມ່ວນ 86%, ສະຫວັນນະເຂດ 97% ແລະ ເຊກອງ 75%).

- ການປະຕິບັດລາຍຈ່າຍ ປະຕິບັດໄດ້ 19,061 ຕື້ກີບ ເທົ່າກັບ 32% ຂອງແຜນການປີ, ຄາດຄະເນລາຍຈ່າຍ6ເດືອນຕົ້ນປີ 28,519 ຕື້ກີບ ເທົ່າກັບ 48% ຂອງແຜນການປີ (ມະຕິສະພາແຫ່ງຊາດໝົດປີ: 58,914 ຕື້ກີບ); ໄດ້ສືບຕໍ່ແກ້ໄຂຄວາມຫຍຸ້ງຍາກທາງດ້ານຊີວິດການເປັນຢູ່ ໂດຍການຕົກລົງ ແລະ ເບີກຈ່າຍເງິນອຸດໜູນຄ່າຄອງຊີບໃຫ້ພະນັກງານ-ລັດຖະກອນ, ທະຫານ, ຕໍາຫຼວດ, ພະນັກງານບໍານານ ແລະ ຜູ້ເສຍອົງຄະ ເພີ່ມ 150,000 ກີບ/ຄົນ/ເດືອນ.

- ການແກ້ໄຂໜີ້ສິນ: ສືບຕໍ່ແກ້ໄຂໜີ້ສິນພາຍໃນ ແລະ ຕ່າງປະເທດ ດ້ວຍຮູບການຕ່າງໆທັງຈາກງົບປະມານລັດ ແລະ ຈາກການລະດົມທຶນພາຍໃນເພື່ອຊໍາລະຕົ້ນທຶນ ແລະ ດອກເບ້ຍ ໄດ້ຕາມສັນຍາ, ການແກ້ໄຂໜີ້ໂຄງການລົງທຶນຂອງລັດ ດ້ວຍຮູບແບບອວ່າຍໜີ້ 3 ແຈບ້ວງ 8 ພັນຕື້ກີບ ເຊິ່ງມາຮອດປັດຈຸບັນໄດ້ສໍາເລັດການອອກພັນທະບັດ 7,390 ຕື້ກີບ ເທົ່າກັບ 92% ຂອງແຜນການ, ສືບຕໍ່ຈັດຕັ້ງປະຕິບັດມາດຕະການຕ່າງໆໃນການລະດົມທຶນເພື່ອຊໍາລະໜີ້ສິນໃຫ້ຕ່າງປະເທດທັນຕາມກໍານົດເວລາ, ເຈລະຈາກັບບໍລິສັດຈໍານວນໜຶ່ງທີ່ກູ້ຢືມເງິນກັບທະນາຄານແຫ່ງ ສປປ ລາວ ໃຫ້ຊໍາລະເງິນກູ້ກ່ອນກໍານົດໃນສັນຍາເງິນກູ້ ເຊິ່ງບໍລິສັດເຫຼົ່ານັ້ນຊໍາລະໃຫ້ແລ້ວເກືອບ 30% ຂອງມູນຄ່າເງິນກູ້ທັງໝົດ; ນອກນັ້ນ ກໍໄດ້ສຸມໃສ່ແກ້ໄຂໜີ້ເງິນກູ້ຂອງລັດວິສາຫະກິດຈໍານວນໜຶ່ງແລະໜີ້ສິນຄ່າກະແສໄຟຟ້າ.

**ການຮັກສາສະຖຽນລະພາບດ້ານເງິນຕາ:**

- ການຄວບຄຸມອັດຕາເງິນເຟີ້: ໃນ 5 ເດືອນຕົ້ນປີ ສະເລ່ຍຢູ່ໃນລະດັບ 25,1% ສະເພາະເດືອນພຶດສະພາ 25,8 % ແລະ ຄາດຄະເນ 6 ເດືອນຕົ້ນປີຈະຢູ່ໃນລະດັບ 25% (ມະຕິສະພາແຫ່ງຊາດ: ບໍ່ໃຫ້ເກີນ 9% ຫຼື1ຕົວເລກໃນທ້າຍປີ2024).

- ປະລິມານເງິນ M2 ທີ່ບໍ່ລວມການອ່ອນຄ່າຂອງເງິນກີບ ຮອດທ້າຍເດືອນພຶດສະພາ ຂະຫຍາຍຕົວໃນລະດັບ 22 % ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ (ປະລິມານເງິນ M2 ລວມການອ່ອນຄ່າຂອງເງິນກີບ ຂະຫຍາຍຕົວໃນລະດັບ 39% ທຽບໃສ່ໃນໄລຍະດຽວກັນຂອງປີຜ່ານມາ), ໃນ 6 ເດືອນຕົ້ນປີ ການຂະຫຍາຍຕົວຂອງປະລິມານເງິນ M2 ຄາດວ່າຈະຢູ່ໃນລະດັບ 22% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ, ຖ້າລວມການອ່ອນຄ່າຂອງອັດຕາແລກປ່ຽນ ຈະຂະຫຍາຍຕົວໃນລະດັບ 35% (ມະຕິສະພາແຫ່ງຊາດ: ບໍ່ເກີນ 25% ໃນທ້າຍປີ 2024) ປັດໄຈຕົ້ນຕໍທີ່ເຮັດໃຫ້ປະລິມານເງິນ M2 ຂະຫຍາຍຕົວເພີ່ມຂຶ້ນ ແມ່ນການເພີ່ມຂຶ້ນຂອງເງິນຝາກທີ່ເປັນເງິນຕາຕ່າງປະເທດໃນລະບົບທະນາຄານ.

**-ອັດຕາແລກປ່ຽນຂອງລະບົບທະນາຄານ:** ຮອດທ້າຍເດືອນພຶດສະພາ ທຽບໃສ່ທ້າຍປີ 2023 ເງິນກີບທຽບໃສ່ເງິນໂດລາ ອ່ອນຄ່າ 3.98%, ເງິນກີບທຽບໃສ່ເງິນບາດ ອ່ອນຄ່າ 2.96%, ສິ່ງທ້າທາຍແມ່ນສ່ວນຕ່າງອັດຕາແລກປ່ຽນກີບ/ໂດລາ ລະຫວ່າງທະນາຄານທຸລະກິດ ແລະ ຕະຫຼາດນອກລະບົບ ຍັງຢູ່ໃນລະດັບທີ່ສູງກວ່າ 10% ທຽບໃສ່ຄາດໝາຍວາລະແຫ່ງຊາດແມ່ນຍັງສູງ(ຄາດໝາຍວາລະແຫ່ງຊາດ ບໍ່ເກີນ 2%).

**- ການຄຸ້ມຄອງເງິນຕາຕ່າງປະເທດ:** ຮອດທ້າຍເດືອນພຶດສະພາ ໄດ້ຍັ້ງຢືນການເປີດບັນຊີສະເພາະຜູ້ສົ່ງອອກ-ນໍາເຂົ້າ ທັງໝົດ 2,718 ບໍລິສັດ, ເປີດບັນຊີແລ້ວ 1,172 ບໍລິສັດ (ຈໍານວນ 5,316 ບັນຊີ) ແລະ ບັນຊີການລົງທຶນໂດຍກົງຈາກຕ່າງປະເທດນໍາ 29 ທະນາຄານທຸລະກິດ ມີ 178 ບໍລິສັດ; ລາຍຮັບເງິນຕາຈາກການສົ່ງອອກຜ່ານລະບົບທະນາຄານ ຄາດຄະເນ 6 ເດືອນຕົ້ນປີ 63,33% ຂອງການສົ່ງອອກທັງໝົດ (ມະຕິສະພາແຫ່ງຊາດໝົດປີ:70% ຂຶ້ນໄປ); ຮັກສາຄັງສໍາຮອງເງິນຕາຕ່າງປະເທດ ໄວ້ໃນລະດັບສາມາດກຸ້ມນໍາເຂົ້າໄດ້ 4,2 ເດືອນ (ມະຕິສະພາແຫງຊາດ: ໝົດປີຢ່າງໜ້ອຍ 5-6 ເດືອນ) ທຽບໃສ່ຄາດໝາຍຂອງວາລະແຫ່ງຊາດ ແມ່ນລື່ນຄາດໝາຍ (ວາລະແຫ່ງຊາດ: ບໍ່ຫຼຸດ 3 ເດືອນ).

**- ການດຸ່ນດ່ຽງການຄ້າຕ່າງປະເທດ:** ຄາດວ່າຈະປະຕິບັດໄດ້ 9,161.65 ລ້ານໂດລາ ເທົ່າກັບ 57.22% ຂອງແຜນການ(ແຜນການ:16,010.09 ລ້ານໂດລາ) ໃນນີ້ ມູນຄ່າການສົ່ງອອກ 4,746.47 ລ້ານໂດລາ ເທົ່າກັບ 54.4%ຂອງແຜນການ (ມະຕິສະພາແຫ່ງຊາດ: 8,724.33 ລ້ານໂດລາ) ມູນຄ່າການນໍາເຂົ້າ 4,415.18 ລ້ານໂດລາ ເທົ່າກັບ 60.6% ຂອງແຜນການ(ມະຕິສະພາແຫ່ງຊາດ:7,285.76ລ້ານໂດລາ), ດຸນການຄ້າ ເກີນດຸນ 331.28 ລ້ານໂດລາ ເທົ່າກັບ 23.03% ຂອງແຜນການ(ມະຕິສະພາແຫ່ງຊາດ: 1,438.57 ລ້ານໂດລາ) ຖ້າບໍ່ລວມຕົວເລກນໍາເຂົ້າ ແລະ ສົ່ງອອກໄຟຟ້າຂາດດຸນການຄ້າ 451.05 ລ້ານໂດລາ; ເຖິງວ່າການຄ້າກັບຕ່າງປະເທດຂອງ ສປປ ລາວ ເກີນດຸນ, ແຕ່ຫຼຸດລົງທຽບກັບປີ 2023.

**ການປະຕິຮູບລັດວິສາຫະກິດ:**

ສືບຕໍ່ປະຕິຮູບລັດວິສາຫະກິດ 32 ຫົວໜ່ວຍ ໃນນີ້ ສຸມໃສ່ຫົວໜ່ວຍທີ່ເປັນຍຸດທະສາດ, ມາຮອດປັດຈຸບັນສໍາເລັດຂາດຕົວ 8 ຫົວໜ່ວຍ; ໃນຕົ້ນປີ 2024 ສຸມໃສ່ປະຕິບັດຕາມການຊີ້ນໍາຂອງກົມການເມືອງສູນກາງພັກ ແຕ່ງຕັ້ງຄະນະປະຕິຮູບລັດວິສາຫະກິດ ເພື່ອສືບຕໍ່ປະຕິຮູບ 24 ຫົວໜ່ວຍທີ່ຍັງບໍ່ທັນສໍາເລັດ, ໃນນັ້ນ ສຸມໃສ່ລັດວິສາຫະກິດໄຟຟ້າລາວ, ລັດວິສາຫະກິດການບິນລາວ ແລະ ລັດວິສາຫະກິດນໍ້າມັນເຊື້ອໄຟລາວ.

**ການແກ້ໄຂບັນຫາພະລັງງານໄຟຟ້າບໍ່ພຽງພໍ ແລະ ການສົ່ງອອກໄຟຟ້າ:**

ເລັ່ງຊຸກຍູ້ບັນດາໂຄງການທີ່ໄດ້ຮັບອະນຸມັດ ໃຫ້ດໍາເນີນກໍ່ສ້າງສໍາເລັດຕາມແຜນເປີດການຜະລິດ (COD) ທີ່ໄດ້ກໍານົດໄວ້; ເລັ່ງພັດທະນາພະລັງງານລົມ, ພະລັງງານແສງອາທິດ ຕາມທ່າແຮງຂອງແຕ່ລະບໍລິເວນ ແລະ ໄດ້ອະນຸມັດໂຄງການຈໍານວນໜຶ່ງ. ພ້ອມກັນນັ້ນ ກໍໃຫ້ເລັ່ງການສ້າງສາຍສົ່ງໄຟຟ້າເພື່ອດັດສົມເອົາກະແສໄຟຟ້າຈາກບ່ອນທີ່ມີຫຼາຍ ແລະ ເຫຼືອນໍາໃຊ້ໄປສູ່ບ່ອນຂາດແຄນ; ເຈລະຈານໍາໂຄງການ IPP ທີ່ສົ່ງໄຟຟ້າອອກໄປຕ່າງປະເທດ ແຕ່ໄດ້ກໍານົດໃນສັນຍາມີສ່ວນສະໜອງພາຍໃນ, ແຕ່ບໍ່ທັນໄດ້ປະຕິບັດ; ຫຼຸດຜ່ອນການສະໜອງໄຟຟ້າໃຫ້ບັນດາໂຄງການຂຸດຄົ້ນບິດຄອຍ; ສົ່ງເສີມການນໍາໃຊ້ໄຟຟ້າແສງຕາເວັນ ຕາມສາຍທາງ, ສະຖານທີ່ສາທາລະນະກາງແຈ້ງ, ຄົວເຮືອນ ແລະ ສໍານັກງານອົງການຕ່າງໆ.

**ການຄຸ້ມຄອງໂຄງການບໍ່ແຮ່:**

- ໂຈະການພິຈາລະນາອະນຸມັດໂຄງການໃໝ່ສໍາລັບແຮ່ທາດຈໍານວນໜຶ່ງ ແຕ່ຕົ້ນປີ 2023 ເປັນຕົ້ນມາ ແລະ ດໍາເນີນການປະເມີນຜົນການຈັດຕັ້ງປະຕິບັດໂຄງການຊອກຄົ້ນ, ສໍາຫຼວດ, ຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ ທີ່ອະນຸມັດຜ່ານມາໃຫ້ລະອຽດກ່ອນ, ໂຄງການໃດທີ່ຈັດໃນປະເພດ C+ ແລະ C (ອ່ອນ ແລະ ອ່ອນຫຼາຍ) ແມ່ນຈະຍົກເລີກ ແລະ ຖອນໂຄງການຄືນ.

- ໂຈະການເຮັດໂຄງການທົດລອງທາງດ້ານແຮ່ທາດ ແລະ ກໍາລັງຫັນບັນດາໂຄງການທົດລອງດັ່ງກ່າວເຂົ້າສູ່ປົກກະຕິຕາມກົດໝາຍກ່ຽວຂ້ອງ; ພ້ອມກັນນັ້ນ ກໍໄດ້ສຸມໃສ່ກວດກາໂຄງການແຮ່ຄໍາ (ຜ່ານມາມີຫຼາຍບໍລິສັດຢູ່ໃນໄລຍະຊອກຄົ້ນ, ສໍາຫຼວດ ແຕ່ມີການລັກລອບຂຸດຄົ້ນ ແລະ ປຸງແຕ່ງ ຫຼື ບາງບໍລິສັດທີ່ກໍາລັງຂຸດຄົ້ນພັດລາຍງານຂໍ້ມູນຜົນການຜະລິດບໍ່ຖືກກັບຄວາມເປັນຈິງ) ເຊິ່ງໃນຕໍ່ໜ້າຈະມີມາດຕະການຄຸ້ມຄອງ ແລະ ກວດກາຢ່າງເຂັ້ມງວດກວ່າເກົ່າ.

**ການແກ້ໄຂບັນຫາຂາດແຄນນໍ້າມັນເຊື້ອໄຟ:**

ສືບຕໍ່ອອກນະໂຍບາຍ

ອ່ານຕໍ່ໜ້າ 8

# ຍົກສູງຂີດຄວາມສາມາດການສ້າງ ແລະ ປັບປຸງ ນິຕິກຳໃຕ້ກົດໝາຍ ທີ່ແຂວງຫຼວງນ້ຳທາ




(ສພຊ) - ວັນທີ 6-7 ມິຖຸນາ 2024 ສະພາປະຊາຊົນແຂວງຫຼວງນ້ຳທາໄດ້ເປີດກອງປະຊຸມຍົກສູງຂີດຄວາມສາມາດກ່ຽວກັບການສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍ ໃຫ້ແກ່ສະມາຊິກສະພາປະຊາຊົນແຂວງ, ພະແນກການທີ່ກ່ຽວຂ້ອງຂອງແຂວງ ແລະ ພະນັກງານ-ລັດຖະກອນສະພາປະຊາຊົນແຂວງຫຼວງນ້ຳທາ ໂດຍການເປັນປະທານຮ່ວມຂອງທ່ານ ກົງເພັດ ແກ້ວບົວພາ ກຳມະການພັກແຂວງ, ຮອງປະທານສະພາປະຊາຊົນແຂວງ ແລະ ທ່ານ ບຸນຊີງ ວ່າ ໄຊຍີ ເລຂາພັກເມືອງ, ເຈົ້າເມືອງເມືອງວຽງພູຄາ; ເຂົ້າຮ່ວມມີປະທານ-ຮອງປະທານຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ, ບັນດາທ່ານສະມາຊິກສະພາປະຊາຊົນແຂວງ, ພະແນກການທີ່ກ່ຽວຂ້ອງ ແລະ ພະນັກງານວິຊາການທີ່ກ່ຽວຂ້ອງເຂົ້າຮ່ວມ 40 ກວ່າທ່ານ.

ໃນກອງປະຊຸມ, ທ່ານ ກົງເພັດ ແກ້ວບົວພາ ໄດ້ເຜີຍແຜ່ຄຳແນະນຳຂອງຄະນະປະຈຳສະພາແຫ່ງຊາດ ກ່ຽວກັບຄູ່ມືການສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍ, ພາລະບົດບາດ, ສິດ ແລະ ໜ້າທີ່ຂອງສະພາປະຊາຊົນແຂວງ ໃນການຮັບຮອງເອົາດ້ານນິຕິກຳຂອງແຂວງ; ຈາກນັ້ນ, ທ່ານ ຈັນທະສຸລິນ ໝັ້ນປະດິດ ປະທານຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ ໄດ້ສະເໜີບາງບົດຮຽນກ່ຽວກັບຂັ້ນຕອນການສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍ, ຜ່ານຂໍ້ຕົກລົງຂອງຄະນະປະຈຳສະພາປະຊາຊົນແຂວງວ່າດ້ວຍການກວດກາເນື້ອໃນຮອບດ້ານຕໍ່ຮ່າງຂໍ້ຕົກລົງຂອງທ່ານເຈົ້າແຂວງ, ຜ່ານໂຄງຮ່າງຂໍ້ຕົກລົງຂອງເຈົ້າແຂວງ.

ໃນໂອກາດນີ້, ຍັງໄດ້ຈັດເປັນກຸ່ມສ້າງຮ່າງຂໍ້ຕົກລົງຂອງເຈົ້າແຂວງຕາມແບບຟອມ ພ້ອມທັງຕາງໜ້າແຕ່ລະກຸ່ມຂຶ້ນຜ່ານຮ່າງຂໍ້ຕົກລົງຂອງເຈົ້າແຂວງ ແລະ ພ້ອມກັນປະກອບຄຳເຫັນ ເພື່ອແລກປ່ຽນບົດຮຽນເຊິ່ງກັນແລະກັນ.

ກອງປະຊຸມຄັ້ງນີ້ ແມ່ນໄດ້ຮັບການສະໜັບສະໜູນຈາກໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ (STEPs).

## ວຽກງານ...

(ຕໍ່ຈາກໜ້າ 1)

ລາຍການກົດໝາຍເພື່ອປະຊາຊົນ ແລະ ລາຍການເພື່ອສັງຄົມຍຸຕິທຳ; ນອກຈາກນັ້ນ, ໄດ້ຈັດຕັ້ງການລົງໂຄສະນາເຜີຍແຜ່ກົດໝາຍ, ນິຕິກຳໃຕ້ກົດໝາຍ ຢູ່ພາຍໃນສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ກະຊວງ-ອົງການຂັ້ນສູນກາງ ແລະ ທ້ອງຖິ່ນ 7 ຄັ້ງ.

5) ຄະນະປະຈຳສະພາແຫ່ງຊາດ ໄດ້ອອກຄຳແນະນຳສະບັບເລກທີ01/ຄປຈ, ລົງວັນທີ03/01/2024ວ່າດ້ວຍການສະຫຼຸບຕີລາຄາການໂຄສະນາເຜີຍແຜ່ກົດໝາຍ; ຄຳແນະນຳສະບັບເລກທີ 03/ຄປຈ, ລົງວັນທີ 05/01/2024 ວ່າດ້ວຍການສ້າງແຜນການສ້າງ ແລະ ປັບປຸງກົດໝາຍ ໄລຍະປີ2026-2030.

6) ສຳເລັດການໃຫ້ສັດຕະຍາບັນແກ່ຂໍ້ຕົກລົງຮັບຮູ້ເຊິ່ງກັນແລະກັນ ດ້ານມາດຕະຖານຜະລິດຕະພັນຍານພາຫະນະອາຊຽນ.

2. ດ້ານການຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ

1) ເອົາໃຈໃສ່ກະກຽມບັນດາເນື້ອໃນທີ່ຈະນຳເຂົ້າພິຈາລະນາ ແລະ ຮັບຮອງຢູ່ກອງປະຊຸມສະໄໝສາມັນເທື່ອທີ 7 ມີທັງໝົດ 8 ວຽກງານໃຫຍ່ ເຊິ່ງຄາດຄະເນກອງປະຊຸມຄັ້ງນີ້ ຈະໄດ້ອອກເປັນມະຕິຮັບຮອງເອົາວຽກງານຕ່າງໆ 19 ສະບັບ.

2) ຄະນະປະຈຳສະພາແຫ່ງຊາດ ດຳເນີນກອງປະຊຸມປະຈຳເດືອນຂອງຕົນ 7 ຄັ້ງ ເຊິ່ງໄດ້ພິຈາລະນາ ແລະ ຕົກລົງເນື້ອໃນຕ່າງໆ ທັງໝົດ 64 ເນື້ອໃນ ແລະ ສາມາດຕົກລົງອອກເປັນມະຕິຄະນະປະຈຳສະພາແຫ່ງຊາດ 83 ສະບັບ.

3) ຄະນະປະຈຳສະພາແຫ່ງຊາດ ໄດ້ພິຈາລະນາຮັບຮອງເອົາການສັບຊ້ອນ, ຍົກຍ້າຍ ແລະ ແຕ່ງຕັ້ງບຸກຄະລາກອນຂອງລັດຖະບານ ຕາມການສະເໜີຂອງນາຍົກລັດຖະມົນຕີ ແລະບຸກຄະລາກອນຂອງສະພາແຫ່ງຊາດ ທັງໝົດ 20 ທ່ານ, ຍິງ 3 ທ່ານ ໃນນີ້, ຮັບຮອງເອົາການສະເໜີແຕ່ງຕັ້ງ ແລະ ຍົກຍ້າຍບຸກຄະລາກອນຂອງລັດຖະບານ 8 ທ່ານ ແລະ ຮັບຮອງເອົາການສະເໜີຍົກຍ້າຍ, ແຕ່ງຕັ້ງບຸກຄະລາກອນຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ 12 ທ່ານ, ຍິງ 3 ທ່ານ.

3. ດ້ານການຕິດຕາມກວດກາ

1) ຄະນະປະຈຳ ແລະ ບັນດາກຳມາທິການຂອງສະພາແຫ່ງຊາດ ໄດ້ລົງເຄື່ອນໄຫວຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນ ແລະ ກົດໝາຍ, ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ແລະ ດຳລັດ 280/ລບ ວ່າດ້ວຍຊັບສິນທີ່ຖືກຍຶດ, ອາຍັດ ແລະ ຮິບຂອງກາງຄະດີເປັນຂອງລັດ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ແຜນເງິນຕາຕິດພັນກັບວາລະແຫ່ງຊາດ; ການຈັດຕັ້ງປະຕິບັດໂຄງການທົດລອງຂຸດຄົ້ນແຮ່ທາດ ແລະ ຊຸກຍູ້ສົ່ງເສີມການຜະລິດຊົມໃຊ້ພາຍໃນ ເພື່ອຫຼຸດຜ່ອນການນຳເຂົ້າ, ບັນດາໂຄງການຈຸດສຸມວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ໄດ້ 19 ຄັ້ງ.

2) ໄດ້ຮັບຄຳສະເໜີຂອງປະຊາຊົນຜ່ານໂທລະສັບສາຍດ່ວນ ໃນໄລຍະດຳເນີນກອງປະຊຸມສະໄໝສາມັນເທື່ອ 6 ຈຳນວນ 595 ສາຍ, ສັງລວມໄດ້ 462 ເລື່ອງ ແລະ ສົ່ງໃຫ້ກະຊວງ, ອົງການ ແລະ ພາກສ່ວນກ່ຽວຂ້ອງ 30 ພາກສ່ວນ.

3) ໄດ້ຮັບຄຳສະເໜີ, ຄຳຮ້ອງຂໍຄວາມເປັນທຳຂອງພົນລະເມືອງ ລວມທັງໝົດ 880 ເລື່ອງ, ສາມາດພິຈາລະນາ ແລະ ສົ່ງໃຫ້ພາກສ່ວນຕ່າງໆ 272 ເລື່ອງ, ຍັງຄ້າງ 608 ເລື່ອງ; ຕ້ອນຮັບ ແລະ ໃຫ້ຄຳປຶກສາແກ່ປະຊາຊົນ 51 ຄັ້ງ.

4. ການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ

1) ໄດ້ຊີ້ນຳການສ້າງຄວາມເຂັ້ມແຂງໃຫ້ແກ່ສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນຂັ້ນແຂວງ, ພະນັກງານ-ລັດຖະກອນ ທັງສູນກາງ ແລະ ທ້ອງຖິ່ນ ດ້ວຍການຈັດຕັ້ງເຝິກອົບຮົມ, ສຳມະນາໃນຫົວຂໍ້ຕ່າງໆ 49 ຄັ້ງ.

2) ເອົາໃຈໃສ່ຊີ້ນຳວຽກງານປັບປຸງບຸກຄະລາກອນພາຍໃນສະພາແຫ່ງຊາດ ດ້ວຍການແຕ່ງຕັ້ງ, ຍົກຍ້າຍ, ບັນຈຸ-ສັບຊ້ອນ ແລະ ຮັບບຸກຄະລາກອນກົງຈັກເສນາທິການຂອງສະພາແຫ່ງຊາດ ໃນຕຳແໜ່ງບໍລິຫານປະເພດ 2, 3, 4 ແລະ 5 ເພື່ອຮັບປະກັນການປະຕິບັດໜ້າທີ່ວຽກງານໃຫ້ມີຄຸນນະພາບ.

3) ເອົາໃຈໃສ່ຊີ້ນຳວຽກງານຄົ້ນຄວ້າ, ສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍຂອງສະພາແຫ່ງຊາດ 14 ສະບັບ ເພື່ອເປັນບ່ອນອີງ ແລະ ຮັບປະກັນການເຄື່ອນໄຫວວຽກງານຕ່າງໆຂອງສະພາແຫ່ງຊາດ; ນອກນັ້ນ, ໄດ້ຊີ້ນຳການຄົ້ນຄວ້າແລະກະກຽມຂຽນປຶ້ມປະຫວັດ ຄົບຮອບ 50 ປີ ແຫ່ງການກຳເນີດ ແລະ ເຕີບໃຫຍ່ຂະຫຍາຍຕົວຂອງສະພາແຫ່ງຊາດ ແຫ່ງ ສປປ ລາວ.

5. ການເຄື່ອນໄຫວວຽກງານຕ່າງປະເທດ

1) ຄະນະຜູ້ແທນຂັ້ນສູງສະພາແຫ່ງຊາດ ໄດ້ເຄື່ອນໄຫວຢ້ຽມຢາມຕ່າງປະເທດ 9 ຄະນະ; ເຂົ້າຮ່ວມກອງປະຊຸມພາກພື້ນ ແລະ ສາກົນ 15 ຄະນະ; ຕ້ອນຮັບຄະນະຜູ້ແທນປະເທດຕ່າງໆ 5 ຄະນະ, ຕ້ອນຮັບແຂກຕ່າງປະເທດ 16 ຄະນະ; ຄົ້ນຄວ້າໃຫ້ຄະນະຜູ້ແທນສະພາແຫ່ງຊາດເຂົ້າຮ່ວມງານຕ່າງໆ 6 ຄັ້ງ.

2) ສະພາແຫ່ງຊາດ ໄດ້ຮັບກຽດເປັນເຈົ້າພາບຈັດກອງປະຊຸມລະດັບຕ່າງໆຢູ່ສປປລາວ 6 ຄັ້ງ; ອັນພົ້ນເດັ່ນ, ໃນທ້າຍປີ 2024 ພວມຊຸ້ນຂ້ຽວສຸມໃສ່ການກະກຽມຄວາມພ້ອມຮອບດ້ານໃຫ້ແກ່ການເປັນເຈົ້າພາບຈັດກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງອາຊຽນ (AIPA) ຄັ້ງທີ 45 ແລະ ການກະກຽມກອງປະຊຸມປິ່ນອ້ອມຕ່າງໆໃນຂອບຂອງໄອປາ.

ສຳລັບແຜນການເຄື່ອນໄຫວວຽກງານແຕ່ນີ້ຮອດກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີ IX, ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ໃຫ້ຮູ້ວ່າ:

1. ດ້ານນິຕິບັນຍັດ

1) ຄະນະກຳມະການລະດັບຊາດ ກະກຽມປະເມີນຜົນ ແລະ ປັບປຸງລັດຖະທຳມະນູນສະບັບປີ 2015 ໃຫ້ມີຄວາມຮັບປະກັນທັນກຳນົດເວລາ;

2) ປັບປຸງ ແລະ ຮຽບຮຽງເນື້ອໃນກົດໝາຍ 13 ສະບັບ ທີ່ໄດ້ຖືກຮັບຮອງເອົາຢູ່ກອງປະຊຸມສະໄໝສາມັນເທື່ອທີ 7;

3) ກະກຽມເນື້ອໃນກົດໝາຍ 8 ສະບັບ ທີ່ຈະສະເໜີຕໍ່ກອງປະຊຸມສະໄໝສາມັນເທື່ອທີ 8 ໃນນີ້ມີຮ່າງກົດໝາຍສ້າງໃໝ່ 3 ສະບັບ ແລະ ກົດໝາຍປັບປຸງ 5 ສະບັບ;

4) ຕິດຕາມຊຸກຍູ້ການຈັດຕັ້ງປະຕິບັດຄຳແນະນຳກ່ຽວກັບການສະຫຼຸບການໂຄສະນາເຜີຍແຜ່ກົດໝາຍ ສະບັບເລກທີ 01/ຄປຈ, ລົງວັນທີ 03/01/2024 ແລະຄຳແນະນຳວ່າດ້ວຍການສ້າງແຜນການສ້າງ ແລະ ປັບປຸງກົດໝາຍ ໄລຍະປີ2026-2030 ສະບັບເລກທີ03/ຄປຈ, ລົງວັນທີ 05/01/2024;

5) ຈັດຕັ້ງປະເມີນຜົນການຈັດຕັ້ງປະຕິບັດກົດໝາຍໃນຂົງເຂດວັດທະນະທຳ-ສັງຄົມ 4 ສະບັບຄື: ກົດໝາຍວ່າດ້ວຍການສຶກສາ, ກົດໝາຍວ່າດ້ວຍການຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ, ກົດໝາຍວ່າດ້ວຍແຮງງານ ແລະ ກົດໝາຍວ່າດ້ວຍປ້າຍ;

6) ຈັດຕັ້ງການເຜີຍແຜ່ໂຄສະນາກົດໝາຍ ແລະ ການອອກເປັນນິຕິກຳໃຕ້ກົດໝາຍ;

7) ເອົາໃຈໃສ່ຄົ້ນຄວ້າຕີຄວາມໝາຍ ຫຼື ອະທິບາຍລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳທີ່ກ່ຽວຂ້ອງ ແລະ ການຄົ້ນຄວ້າໃຫ້ສັດຕະຍາບັນແກ່ສົນທິສັນຍາ-ສັນຍາສາກົນ ທີ່ສປປ ລາວ ເປັນພາຄີ.

2. ດ້ານການຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ

1) ບົດລາຍງານຂອງລັດຖະບານກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ, ແຜນເງິນຕາ ປະຈຳປີ 2024 ແລະແຜນການປະຈຳປີ 2025;

2) ບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີ 2024 ແລະ ແຜນການປະຈຳປີ 2025 ຂອງສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ, ອົງການກວດສອບແຫ່ງລັດ ແລະອົງການກວດກາແຫ່ງລັດ;

3) ບົດລາຍງານຜົນການກວດສອບບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2023 ຂອງອົງການກວດສອບແຫ່ງລັດ, ບົດລາຍງານຜົນການກວດກາຕາມຜົນການກວດສອບປີ 2022 ຂອງອົງການກວດກາແຫ່ງລັດ;

4) ບົດລາຍງານການຈັດຕັ້ງປະຕິບັດວຽກງານ 3 ສ້າງ;

5) ບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ ປະຈຳປີ 2024 ແລະແຜນການເຄື່ອນໄຫວວຽກງານປະຈຳປີ 2025;

6) ບົດລາຍງານການປັບປຸງລັດຖະທຳມະນູນ ສະບັບປີ 2015 ແລະ ພິຈາລະນາ, ຮັບຮອງເອົາບັນດາຮ່າງກົດໝາຍ 8 ສະບັບ.

3. ດ້ານການຕິດຕາມກວດກາ

1) ຕິດຕາມກວດກາການຈັດຕັ້ງປະຕິບັດມະຕິກອງປະຊຸມສະພາແຫ່ງຊາດວ່າດ້ວຍການຮັບຮອງເອົາແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ ແລະ ແຜນເງິນຕາປະຈຳປີ 2024;

2) ຕິດຕາມກວດກາການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານຂອງສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ, ອົງການສືບສວນ-ສອບສວນ ແລະ ອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ;

3) ຕິດຕາມກວດກາດ້ວຍການດຳເນີນກອງປະຊຸມຮ່ວມລະຫວ່າງຄະນະປະຈຳສະພາແຫ່ງຊາດ ກັບຄະນະລັດຖະບານ ແລະ ພາກສ່ວນຕ່າງໆທີ່ກ່ຽວຂ້ອງ;

4) ຮັບ ແລະ ພິຈາລະນາຄຳສະເໜີ, ຄຳຮ້ອງຂໍຄວາມເປັນທຳຂອງປະຊາຊົນ.

4. ການເຄື່ອນໄຫວວຽກງານປິ່ນອ້ອມ

1) ເອົາໃຈໃສ່ຍົກສູງຂີດຄວາມສາມາດໃຫ້ແກ່ສະມາຊິກສະພາແຫ່ງຊາດ ແລະສະມາຊິກສະພາປະຊາຊົນຂັ້ນແຂວງ ແລະ ເສນາທິການ ໃຫ້ບັນລຸຕາມແຜນການທີ່ວາງໄວ້;

2) ກະກຽມວຽກງານການເລືອກຕັ້ງສະມາຊິກສະພາແຫ່ງຊາດຊຸດທີ X ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງຊຸດທີ III;

3) ກະກຽມເປັນເຈົ້າພາບຈັດກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ (AIPA) ຄັ້ງທີ 45 ແລະກອງປະຊຸມປິ່ນອ້ອມຕ່າງໆໃນຂອບ AIPA ຢູ່ ສປປ ລາວ.

# ກອງປະຊຸມຮ່ວມລະຫວ່າງສະພາປະຊາຊົນ ແລະ ອົງການປົກຄອງແຂວງຊຽງຂວາງ



(ສພຊ) - ໃນວັນທີ 7 ມິຖຸນາ 2024 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງຊຽງຂວາງ ໄດ້ເປີດກອງປະຊຸມຮ່ວມລະຫວ່າງສະພາປະຊາຊົນແຂວງ ແລະ ອົງການປົກຄອງແຂວງຊຽງຂວາງ ເພື່ອປຶກສາຫາລື, ເອກະພາບກັນກ່ຽວກັບຫົວຂໍ້ເນື້ອໃນ ທີ່ຈະນຳເຂົ້າໃນກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາປະຊາຊົນແຂວງ ຊຸດທີ II ໂດຍການເປັນປະທານຮ່ວມຂອງທ່ານ ວຽງໄຊ ສີວິໄລ ກຳມະການພັກແຂວງ, ຮອງປະທານສະພາປະຊາຊົນແຂວງແລະທ່ານສີວິໄລ ແສງຈະເລີນ ກຳມະການພັກແຂວງ, ຮອງເຈົ້າແຂວງຊຽງຂວາງ, ມີບັນດາທ່ານຄະນະປະຈຳສະພາປະຊາຊົນແຂວງ, ປະທານ-ຮອງປະທານຄະນະກຳມະການສະພາປະຊາຊົນແຂວງ, ຫົວໜ້າ-ຮອງຫົວໜ້າບັນດາພະແນກການ, ກົມກອງອ້ອມຂ້າງແຂວງ ແລະ ຫົວໜ້າ-ຮອງຫົວໜ້າຂະແໜງຈາກຫ້ອງວ່າການແຂວງ ແລະ ສະພາປະຊາຊົນແຂວງ ເຂົ້າຮ່ວມ.

ທັງນີ້, ກໍເພື່ອເປັນການຄົ້ນຄວ້າບັນດາຫົວຂໍ້ເນື້ອໃນທີ່ຈະນຳເຂົ້າໃນກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາປະຊາຊົນແຂວງ ຊຸດທີ II ບັນດາຜູ້ແທນກອງປະຊຸມໄດ້ເຫັນດີເປັນເອກະພາບກັນກຳນົດຫົວຂໍ້ເນື້ອໃນດັ່ງນີ້: ບົດລາຍງານຂອງທ່ານເຈົ້າແຂວງກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ປະຈຳ 6 ເດືອນຕົ້ນປີ 2024 ແລະ ທິດທາງແຜນການ 6 ເດືອນທ້າຍປີ 2024, ຕິດພັນກັບ 2 ວາລະແຫ່ງຊາດ, ບົດລາຍງານຂອງພະແນກແຜນການ ແລະ ການລົງທຶນ ກ່ຽວກັບການຈັດຕັ້ງປະຕິບັດແຜນການລົງທຶນແຫ່ງລັດຂອງແຂວງ ໄລຍະ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ ແລະ ການຄຸ້ມຄອງ ການລົງທຶນພາກເອກະຊົນພາຍໃນແລະຕ່າງປະເທດ ໄລຍະ 6 ເດືອນຕົ້ນປີ2024, ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານຂອງແຂວງ ໄລຍະ 6 ເດືອນຕົ້ນປີ 2024 ແລະ ທິດທາງແຜນການ 6 ເດືອນທ້າຍປີ 2024, ບົດລາຍງານຂອງພະແນກຍຸຕິທຳກ່ຽວກັບ ຂອດການປະສານງານກັບພາກສ່ວນຕ່າງໆທີ່ກ່ຽວຂ້ອງ ໃນການໂຄສະນາເຜີຍແຜ່ກົດໝາຍ ເພື່ອເຮັດໃຫ້ການປະຕິບັດຄຳຕັດສິນຂອງສານ ມີຄວາມສະດວກວ່ອງໄວ ແລະ ທັນຕາມກຳນົດເວລາ, ບົດລາຍງານຂອງ ປກສ ແຂວງ ກ່ຽວກັບການຄຸ້ມຄອງສຳມະໂນຄົວ, ບັດປະຈຳຕົວ ແລະ ການອອກປ້າຍເຮືອນພາຍໃນແຂວງ, ບົດລາຍງານ ຂອງພະແນກສຶກສາທິການ ແລະ ກິລາແຂວງ ກ່ຽວກັບ ສະພາບການຄຸ້ມຄອງປົກປັກຮັກສາ ແລະ ນຳໃຊ້ບັນດາພື້ນຖານໂຄງລ່າງ ກິລາປະເພດຕ່າງໆ ຫຼັງຈາກສຳເລັດງານມະຫາກຳກິລາແຫ່ງຊາດຄັ້ງທີ 11 ທີ່ແຂວງຊຽງຂວາງເປັນເຈົ້າພາບ, ບົດລາຍງານຂອງພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ ກ່ຽວກັບ ການຈັດຕັ້ງປະຕິບັດຂໍ້ຕົກລົງ ຂອງທ່ານເຈົ້າແຂວງ ສະບັບເລກທີ 310/ຊຂ, ລົງວັນທີ 13 ພຶດສະພາ 2022 ວ່າດ້ວຍການປ້ອງກັນ, ຄຸ້ມຄອງ ແລະ ແກ້ໄຂໄພພິບັດ, ບົດລາຍງານຂອງພະແນກໂຍທາທິການ ແລະ ຂົນສົ່ງແຂວງ ກ່ຽວກັບ ສະພາບການຄຸ້ມຄອງ, ການປົກປັກຮັກສາ ແລະ ການຕິດຕາມຊຸກຍູ້, ສ້ອມແປງເສັ້ນທາງຫຼວງແຫ່ງຊາດ, ທາງຫຼວງທ້ອງຖິ່ນ ແລະ ເສັ້ນທາງພາຍໃນແຂວງ, ບົດລາຍງານຂອງສ່ວຍສາອາກອນປະຈຳແຂວງ ກ່ຽວກັບ ການເກັບລາຍຮັບອາກອນຈາກໂຄງການສຳຫຼວດ ແລະ ຂຸດຄົ້ນແຮ່ຢູ່ແຂວງຊຽງຂວາງ, ບົດລາຍງານ ຂອງພະແນກກະສິກຳແລະປ່າໄມ້ແຂວງ ກ່ຽວກັບ ແຜນການຈັດຕັ້ງປະຕິບັດຄຳສັ່ງເລກທີ 11/ນຍ ວ່າດ້ວຍການເພີ່ມທະວີຄວາມເຂັ້ມງວດ ໃນການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ປ່າໄມ້, ທີ່ດິນປ່າໄມ້, ຕ້ານ ແລະ ສະກັດກັ້ນ ການບຸກລຸກທຳລາຍປ່າໄມ້, ທີ່ດິນປ່າໄມ້ ແລະ ໄຟໄໝ້ລາມປ່າ; ການຕິດຕາມກວດກາ, ການຄຸ້ມຄອງການນຳໃຊ້ສານເຄມີເຂົ້າໃນການຜະລິດກະສິກຳ, ບົດລາຍງານຂອງພະແນກຊັບພະຍາກອນທຳມະຊາດ ແລະສິ່ງແວດລ້ອມແຂວງ ກ່ຽວກັບການແກ້ໄຂຜົນກະທົບຈາກການນຳໃຊ້ສານເຄມີເຂົ້າໃນໂຄງການລົງທຶນດ້ານແຮ່ທາດ, ບົດລາຍງານຂອງພະແນກອຸດສາຫະກຳແລະການຄ້າແຂວງກ່ຽວກັບການຕິດຕາມກວດກາ, ການຄຸ້ມຄອງ, ການນຳເຂົ້າສານເຄມີ ແລະ ບົດລາຍງານ ການເຄື່ອນໄຫວວຽກງານຂອງສະພາປະຊາຊົນແຂວງ ໄລຍະ 6 ເດືອນຕົ້ນປີ 2024 ແລະ ທິດທາງແຜນການ 6 ເດືອນທ້າຍປີ 2024 ເຊິ່ງກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາປະຊາຊົນແຂວງ ຊຸດທີ II ຄາດຄະເນຈະໄຂຂຶ້ນໃນທ້າຍເດືອນກໍລະກົດ 2024.

**(ນາງ ສຸກສະຫວັນ ອິນທະແສງ)**

## ຄະນະປະຈຳ...

(ຕໍ່ຈາກໜ້າ 1)

ແຫ່ງລັດ ແລະ ແຜນເງິນຕາ.

2. ສຸມໃສ່ປະຕິບັດຄາດໝາຍຂອງແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ແຜນເງິນຕາ ແລະ ວາລະແຫ່ງຊາດກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ແກ້ໄຂບັນຫາຢາເສບຕິດ ຕາມທີ່ໄດ້ກຳນົດໃນມະຕິກອງປະຊຸມສະພາແຫ່ງຊາດສຳລັບປີ2024 ໃຫ້ບັນລຸຕາມແຜນການ ດ້ວຍການຈັດຕັ້ງປະຕິບັດບັນດາມາດຕະການທີ່ໄດ້ກຳນົດຢ່າງເຂັ້ມງວດ, ໃນນັ້ນ ໃຫ້ສຸມໃສ່ແກ້ໄຂບັນຫາທີ່ເຄັ່ງຮ້ອນດ້ານເສດຖະກິດ-ສັງຄົມໃນປັດຈຸບັນ ເປັນຕົ້ນ:

1) ແກ້ໄຂບັນຫາເງິນເຟີ້ ແລະ ລາຄາສິນຄ້າທີ່ຈຳເປັນເປັນຕົ້ນອາຫານ, ນ້ຳມັນເຊື້ອໄຟ, ເຄື່ອງອຸປະໂພກ-ບໍລິໂພກທີ່ກະທົບຕໍ່ຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ, ພະນັກງານ-ລັດຖະກອນ, ທະຫານ-ຕຳຫຼວດ ໂດຍສືບຕໍ່ຈັດຕັ້ງປະຕິບັດມາດຕະການໃຫ້ເປັນລະບົບຄົບຊຸດ, ເຂັ້ມງວດ ຕິດພັນກັບທຸກຂະແໜງການຄື: (1) ມາດຕະການທາງດ້ານເງິນຕາ ລວມທັງມາດຕະການຕໍ່ອັດຕາແລກປ່ຽນ, (2) ມາດຕະການດ້ານການເງິນ-ງົບປະມານ, (3) ມາດຕະການດ້ານການຜະລິດ, (4) ມາດຕະການດ້ານການຄ້າ, (5) ມາດຕະການດ້ານຈິດຕະສາດ-ສັງຄົມ.

2) ແກ້ໄຂບັນຫາເຄັ່ງຮ້ອນທາງດ້ານວັດທະນະທຳ-ສັງຄົມ ເປັນຕົ້ນ (1) ປັບປຸງຄຸນນະພາບການສຶກສາ, ການສະໜອງຄູສອນ, ການປະລະການຮຽນ, ການອຸດໜູນຄູ-ແພດອາສາສະໝັກ; (2) ການສ້າງວຽກເຮັດງານທຳ, ການສະໜອງ ແລະ ຄວາມຕ້ອງການແຮງງານໃຫ້ມີຄວາມສົມດຸນ ແລະ ຕອບສະໜອງຄວາມຕ້ອງການຂອງການພັດທະນາ ແລະ ການພັດທະນາຍົກລະດັບສີມືແຮງງານ; (4) ຄົ້ນຄວ້າເພີ່ມເງິນເດືອນ, ເງິນອຸດໜູນໃຫ້ພະນັກງານ-ລັດຖະກອນ, ທະຫານ-ຕຳຫຼວດ ໃຫ້ສອດຄ່ອງກັບສະພາບເງິນເຟີ້ ແລະ ອັດຕາແລກປ່ຽນໃນປັດຈຸບັນ; (5) ຄົ້ນຄວ້າເພີ່ມຄ່າແຮງງານຂັ້ນຕ່ຳໃຫ້ກຳມະກອນ ແລະ ຜູ້ອອກແຮງງານ, ແກ້ໄຂບັນຫາຄວາມທຸກຍາກ ແລະ ຄ່າຄອງຊີບຂອງປະຊາຊົນທີ່ຖີບໂຕຂຶ້ນສູງ; (6) ການປັບປຸງກອງທຶນປະກັນສຸຂະພາບ ແລະ ການຍົກສູງຄຸນນະພາບການບໍລິການຮັກສາສຸຂະພາບ.

3) ແກ້ໄຂບັນຫາເຄັ່ງຮ້ອນທາງດ້ານສິ່ງແວດລ້ອມ ເປັນຕົ້ນຜົນກະທົບຈາກການຂຸດຄົ້ນແຮ່ທາດ ໃຫ້ມີມາດຕະການແກ້ໄຂຢ່າງເຂັ້ມງວດຕໍ່ບັນດາໂຄງການທີ່ໄດ້ຮັບການປະເມີນຢູ່ໃນປະເພດ C+ ແລະ C ໃຫ້ມີການໂຈະ ເພື່ອປັບປຸງແກ້ໄຂຕາມຂັ້ນຕອນຂອງກົດໝາຍ ແລະ ລະບຽບການທີ່ກຳນົດໄວ້ຢ່າງເຂັ້ມງວດ ແລະ ພິຈາລະນາຢຸດຕິການນຳເຂົ້າຂີ້ເຫຍື້ອ ຄຽງຄູ່ກັບການຄຸ້ມຄອງຂີ້ເຫຍື້ອຢູ່ພາຍໃນ ໃຫ້ມີການເອົາມານຳໃຊ້ຄືນໃໝ່ (recycle) ແລະ ພິຈາລະນາຄວບຄຸມ ແລະ ຫຼຸດຜ່ອນການສົ່ງອອກວັດຖຸດິບບາງລາຍການ ທີ່ຍັງມີຄວາມຕ້ອງການຊົມໃຊ້ພາຍໃນ ເປັນຕົ້ນຂີ້ເບຍ ແລະ ອື່ນໆ ເພື່ອຮັບປະກັນການຊົມໃຊ້ພາຍໃນໃຫ້ພຽງພໍ ໂດຍສະເພາະການຜະລິດຫົວອາຫານສັດ.

4) ແກ້ໄຂຜົນການກວດສອບ ແລະ ກວດກາ ຕາມທີ່ໄດ້ກຳນົດໃນມະຕິກອງປະຊຸມສະພາແຫ່ງຊາດ.

3. ສຸມໃສ່ກະກຽມແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ ປີ 2025 ຕິດພັນກັບການສ້າງບັນຊີໂຄງການລົງທຶນຂອງລັດ ໂດຍມີການປະສານສົມທົບແຕ່ຫົວທີກັບສະພາແຫ່ງຊາດ ກ່ອນນຳສະເໜີຕໍ່ກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີ IX.

4. ຈັດຕັ້ງປະຕິບັດນະໂຍບາຍເພື່ອສ້າງສະພາບແວດລ້ອມການລົງທຶນ, ການດຳເນີນທຸລະກິດຢ່າງສະດວກ, ວ່ອງໄວ, ໂປ່ງໃສ ແລະ ຍຸຕິທຳ; ສົ່ງເສີມການແຂ່ງຂັນ, ການລົງທຶນ FDI ດ້ວຍມາດຕະການບຸລິມະສິດທີ່ແຂງແຮງ; ສືບຕໍ່ດຶງດູດເອົາການລົງທຶນຢ່າງມີຈຸດສຸມ ເພື່ອສ້າງໃຫ້ເກີດມີຖານການຜະລິດທີ່ໝັ້ນຄົງ, ມີການປຸງແຕ່ງ ໂດຍສະເພາະແມ່ນໂຄງການຜະລິດເພື່ອສົ່ງອອກໃນຂະແໜງການທີ່ ສປປ ລາວ ມີທ່າແຮງ.

5. ຈັດສັນກອງທຶນທາງໃຫ້ສຳເລັດ ແລະ ສູ້ຊົນບູລະນະສ້ອມແປງເສັ້ນທາງທີ່ເປ່ເພ ແລະ ໄດ້ຮັບຜົນກະທົບຈາກໄພພິບັດທຳມະຊາດ ໃຫ້ສຳເລັດ ໂດຍມີການຈັດລຽງບຸລິມະສິດໃນການດຸ່ນດ່ຽງ ແລະ ໃຫ້ແທດເໝາະກັບສະພາບການຕົວຈິງຂອງແຕ່ລະທ້ອງຖິ່ນ ຮັບປະກັນການຄົມມະນາຄົມ-ຂົນສົ່ງ ກັບຄືນສູ່ສະພາບປົກກະຕິໂດຍໄວ, ເພີ່ມທະວີການຄຸ້ມຄອງ ແລະ ກວດກາລົດບັນທຸກສິນຄ້ານ້ຳໜັກເກີນ ແລະ ຄົ້ນຄວ້າປັບປຸງນິຕິກຳໃຕ້ກົດໝາຍກ່ຽວກັບມາດຕະການຕໍ່ຜູ້ລະເມີດການຂົນສົ່ງບັນທຸກນ້ຳໜັກເກີນ, ຮີບຮ້ອນກໍ່ສ້າງຕະຝັ່ງເຈື່ອນທີ່ເປັນຈຸດຫຼໍ່ແຫຼມ ແລະ ຈຸດທີ່ມີການເຊາະເຈື່ອນຢ່າງຮ້າຍແຮງ ໃຫ້ຈັດເປັນໂຄງການບຸລິມະສິດເຂົ້າໃນແຜນການລົງທຶນຂອງລັດເພື່ອປົກປັກຮັກສາເຂດນ້ຳແດນດິນຂອງສປປລາວໄວ້.

6. ຊຸກຍູ້ສົ່ງເສີມການຜະລິດໃຫ້ແຂງແຮງຂຶ້ນກວ່າເກົ່າ ພ້ອມທັງຄົ້ນຄວ້າປະເມີນຄືນບັນດາລາຍການສິນຄ້າທີ່ສາມາດຜະລິດໄດ້ ເປັນຕົ້ນ ຝຸ່ນ, ອາຫານສັດ, ສະບຽງອາຫານ ທີ່ຮັບປະກັນການສະໜອງ ແລະ ຊົມໃຊ້ຢູ່ພາຍໃນໃຫ້ມີຄວາມພຽງພໍ ພ້ອມທັງມີກົນໄກປະສານສົມທົບລະຫວ່າງຂະແໜງກະສິກຳ ແລະປ່າໄມ້ ກັບຂະແໜງອຸດສາຫະກຳ ແລະ ການຄ້າ ຄົ້ນຄວ້າກຳນົດມາດຕະການຈຳກັດການນຳເຂົ້າສິນຄ້າໃນລາຍການທີ່ສາມາດຜະລິດໄດ້ຢູ່ພາຍໃນທົດແທນການນຳເຂົ້າ ເພື່ອສົ່ງເສີມການຜະລິດພາຍໃນໃຫ້ຫຼາຍຂຶ້ນ.

7. ຄຸ້ມຄອງ, ປົກປັກຮັກສາບັນດາໂຄງການຊົນລະປະທານ ເພື່ອຮັບປະກັນການສະໜອງນ້ຳໃຫ້ແກ່ການຜະລິດຂອງຊາວກະສິກອນແລະມີມາດຕະການຄຸ້ມຄອງຢ່າງເຂັ້ມງວດຕໍ່ທີ່ດິນນາ, ທີ່ດິນກະສິກຳໃນເຂດທີ່ມີຊົນລະປະທານ ບໍ່ໃຫ້ມີການຫັນປ່ຽນໄປເປັນທີ່ດິນປະເພດອື່ນ; ພ້ອມດຽວກັນນັ້ນ, ໃຫ້ຄົ້ນຄວ້າຈັດສັນງົບປະມານເຂົ້າໃນໂຄງການຊົນລະປະທານທີ່ມີເງື່ອນໄຂນ້ຳໄຫຼເຂົ້າເອງ, ໂຄງການທີ່ດຳເນີນໃກ້ຈະສຳເລັດແລ້ວ ແລະ ເປັນໂຄງການທີ່ມີປະສິດ ທິຜົນທາງດ້ານເສດຖະກິດ, ເປັນໂຄງການບຸລິມະສິດຂອງລັດຖະບານ ເພື່ອຮັບປະກັນໃຫ້ການຜະລິດກະສິກຳມີຕົ້ນທຶນຕ່ຳ ສາມາດແກ່ງແຍ້ງແຂ່ງຂັນໄດ້.

8. ຄົ້ນຄວ້າສ້າງເງື່ອນໄຂໃຫ້ແກ່ຊາວກະສິກອນສາມາດເຂົ້າເຖິງນະໂຍບາຍການສະໜອງສິນເຊື່ອໃຫ້ສະດວກຂຶ້ນ ລວມທັງມີນະໂຍບາຍສິນເຊື່ອຕໍ່ກັບຫົວໜ່ວຍທຸລະກິດກະສິກຳ ແລະ ຫົວໜ່ວຍທຸລະກິດທີ່ຜະລິດອຸປະກອນ ແລະ ເຄື່ອງມືຮັບໃຊ້ການຜະລິດກະສິກຳຈຳໜ່າຍພາຍໃນ ຫຼຸດຜ່ອນການນຳເຂົ້າ ແລະ ເປັນສິນຄ້າສົ່ງອອກ.

9. ເກັບລາຍຮັບຈາກຖານລາຍຮັບທີ່ເປັນທ່າແຮງເປັນຕົ້ນ: ການຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ, ອາກອນທີ່ດິນ, ພະລັງງານ, ຄ່າທຳນຽມ ແລະ ອື່ນໆ; ປັບປຸງໂຄງສ້າງດ້ານງົບປະມານແຫ່ງລັດ ແລະ ຄຸ້ມຄອງໜີ້ສິນສາທາລະນະ, ສະກັດກັ້ນບໍ່ໃຫ້ເກີດໜີ້ສິນເກີນການຄວບຄຸມ ແລະ ເອົາໃຈໃສ່ດຸ່ນດ່ຽງໜີ້ສິນ ເພື່ອຮັບປະກັນໃຫ້ພື້ນຖານລະບົບການເງິນແຫ່ງຊາດ ມີຄວາມໝັ້ນຄົງ, ຮັກສາສະຖຽນລະພາບເສດຖະກິດມະຫາພາກ.

10. ຍົກສູງການຖືຄອງເງິນກີບ, ຄຸ້ມຄອງການຖືຄອງ ແລະ ໃຊ້ຈ່າຍເງິນຕາຕ່າງປະເທດໃຫ້ເຄັ່ງຄັດຮັດກຸມເຂົ້າຕື່ມ; ກະຈາຍຄວາມສ່ຽງດ້ານການນຳໃຊ້ເງິນຕາຕ່າງປະເທດ ເພື່ອບໍ່ໃຫ້ສະກຸນເງິນໃດໜຶ່ງຜູກມັດ, ຜູກຂາດ; ຄຸ້ມຄອງການສົ່ງອອກຜ່ານລະບົບທະນາຄານ ໃຫ້ບັນລຸ 85% ຮັບປະກັນດຸນຊຳລະເງິນຕາຕ່າງປະເທດ ແລະ ການເຂົ້າເຖິງການບໍລິການດ້ານການເງິນຕໍ່ປະຊາກອນທັງໝົດ ໃຫ້ບັນລຸ 80%.

11. ສຸມໃສ່ກະກຽມເປັນເຈົ້າພາບຈັດກອງປະຊຸມສຸດຍອດອາຊຽນ ຄັ້ງທີ 44-45 ແລະກອງປະຊຸມໃຫຍ່ໄອປາຄັ້ງທີ45 ໃຫ້ບັນລຸຕາມແຜນການ.

12. ສຸມໃສ່ປັບປຸງລັດຖະທຳມະນູນ, ສ້າງ ແລະ ປັບປຸງກົດໝາຍ ທີ່ຈະສະເໜີຕໍ່ກອງປະຊຸມສະໄໝສາມັນເທື່ອທີ 8 ໃຫ້ຮັບປະກັນຄຸນນະພາບທາງດ້ານເນື້ອໃນ ແລະ ທັນສະເໜີຕໍ່ກອງປະຊຸມພິຈາລະນາ.

# ກອງປະຊຸມໃຫຍ່ຄັ້ງທີ III ຂອງອົງການຈັດຕັ້ງມະຫາຊົນ ສະພາປະຊາຊົນແຂວງຊຽງຂວາງ




(ສພຊ) - ໃນວັນທີ 5 ມິຖຸນາ 2024 ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງຊຽງຂວາງ ໄດ້ເປີດກອງປະຊຸມໃຫຍ່ຄັ້ງທີ III ຂອງ 3 ອົງການຈັດຕັ້ງມະຫາຊົນສະພາປະຊາຊົນແຂວງຊຽງຂວາງ ໂດຍການເປັນປະທານຂອງທ່ານ ແສງເດືອນ ຈັນທະລັງສີ ເລຂາໜ່ວຍພັກສະພາປະຊາຊົນແຂວງ; ເຂົ້າຮ່ວມມີທ່ານ ບຸນໂຮມ ເທດທານີ ຮອງເລຂາຄະນະບໍລິຫານງານພັກແຂວງ, ປະທານສະພາປະຊາຊົນແຂວງຊຽງຂວາງ, ມີທ່ານ ເພັດສະໝອນ ດາວົງສອນ ກຳມະການພັກແຂວງ, ເລຂາຄະນະບໍລິຫານງານຊາວໜຸ່ມແຂວງ, ມີຜູ້ຕາງໜ້າຈາກ 3 ອົງການຈັດຕັ້ງມະຫາຊົນຂັ້ນແຂວງ, ແຂກຖືກເຊີນຈາກພະແນກການແລະສະມາຊິກ 3 ອົງການຈັດຕັ້ງມະຫາຊົນຂອງສະພາປະຊາຊົນແຂວງເຂົ້າຮ່ວມ.

ໃນກອງປະຊຸມໄດ້ຜ່ານຮ່າງບົດລາຍງານການເມືອງຂອງ 3 ອົງການຈັດຕັ້ງມະຫາຊົນ ສະພາປະຊາຊົນແຂວງຊຽງຂວາງ ເຊິ່ງໄດ້ເອົາໃຈໃສ່ສຶກສາອົບຮົມດ້ານເມືອງ-ແນວຄິດ ໃຫ້ສະມາຊິກ 3 ອົງການຈັດຕັ້ງມະຫາຊົນໄດ້ຖືເອົາວຽກງານການເມືອງ-ແນວຄິດເປັນບັນຫາສຳຄັນໂດຍຕິດພັນກັບວຽກງານວິຊາສະເພາະແຕ່ລະດ້ານ ແລະ ໄດ້ຈັດຕັ້ງປະຕິບັດແນວທາງນະໂຍບາຍຂອງພັກ, ລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳຕ່າງໆຢ່າງເຂັ້ມງວດ, ດ້ານວິຊາສະເພາະໄດ້ເປັນເສນາທິການອຳນວຍຄວາມສະດວກດ້ານເນື້ອໃນ, ງົບປະມານ, ພາຫະນະ, ອຸປະກອນ, ສະໜອງຂໍ້ມູນ, ກະກຽມບັນດາເອກະສານຕ່າງໆ ໃຫ້ແກ່ສະພາປະຊາຊົນແຂວງ, ເປັນເສນາທິການໃຫ້ແກ່ສະມາຊິກສະພາແຫ່ງຊາດ ແລະສະມາຊິກສະພາປະຊາຊົນແຂວງ ໃນການປະຕິບັດ 3 ພາລະບົດບາດຂອງສະພາປະຊາຊົນຂັ້ນແຂວງເປັນຕົ້ນ: ດ້ານນິຕິກຳ, ດ້ານການຕົກລົງບັນຫາສຳຄັນພື້ນຖານຂອງແຂວງ ແລະ ດ້ານການຕິດຕາມກວດກາ; ນອກຈາກນັ້ນ, ຍັງໄດ້ນຳພາ-ຊີ້ນຳສະມາຊິກພາຍໃນໜ່ວຍໃນດ້ານຂະບວນການຕ່າງໆ, ດ້ານການສົ່ງເສີມວິຊາຊີບ ແລະ ອື່ນໆ. ສຳລັບທິດທາງແຜນການໃນຕໍ່ໜ້າ ຈະສືບຕໍ່ສຶກສາອົບຮົມດ້ານການເມືອງ-ແນວຄິດໃຫ້ສະມາຊິກ 3 ອົງການຈັດຕັ້ງມະຫາຊົນສະພາປະຊາຊົນແຂວງ, ສືບຕໍ່ປັບປຸງສະມາຊິກພາຍໃນໃຫ້ເຂັ້ມແຂງເພື່ອກຽມພ້ອມຮັບໃຊ້ໜ້າທີ່ການເມືອງທີ່ພັກ-ລັດມອບໝາຍໃຫ້, ພ້ອມກັນຈັດຕັ້ງປະຕິບັດເນື້ອໃນຂໍ້ແຂ່ງຂັນ 5 ເປັນເຈົ້າ, ຂໍ້ແຂ່ງຂັນ 3 ດີ, ຂໍ້ແຂ່ງຂັນ 4 ບຸກ ຂອງ 3 ອົງການຈັດຕັ້ງມະຫາຊົນຂອງສະພາປະຊາຊົນແຂວງຕ້ອງສູ້ຊົນໃຫ້ໄດ້ 90% ຂຶ້ນໄປ, ສືບຕໍ່ຈັດຕັ້ງປະຕິບັດວຽກງານດ້ານວິຊາສະເພາະ, ດ້ານຂະບວນການ ແລະ ອື່ນໆ ຕາມການຊີ້ນຳຂອງຄະນະພັກ, ຄະນະປະຈຳ.

ໃນກອງປະຊຸມໄດ້ມອບ-ຮັບ ໃບຍ້ອງຍໍນາມມະຍົດ 5 ເປັນເຈົ້າ ກຳມະບານຮາກຖານສະພາປະຊາຊົນແຂວງ ສະໄໝທີ I ຈຳນວນ 1 ໃບ, ໃບຍ້ອງຍໍໜ່ວຍແມ່ຍິງສະພາປະຊາຊົນໃນການປະຕິບັດໜ້າທີ່ວຽກງານ 5 ປີ ຈຳນວນ 1 ໃບ; ນອກຈາກນັ້ນ, ຍັງໄດ້ມອບຮັບໃບຍ້ອງຍໍໃຫ້ແກ່ສະມາຊິກກຳມະບານ, ຊາວໜຸ່ມ ແລະ ແມ່ຍິງ ສະພາປະຊາຊົນແຂວງ ຜູ່ທີ່ມີຜົນງານດີເດັ່ນ ໃນການເຄື່ອນໄຫວວຽກງານ ໄລຍະ 5 ປີ ທັງໝົດຈຳນວນ 83 ໃບ. ໃນກອງປະຊຸມໄດ້ປ່ອນບັດຄັດເລືອກເອົາ ຄະນະຊຸດໃໝ່ຂອງ 3 ອົງການຈັດຕັ້ງມະຫາຊົນ ແລະ ໄດ້ດຳເນີນກອງປະຊຸມຄັ້ງປະຖົມມະລຶກຂອງຕົນຂຶ້ນ.

ໃນຕອນທ້າຍ, ທ່ານ ເພັດສະໝອນ ດາວົງສອນ ກຳມະການພັກແຂວງ, ເລຂາຄະນະບໍລິຫານງານຊາວໜຸ່ມແຂວງ ແລະ ທ່ານ ວຽງໄຊ ສີວິໄລ ກຳມະການພັກແຂວງ,ຮອງປະທານສະພາປະຊາຊົນແຂວງ ໄດ້ມີຄຳເຫັນໂອ້ລົມຕໍ່ກັບການເຄື່ອນໄຫວວຽກງານຂອງ 3 ອົງການຈັດຕັ້ງມະຫາຊົນກໍຄືພະນັກງານ-ລັດຖະກອນພາຍໃນສະພາປະຊາຊົນແຂວງ ທ່ານໄດ້ຍ້ອງຍໍຊົມເຊີຍຕໍ່ກັບຜົນງານທີ່ຍາດມາໄດ້, ມີຄວາມຕັ້ງໜ້າ, ຫ້າວຫັນໃນການປະກອບສ່ວນເຂົ້າໃນວຽກງານຂອງ 3 ອົງການຈັດຕັ້ງມະຫາຊົນ ກໍ່ຄືການເຮັດວຽກງານຢູ່ໃນສະພາປະຊາຊົນແຂວງ ທີ່ໄດ້ໃຊ້ວິຊາສະເພາະຂອງຕົນປະກອບສ່ວນເຂົ້າໃນວຽກງານທີ່ຕົນຮັບຜິດຊອບ ແລະ ທ່ານຍັງໄດ້ເນັ້ນໜັກໃນການຮັກສາແລະເສີມຂະຫຍາຍຄວາມສາມັກຄີທີ່ມີຢູ່ນັບໃຫ້ແໜ້ນແຟ້ນຂຶ້ນກວ່າເກົ່າ, ພະນັກງານ-ລັດຖະກອນ ທຸກຄົນຕ້ອງມີຄຸນສົມບັດ, ສິນທຳປະຕິວັດ ແລະ ຈັນຍາບັນຂອງການເປັນພະນັກງານ-ລັດຖະກອນສະພາປະຊາຊົນແຂວງ, ສືບຕໍ່ຄົ້ນຄວ້າຮ່ຳຮຽນດ້ວຍຕົນເອງໃຫ້ດີຂຶ້ນກວ່າເກົ່າ, ຕ້ານແລະສະກັດກັ້ນແນວຄິດ ແລະ ການກະທຳທີ່ເປັນການທີ່ເສື່ອມເສຍຕໍ່ສະພາປະຊາຊົນແຂວງມີການຕຳນິກັນ, ສົ່ງຂ່າວ, ຊ່ວຍເຫຼືອເຊິ່ງກັນແລະກັນ ຢູ່ພາຍໃນກໍຄືສະພາປະຊາຊົນ ແຂວງຊຽງຂວາງ.

**(ສຸກສະຫວັນ ອິນທະແສງ)**

# ຄະນະພັກຮາກຖານສະພາປະຊາຊົນແຂວງສາລະວັນ ຕີລາຄາວຽກງານ 6 ເດືອນຕົ້ນປີ




(ສພຊ) - ສະຫາຍ ສາຍສະໝອນ ອິນທິເສນ ຄະນະພັກຮາກຖານ, ປະທານກວດກາພັກ ໄດ້ຜ່ານຮ່າງບົດສະຫຼຸບຕີລາຄາຄືນການນຳພາວຽກງານຮອບດ້ານຂອງຄະນະພັກຮາກຖານສະພາປະຊາຊົນແຂວງ ປະຈຳ 6 ເດືອນຕົ້ນປີ 2024 ໂດຍລວມແລ້ວຄະນະພັກຮາກຖານ ຮັກສາໄດ້ຄວາມສະຫງົບໂດຍພື້ນຖານ, ມີສະຖຽນລະພາບທາງດ້ານການເມືອງ ຮັບປະກັນໃຫ້ແກ່ການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ XI ຂອງສູນກາງພັກ, ມະຕິກອງປະຊຸມໃຫຍ່ຄັ້ງທີ IX ຂອງອົງຄະນະພັກແຂວງ, ຕິດພັນກັບການຈັດຕັ້ງປະຕິບັດບັນດາມະຕິກອງປະຊຸມສະພາແຫ່ງຊາດ ຊຸດທີ IX ແລະ ມະຕິກອງປະຊຸມສະພາປະຊາຊົນແຂວງ ຊຸດທີ II ໃຫ້ເປັນແຜນງານ, ໂຄງການ ແລະ ກົດຈະກຳລະອຽດຂອງຕົນເພື່ອຈັດຕັ້ງປະຕິບັດໃຫ້ເກີດໝາກເກີດຜົນ ແລະ ເຂົ້າສູ່ຊີວິດສັງຄົມຕົວຈິງ; ຖືເອົາວຽກງານການເມືອງເປັນກົກ ເອົາໃຈໃສ່ຕິດຕາມ, ກວດກາສະຫຼຸບປະເມີນຜົນວຽກງານຮອບດ້ານປະຈຳເດືອນ, ພ້ອມທັງວາງທິດທາງແຜນການເດືອນຕໍ່ໄປ, ໃນນີ້ໄດ້ຖືເປັນບັນຫາສຳຄັນ ຕໍ່ກັບຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ ແລະ ການປະຕິບັດໜ້າທີ່ຂອງສະມາຊິກພັກ, ພະນັກງານ-ລັດຖະກອນ ຕິດພັນກັບການດຳເນີນຊີວິດການເມືອງພາຍໃນພັກ ເປັນປົກກະຕິ; ໄດ້ເອົາໃຈໃສ່ສຶກສາອົບຮົມແນວຄິດ ສະມາຊິກພັກທຸກສະຫາຍ ໃຫ້ມີຄວາມສາມັກຄີເປັນເອກະພາບພາຍໃນພັກ, ເຊື່ອໝັ້ນຕໍ່ການນຳພາຂອງພັກ, ປະຕິບັດຕາມແນວທາງປ່ຽນແປງໃໝ່ຂອງພັກ, ຍຶດໝັ້ນຈຸດໝາຍສັງຄົມນິຍົມ, ຈຳແນກໄດ້ມິດ-ສັດຕູຢ່າງຈະແຈ້ງ, ມີຄວາມອົດທົນໜຽວແໜ້ນບໍ່ຫວັ່ນໄຫວຄອນແຄນ ຕໍ່ສະພາບການທີ່ເກີດຂຶ້ນ, ເດັດດ່ຽວຕໍ່ສູ້ຕ້ານທຸກກົນອຸບາຍມ້າງເພທຳລາຍຂອງສັດຕູ ແລະ ກຸ່ມຄົນບໍ່ດີ; ຍຶດໝັ້ນ ແລະ ປະຕິບັດຢ່າງເຂັ້ມງວດຕາມ 5 ຫຼັກການ 3 ທິດນຳໃນການກໍ່ສ້າງພັກ ແລະ ປັບປຸງພັກ, ສະມາຊິກພັກມີສະຕິເຄົາລົບ ແລະ ປະຕິບັດກົດລະບຽບຂອງພັກ, ກົດໝາຍ ແລະ ລະບຽບການຕ່າງໆຂອງລັດຢ່າງເຂັ້ມງວດ; ພ້ອມທັງຜ່ານທິດທາງແຜນການຈັດຕັ້ງປະຕິບັດວຽກງານ ປະຈຳ 6 ເດືອນທ້າຍປີ 2024 ຕື່ມອີກ.

ພ້ອມນັ້ນ, ບັນດາສະຫາຍສະມາຊິກພັກ ໄດ້ສຸມໃສ່ປະກອບຄຳຄິດຄຳເຫັນໃສ່ຮ່າງເນື້ອໃນຂອງບົດສະຫຼຸບ ທີ່ຕິດພັນກັບຄວາມຮັບຜິດຊອບໜ້າທີ່ການເມືອງວຽກງານພັກ-ລັດເພື່ອພ້ອມກັນປັບປຸງແກ້ໄຂບັນຫາຂໍ້ຄົງຄ້າງ ເຮັດໃຫ້ການເຄື່ອນໄຫວໜ້າທີ່ວຽກງານຂອງຄະນະພັກຮາກຖານໃນຕໍ່ໜ້າ ມີຄວາມຖືກຕ້ອງຕາມຫຼັກການລວມສູນປະຊາທິປະໄຕຂອງພັກ ແລະ ປະສົບຜົນສຳເລັດຕາມຄາດໝາຍທີ່ວາງໄວ້; ພ້ອມດຽວກັນ, ກອງປະຊຸມໄດ້ຜ່ານຮ່າງມະຕິຕົກລົງແຕ່ງຕັ້ງຄະນະຮັບຜິດຊອບ, ອະນຸກຳມະການ ແລະ ກອງເລຂາຊ່ວຍວຽກແລະລາຍງານຄວາມຄືບໜ້າການກະກຽມດຳເນີນກອງປະຊຸມໃຫຍ່ຂອງຄະນະພັກຮາກຖານ ສະພາປະຊາຊົນແຂວງສາລະວັນ ໄດ້ດຳເນີນໄປຢ່າງຖືກຕ້ອງຕາມກົດລະບຽບຂອງພັກປະຊາຊົນປະຕິວັດລາວ ແລະ ທັນກຳນົດເວລາ.

ກອງປະຊຸມດັ່ງກ່າວ ໄດ້ຈັດຂຶ້ນຕອນເຊົ້າຂອງວັນທີ 6 ມິຖຸນາ 2024 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ ໂດຍການເປັນປະທານກອງປະຊຸມຂອງສະຫາຍ ນາງ ສູນໄຕ ໄຊຍະແສງ ກຳມະການພັກແຂວງ ເລຂາຄະນະພັກຮາກຖານ ສະພາປະຊາຊົນແຂວງ, ມີບັນດາສະຫາຍຄະນະພັກຮາກຖານ, ສະຫາຍເລຂາ-ຮອງເລຂາໜ່ວຍພັກ 3 ຄະນະກຳມະການ, ຄະນະເລຂາທິການ ທີ່ຂຶ້ນກັບຄະນະພັກຮາກຖານ ເຂົ້າຮ່ວມ;

**(ດີລຳພົນ ພົມມະຈັນ)**

# ຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 8 ປະຊຸມຮ່ວມກັບອົງການປົກຄອງແຂວງ

(ສພຊ) - ວັນທີ 7 ມິຖຸນາ 2024 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງຫົວພັນ ໄດ້ຈັດກອງປະຊຸມຮ່ວມ ລະຫວ່າງຄະນະສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 8 ແຂວງຫົວພັນ ຮ່ວມກັບອົງການປົກຄອງແຂວງຫົວພັນ ໂດຍການເປັນປະທານຂອງທ່ານ ສົມສັກ ດອນຈານິດ ຮອງປະທານສະພາປະຊາຊົນແຂວງຫົວພັນ; ເຂົ້າຮ່ວມມີ ບັນດາທ່ານກຳມະການພັກແຂວງ, ຄະນະປະຈຳສະພາປະຊາຊົນແຂວງ, ຄະນະກຳມະການ, ຄະນະເລຂາທິການ, ຫົວໜ້າ-ຮອງຫົວໜ້າພະແນກການ, ອົງການທຽບເທົ່າຂັ້ນແຂວງ, ອົງການໄອຍະການປະຊາຊົນແຂວງ, ສານປະຊາຊົນແຂວງ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ສະຫະພັນນັກຮົບເກົ່າ, 2 ກອງບັນຊາການ, ບັນດາສາຂາທະນາຄານຕະຫລອດຮອດ ພະນັກງານວິຊາການຂະແໜງການກ່ຽວຂ້ອງ.

ໃນວາລະກອງປະຊຸມ, ຮັບຟັງການລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ປະຈຳ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນປີ 2024; ບົດລາຍງານກ່ຽວກັບ ການຈັດຕັ້ງປະຕິບັດ ແຜນງົບປະມານແຫ່ງລັດ ປະຈຳ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນປີ 2024; ບົດລາຍງານ ກ່ຽວກັບການຈັດຕັ້ງປະຕິບັດບັນດາໂຄງການລົງທຶນແຮ່ທາດ ໃນໄລຍະຜ່ານມາ ແລະ ການກຳນົດແຜນການຈັດຕັ້ງປະຕິບັດວຽກງານດັ່ງກ່າວໃນຕໍ່ໜ້າຂອງແຂວງຫົວພັນ ຕິດພັນກັບການຈັດຕັ້ງປະ

ອ່ານຕໍ່ໜ້າ 7

# ຮອງປະທານ ສພຂ ຄໍາມ່ວນ ຕິດຕາມ ກວດກາ ແລະ ຊຸກຍູ້ວຽກງານຢູ່ 5 ເມືອງ



(ສພຊ) - ລະຫວ່າງວັນທີ 3-7 ມິຖຸນາ 2024 ທ່ານ ນາງ ບົງອອນ ໄຊຍະສິດ ຮອງປະທານສະພາປະຊາຊົນແຂວງຄໍາມ່ວນ ພ້ອມດ້ວຍບັນດາທ່ານກໍາມະການຄະນະປະຈໍາສະພາປະຊາຊົນແຂວງຄໍາມ່ວນ, ມີບັນດາທ່ານສະມາຊິກສະພາປະຊາຊົນຂັ້ນແຂວງປະຈໍາເຂດເລືອກຕັ້ງເມືອງ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຕິດຕາມ, ກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດບັນດາມະຕິກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາປະຊາຊົນແຂວງຄໍາມ່ວນ ຊຸດທີ II, ທີ່ຕິດພັນກັບການແກ້ໄຂຄໍາຮ້ອງ-ຄໍາສະເໜີຂອງປະຊາຊົນຢູ່ 5 ເມືອງຄື: ບົວລະພາ, ໄຊບົວທອງ, ເຊບັ້ງໄຟ, ໜອງບົກ ແລະ ທ່າແຂກ ໂດຍການຕ້ອນຮັບ ແລະ ເຂົ້າຮ່ວມເຮັດວຽກຂອງບັນດາທ່ານເຈົ້າເມືອງ, ຮອງເຈົ້າເມືອງ, ຄະນະປະຈໍາພັກເມືອງ, ກໍາມະການພັກເມືອງ, ໄອຍະການປະຊາຊົນ, ສານປະຊາຊົນ, ຄະນະກອງບັນຊາການ ປກຊ-ປກສ ເມືອງ, ຫົວໜ້າຮອງຫົວໜ້າຫ້ອງການທີ່ກ່ຽວຂ້ອງ ແລະ ຕະຫຼອດຮອດແຂກຖືກເຊີນເຂົ້າຮ່ວມທັງໝົດມີ 301 ເທື່ອຄົນ ຍິງ 73 ເທື່ອຄົນ.

ການເຄື່ອນໄຫວຢູ່ບັນດາເມືອງຄັ້ງນີ້, ທ່ານ ນາງ ບົງອອນ ໄຊຍະສິດ ພ້ອມດ້ວຍຄະນະໄດ້ຮັບຟັງການລາຍງານຂອງບັນດາທ່ານເຈົ້າເມືອງ ແລະ ຮອງເຈົ້າເມືອງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານປະຈໍາ6ເດືອນຕົ້ນປີ2024; ຮັບຟັງການລາຍງານການຈັດຕັ້ງປະຕິບັດວຽກງານໃນຂົງເຂດຍຸຕິທໍາ ແລະ ທິດທາງແຜນການຕໍ່ໜ້າຂອງພາກສ່ວນທີ່ກ່ຽວຂ້ອງ; ຈາກນັ້ນ, ບັນດາທ່ານຜູ້ແທນ, ໄດ້ມີຄໍາຊັກຖາມເຈາະຈີ້ມບາງບັນຫາໃນການຈັດຕັ້ງປະຕິບັດວຽກງານ, ບັນດາຜູ້ເຂົ້າຮ່ວມ, ໄດ້ພ້ອມກັນແລກປ່ຽນຄໍາຄິດຄໍາເຫັນ ແລະ ຕອບຂໍ້ຊັກຖາມຢ່າງກົງໄປກົງມາ ແລະ ພາວະວິໄສຕາມຄໍາຖາມເຈາະຈີ້ມ, ເພື່ອເປັນຂໍ້ມູນໃຫ້ແກ່ຄະນະປະຈໍາສະພາປະຊາຊົນແຂວງຄໍາມ່ວນ, ຄະນະສະມາຊິກສະພາແຫ່ງຊາດປະຈໍາເຂດເລືອກຕັ້ງທີ 12, ຄະນະສະມາຊິກສະພາປະຊາຊົນຂັ້ນແຂວງນໍາມາວິເຄາະວິໄຈ ແລະ ເປັນຂໍ້ມູນພື້ນຖານໃນການຄົ້ນຄວ້າປະກອບຄໍາເຫັນ ຕໍ່ກອງປະຊຸມສະໄໝສາມັນເທື່ອທີ7ຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງຄໍາມ່ວນ ຊຸດທີ II ທີ່ຈະໄດ້ໄຂຂຶ້ນໃນຕໍ່ໜ້ານີ້.

ໂອກາດດັ່ງ, ທ່ານ ນາງ ບົງອອນ ໄຊຍະສິດ ໄດ້ໂອ້ລົມຕໍ່ອໍານາດການປົກຄອງເມືອງ ແລະ ພະນັກງານຫຼັກແຫຼ່ງຢູ່ບັນດາເມືອງເປັນຕົ້ນ: ໃຫ້ເອົາໃຈໃສ່ຍົກສູງເປັນເຈົ້າການໃນການຈັດຕັ້ງປະຕິບັດລັດຖະທໍາມະນູນ, ກົດໝາຍ, ມະຕິຂອງກອງປະຊຸມສະພາ 2 ຂັ້ນ ແລະ ເຊື່ອມຊຶມບັນດາມະຕິ, ຄໍາສັ່ງ, ຄໍາແນະນໍາຂອງກົມການເມືອງ ແລະ ຄະນະເລຂາທິການສູນກາງພັກວ່າດ້ວຍການກະກຽມ ແລະ ດໍາເນີນກອງປະຊຸມໃຫຍ່ 3 ຂັ້ນ ເພື່ອຕັ້ງໜ້າກະກຽມໃຫ້ດີ ແລະ ດໍາເນີນໃຫ້ຖືກຕ້ອງ, ໃຫ້ເຂັ້ມງວດ, ສ້າງຄວາມເຂົ້າໃຈໃຫ້ປະຊາຊົນລາວບັນດາເຜົ່າໄດ້ຮັບຮູ້, ເຂົ້າໃຈກົດໝາຍ ແລະ ລັດຖະທໍາມະນູນຢ່າງເລິກເຊິ່ງຍິ່ງຂຶ້ນ, ທຸກພາກສ່ວນເຮັດໜ້າທີ່ຕາມພາລະບົດບາດຂອງຕົນດ້ວຍຄວາມເອົາໃຈໃສ່, ການພັດທະນາເສດຖະກິດ-ສັງຄົມຂອງເມືອງ ກໍຄືການເກັບລາຍຮັບເຂົ້າງົບປະມານຢູ່ພາຍໃນເມືອງໃຫ້ລະອຽດ ຈະແຈ້ງ ແລະ ຄົບຖ້ວນ ໃຫ້ສູ້ຊົນຈັດຕັ້ງປະຕິບັດບັນດາຄາດໝາຍທີ່ວາງໄວ້ໃຫ້ສໍາເລັດ.

ໃນໂອກາດດຽວກັນ, ທ່ານຍັງໄດ້ສະແດງຄວາມຊົມເຊີຍ ແລະ ຂອບໃຈຕໍ່ຜູ້ໃຫ້ທຶນໃນການເຄື່ອນໄຫວຈັດຕັ້ງປະຕິບັດວຽກງານເທື່ອນີ້ ເຊິ່ງໄດ້ຮັບການສະໜັບສະໜູນໂດຍ: ໂຄງການຂອງມູນນິທິເວສມິນສະເຕີ (WFD).

**(ເອື້ອ ມະໂນສິງ)**

# ຮອງປະທານສະພາປະຊາຊົນແຂວງຊຽງຂວາງ ເຄື່ອນໄຫວວຽກງານຢູ່ເມືອງພູກູດ




(ສພຊ) - ໃນວັນທີ 6 ມິຖຸນາ 2024 ທ່ານ ວຽງໄຊ ສີວິໄລ ຮອງປະທານສະພາປະຊາຊົນແຂວງຊຽງຂວາງ ພ້ອມດ້ວຍພະນັກງານສະພາປະຊາຊົນແຂວງ ໄດ້ເຄື່ອນໄຫວຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດລັດຖະທໍາມະນູນ ແລະ ກົດໝາຍ ຢູ່ເມືອງພູກູດ ແຂວງຊຽງຂວາງ ໂດຍການເຂົ້າຮ່ວມຂອງທ່ານ ຄໍາພາ ພິລາວົງ ເລຂາພັກເມືອງ, ເຈົ້າເມືອງງພູກູດ; ມີສະມາຊິກສະພາປະຊາຊົນແຂວງປະຈໍາເມືອງພູກູດ, ບັນທ່ານຫົວໜ້າ-ຮອງຫົວໜ້າ ແລະ ພະນັກງານທີ່ຢູ່ໃນຂົງເຂດຍຸຕິທໍາ ແລະ ປກຊ-ປກສ ເຂົ້າຮ່ວມ.

ທັງນີ້, ກໍເພື່ອຕິດຕາມ, ກວດກາການຈັດຕັ້ງປະຕິບັດໜ້າທີ່ວຽກງານວິຊາສະເພາະໃນຂົງເຂດຍຸຕິທໍາ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ລົງຊຸກຍູ້, ຕິດຕາມກວດກາ, ເກັບກໍາຂໍ້ມູນ ວຽກງານແກ້ໄຂບັນຫາຢາເສບຕິດ ແລະ ເພື່ອແລກປ່ຽນຖອດຖອນບົດຮຽນ, ຂໍ້ສະດວກ, ຂໍ້ຫຍຸ້ງຍາກ, ຜົນໄດ້ຮັບ, ຂໍ້ສະເໜີ ແລະ ມາດຕະການຈັດຕັ້ງປະຕິບັດວຽກງານຕ່າງໆຕໍ່ໜ້າ. ໃນໂອກາດທີ່ໄດ້ລົງຕິດຕາມກວດກາໃນຄັ້ງນີ້, ທ່ານ ຄໍາພາ ພິລາວັນ ເລຂາພັກເມືອງ ເຈົ້າເມືອງງພູກູດ ໄດ້ລາຍງານສະພາບການເຄື່ອນໄຫວວຽກງານຂົງເຂດຍຸຕິທໍາ ແລະ ປກຊ-ປກສ ຢູ່ເມືອງໝອກໃນໄລຍະຜ່ານມາ, ຮັບຟັງບົດລາຍງານໂດຍຫຍໍ້ການຈັດຕັ້ງປະຕິບັດລັດຖະທໍາມະນູນ ແລະ ກົດໝາຍ ການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ຂອງກອງບັນຊາການປກສ ແລະ ປກຊ, ຮັບຟັງບົດລາຍງານໂດຍຫຍໍ້ ຂອງຫ້ອງການສະຫະພັນນັກຮົບເກົ່າເມືອງ, ຮັບຟັງບົດລາຍງານໂດຍຫຍໍ້ການຈັດຕັ້ງປະຕິບັດລັດຖະທໍາມະນູນ ແລະ ກົດໝາຍ, ການຈັດຕັ້ງປະຕິບັດຄໍາຕັດສິນຂອງສານ ແລະ ຮັບຟັງບົດລາຍງານໂດຍຫຍໍ້ກ່ຽວກັບວຽກງານປ້ອງກັນຊາຍແດນ ແລະ ແກ້ໄຂບັນຫາຢາເສບຕິດ ທີ່ລຽບຕາມຊາຍແດນໄລຍະຜ່ານມາເຊິ່ງຍົກໃຫ້ເຫັນເຖິງ ຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ສະພາບຄວາມເປັນຈິງຂອງການເຄື່ອນໄຫວວຽກງານ, ພ້ອມນັ້ນ ຄະນະສະມາຊິກສະພາປະຊາຊົນແຂວງ ຍັງໄດ້ມີຄໍາຖາມເຈາະຈີ້ມທີ່ກ່ຽວພັນກັບບັນດາຫ້ອງການຂອງເມືອງ ເປັນຕົ້ນແມ່ນການປະຕິບັດຄໍາຕັດສິນຂອງສານ, ບັນຫາຢາເສບຕິດ, ການກວດສຸຂະພາບຂອງກໍາລັງ, ການຄຸ້ມຄອງອາວຸດຕ່າງໆ, ການພົວພັນປະສານງານກັບພາກສ່ວນຕ່າງໆ, ແລະ ອື່ນໆອີກ. ນອກນັ້ນ, ບັນດາຜູ້ແທນກອງປະຊຸມໄດ້ມີຄໍາສະເໜີຕໍ່ສະພາປະຊາຊົນແຂວງ ໃຫ້ຂັ້ນເທິງຄົ້ນຄວ້າ ແລະ ຊໍ້ທິດຊີ້ນໍາ ເພື່ອສະດວກໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານ ໃຫ້ມີຄວາມຖືກຕ້ອງ ແລະ ສອດຄ່ອງກັບສະພາບຄວາມເປັນຈິງ ໃນນັ້ນ ທີມງານທີ່ມາຈາກສະພາປະຊາຊົນແຂວງ ພ້ອມດ້ວຍການນໍາເມືອງ ໄດ້ເດີນທາງໄປບ້ານດູກ ເມືອງພູກູດ ແຂວງຊຽງຂວາງ ເພື່ອເກັບກໍາຄໍາຄິດຄໍາເຫັນຂອງປະຊາຊົນຢູ່ບ້ານດັ່ງກ່າວ ໃນການເຄື່ອນໄຫວວຽກງານປກຊ-ປກສ ແລະ ການແກ້ໄຂບັນຫາຢາເສບຕິດຂອງບ້ານ ເພື່ອນໍາສະເໜີຂັ້ນເທິງແກ້ໄຂໃຫ້ຖືກຕ້ອງ ແລະ ທັນເວລາ.

ນອກນັ້ນ, ທ່ານວຽງໄຊ ສີວິໄລ ໄດ້ມີຄໍາເຫັນໂອ້ລົມສະຫຼຸບຕີລາຄາການປະເມີນຜົນການຈັດຕັ້ງປະຕິບັດວຽກງານໃນຂົງເຂດຍຸດຕິທໍາ ແລະ ປກຊ-ປກສ ເຫັນວ່າມີຫຼາຍດ້ານໄດ້ຮັບຜົນສໍາເລັດ ແລະ ຍັງມີບາງດ້ານທີ່ຕ້ອງປັບປຸງແກ້ໄຂ ໃຫ້ທຸກສະຫາຍຈົ່ງເອົາໃຈໃສ່ຈັດຕັ້ງປະຕິບັດໜ້າທີອັນສໍາຄັນ ທີ່ພັກລັດມອບໝາຍໃຫ້ໄດຮັບຜົນສໍາເລັດ ແລະ ຖືກຕ້ອງສອດຄອງກັບລະບຽບກົດໝາຍທີ່ວາງໄວ້. ການຕິດຕາມກວດກາໃນຄັ້ງນີ້ ໄດ້ຮັບການສະໜັບສະໜູນຊ່ວຍເຫຼືອທາງດ້ານງົບປະມານຈາກໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ຫຼື ສະເຕັບສ໌ (STEPs) ໂດຍຜ່ານກອງເລຂາຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອລ້າໃຫ້ແກ່ສະພາແຫ່ງຊາດ.

**(ນາງ ສຸກສະຫວັນ ອິນທະແສງ)**

## ຄະນະ...

(ຕໍ່ຈາກໜ້າ 6)

ຕິບັດມະຕິກອງປະຊຸມຂອງສະພາແຫ່ງຊາດ ສະບັບເລກທີ 95/ສພຊ, ລົງວັນທີ 18 ກໍລະກົດ 2023; ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດ ບັນດາຄາດໝາຍການພັດທະນາຊົນນະບົດແລະແກ້ໄຂຄວາມທຸກຍາກໃນໄລຍະຜ່ານມາແລະທິດທາງແຜນການໃນຕໍ່ໜ້າ ການຈັດຕັ້ງປະຕິບັດມະຕິກອງປະຊຸມສະພາແຫ່ງຊາດ ສະບັບ ເລກທີ 82/ສພຊ, ລົງວັນທີ 30 ທັນວາ 2022 ແລະ ບົດລາຍງານ ຂອງທະນາຄານ ກ່ຽວກັບການຈັດຕັ້ງປະຕິບັດ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2024 ຈາກຂະແໜງການກ່ຽວຂ້ອງ; ຈາກນັ້ນ, ຜູ້ເຂົ້າກອງປະຊຸມ ກໍໄດ້ພ້ອມກັນຄົ້ນຄວ້າປະກອບຄໍາຄິດຄໍາເຫັນຢ່າງມີຈຸດສຸມ, ກົງໄປກົງມາ ຕໍ່ກັບບັນດາບົດລາຍງານດັ່ງກ່າວໃຫ້ມີເນື້ອໃນລະອຽດຄົບຖ້ວນ, ສົມບູນ ແລະ ເພື່ອເປັນການສັງລວມຂໍ້ມູນບັນຫາສໍາຄັນພື້ນຖານຂອງແຂວງໃຫ້ຄະນະສະມາຊິກສະພາແຫ່ງຊາດ ປະຈໍາເຂດເລືອກຕັ້ງທີ 8 ແຂວງຫົວພັນ ນໍາໄປເປັນຂໍ້ມູນປະກອບ ຄໍາຄິດ, ຄໍາເຫັນ ໃນກອງປະຊຸມສະໄໝສາມັນ ເທື່ອທີ 7 ຂອງສະພາແຫ່ງຊາດ ຊຸດທີ IX ທີ່ຈະເປີດຂຶ້ນໃນວັນທີ 10 ມິຖຸນາ 2024 ນີ້.

ຕອນທ້າຍ, ປະທານກອງປະຊຸມກໍໄດ້ມີຄໍາເຫັນຊີ້ນໍາເຊິ່ງທ່ານໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ອົງການປົກຄອງແຂວງ ທີ່ມີຄວາມພະຍາຍາມເອົາໃຈໃສ່ຈັດຕັ້ງປະຕິບັດວຽກງານຂອງຕົນ ຕາມມະຕິກອງປະຊຸມສະພາປະຊາຊົນແຂວງໄດ້ພິຈາລະນາຮັບຮອງເອົາ ໂດຍສະເພາະແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ຕິດພັນກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ເຫັນວ່າມີຫລາຍອັນພົ້ນເດັ່ນ ຄຽງຄູ່ກັນນີ້, ທ່ານຍັງໄດ້ເໜັ້ນໜັກບາງບັນຫາ ເປັນຕົ້ນແມ່ນຮຽກຮ້ອງມາຍັງພາກສ່ວນກ່ຽວຂ້ອງຂອງອົງການປົກຄອງແຂວງ ຈົ່ງໄດ້ເອົາໃຈໃສ່ຮີບຮ້ອນປັບປຸງບົດລາຍງານຂອງຕົນ ຕາມການປະກອບຄໍາຄິດຄໍາເຫັນຂອງຜູ້ແທນເຂົ້າຮ່ວມກອງປະຊຸມ ໃຫ້ມີເນື້ອໃນຄົບຖ້ວນ, ຈະແຈ້ງ ແລະ ຖືກຕ້ອງ ຕາມມະຕິຂອງສະພາແຫ່ງຊາດ ກໍຄືສະພາປະຊາຊົນແຂວງທີ່ໄດ້ພິຈາລະນາຮັບຮອງເອົາ; ພ້ອມນີ້, ຕ້ອງໄດ້ຍົກສູງປະສິດທິພາບ, ດ້ານກົນໄກການປະສານງານ ລະຫວ່າງສະພາປະຊາຊົນແຂວງ ກັບອົງການປົກຄອງແຂວງ, ໃຫ້ມີຄວາມຄ່ອງຕົວ, ເປັນເອກະພາບ ແລະ ທັນຕາມກໍານົດເວລາ.

## 6 ເດືອນຕົ້ນປີ...

(ຕໍ່ຈາກໜ້າ 3)

ສົ່ງເສີມການຜະລິດນ້ຳມັນຢູ່ພາຍໃນ ແລະ ໃຫ້ບຸລິມະສິດພິເສດໃນການສະໜອງເງິນຕາແກ່ບັນດາບໍລິສັດທີ່ນຳເຂົ້ານ້ຳມັນເຊື້ອໄຟ, ພົວພັນຮ່ວມມືກັບບັນດາປະເທດໃກ້ຄຽງ ໂດຍສະເພາະເພື່ອນມິດຍຸດທະສາດ ໃນການສະໜອງນ້ຳມັນໃຫ້ໃນຍາມທີ່ແຫຼ່ງນ້ຳມັນມີການຂາດແຄນ, ໃນໄລຍະກາງ ແລະ ໄລຍະຍາວກຳລັງຄົ້ນຄວ້າແລະກຳນົດເປັນຍຸດທະສາດສະເພາະ ເພື່ອຮັບມືກັບສະພາບຄວາມສ່ຽງຂາດແຄນນ້ຳມັນເຊື້ອໄຟທີ່ອາດຈະເກີດຂຶ້ນໃນຕໍ່ໜ້າ; ຄຽງຄູ່ກັນນັ້ນ ກໍໄດ້ຍູ້ແຮງ ແລະ ລະດົມທົ່ວສັງຄົມໃຫ້ຫັນມານຳໃຊ້ພາຫະນະທີ່ນຳໃຊ້ພະລັງງານສະອາດ (ລົດໄຟຟ້າໃຫ້ຫຼາຍຂຶ້ນ) ເພື່ອຫຼຸດຜ່ອນການນຳເຂົ້ານ້ຳມັນ, ຫຼຸດຜ່ອນມົນລະພິດຈາກຄວັນລົດ ແລະ ເປັນການປົກປັກຮັກສາສິ່ງແວດລ້ອມໄປພ້ອມ.

**ການດັດສົມຄຸ້ມຄອງບໍລິສັດນຳເຂົ້າ-ສົ່ງອອກ**:

ຄຸ້ມຄອງ ແລະ ຫັນເອົາຜູ້ປະກອບການທຸລະກິດນຳເຂົ້າ ແລະ ສົ່ງອອກ ໃຫ້ເຂົ້າສູ່ລະບົບໂດຍຈົດທະບຽນຜູ້ນຳເຂົ້າ ແລະ ສົ່ງອອກ ໄດ້ 3,252 ບໍລິສັດປະຕິບັດໄດ້ລື່ນແຜນການ (ຄາດໝາຍສູ້ຊົນແມ່ນ 100 ບໍລິສັດທີ່ມີມູນຄ່າການນຳເຂົ້າແລະສົ່ງອອກ 100 ລ້ານໂດລາ/ປີຂຶ້ນໄປ) ສິ່ງຜົນເຮັດໃຫ້ມີການນຳເງິນຕາຈາກການນຳເຂົ້າ ແລະ ສົ່ງອອກສິນຄ້າ ຜ່ານລະບົບທະນາຄານເພີ່ມຂຶ້ນເຖິງ 70%.

**ການປັບປຸງ ແລະ ຍົກລະດັບໂຄງລ່າງຄົມມະນາຄົມ:**

ສືບຕໍ່ປັບປຸງເສັ້ນທາງທີ່ເປ່ເພ ໂດຍສະເພາະເສັ້ນທາງຫຼວງແຫ່ງຊາດສາຍຫຼັກສາມາດໄປ-ມາໄດ້ປົກກະຕິເຊິ່ງມາຮອດປັດຈຸບັນສາມາດສັນຈອນໄດ້ສະດວກຂຶ້ນກວ່າເກົ່າ, ຕົກລົງມອບໂອນວຽກສ້ອມແປງເສັ້ນທາງຫຼວງແຫ່ງຊາດແລະງົບປະມານກອງທຶນທາງ ໃຫ້ອົງການປົກຄອງທ້ອງຖິ່ນເປັນຜູ້ຮັບຜິດຊອບ, ຊຸກຍູ້ບັນດາໂຄງການກໍ່ສ້າງທາງດ່ວນຕ່າງໆໃຫ້ສາມາດດຳເນີນການໄວ, ສືບຕໍ່ປັບປຸງການບໍລິການທາງລົດໄຟລາວ-ຈີນ, ລາວ-ໄທ ໃຫ້ສະດວກ ແລະ ວ່ອງໄວ; ພ້ອມກັນນັ້ນ ກໍສືບຕໍ່ປັບປຸງ ແລະ ຂະຫຍາຍການບໍລິການຂົນສົ່ງທາງອາກາດ.

**ການຜະລິດກະສິກຳເປັນສິນຄ້າ ແລະ ການສ້າງຄັງແຮເຂົ້າ:**

ສາມາດແກ້ໄຂຂໍ້ຫຍຸ້ງຍາກໃຫ້ແກ່ຜູ້ປະກອບການຕ່າງໆດີຂຶ້ນ ໂດຍສະເພາະແມ່ນການກໍ່ສ້າງໂຄງລ່າງພື້ນຖານການຜະລິດເປັນຕົ້ນລະບົບສາງ, ໂຮງສີ, ໂຮງງານອົບແຫ້ງ, ການປຸງແຕ່ງ, ການຫຸ້ມຫໍ່... ລວມທັງການເຂົ້າເຖິງແຫຼ່ງທຶນຕ່າງໆ; ນອກນີ້ ກໍໄດ້ແກ້ໄຂບັນຫາຕົ້ນທຶນການຜະລິດທີ່ສູງ ດ້ວຍການສົ່ງເສີມການຜະລິດວັດຖຸດິບເພື່ອສະໜອງໃຫ້ບັນດາໂຮງງານຜະລິດອາຫານສັດ, ຝຸ່ນ, ປຸ໋ຍ ຢູ່ພາຍໃນ ແລະ ອື່ນໆ ເພື່ອຫຼຸດຜ່ອນຕົ້ນທຶນການຜະລິດໃຫ້ສາມາດແຂ່ງ ຂັນກັບສິນຄ້າປະເທດໃກ້ຄຽງ; ພ້ອມດຽວກັນນີ້, ກໍໄດ້ສຸມໃສ່ການສະສົມຄັງແຮເຂົ້າໂດຍໃຫ້ພາກທຸລະກິດເອກະຊົນມີສ່ວນຮ່ວມຫຼາຍຂຶ້ນ ເພື່ອສຳຮອງໄວ້ແຊກແຊງໃນເວລາທີ່ລາຄາເຂົ້າເໜັງຕີງແຮງ ແລະ ນຳໄປຊ່ວຍເຫຼືອແກ້ໄຂກໍລະນີເກີດມີໄພພິບັດຢູ່ທ້ອງຖິ່ນຕ່າງໆ.

**ການອອກໃບຕາດິນ:**

ສືບຕໍ່ຈັດຕັ້ງປະຕິບັດຕົວເລກຄາດໝາຍການອອກໃບຕາດິນທີ່ສະພາແຫ່ງຊາດວາງອອກ (ມະຕິສະພາແຫ່ງຊາດ: 300,000 ຕອນ) ດ້ວຍມາດຕະການຕ່າງໆທີ່ແທດຕົວຈິງເຊິ່ງສຳເລັດຂຶ້ນທະບຽນ 36,409 ຕອນ ເທົ່າກັບ 12 % ຂອງແຜນການ, ຊຸກຍູ້ການມອບວຽກງານຂຶ້ນທະບຽນອອກໃບຕາດິນຈົດທະບຽນການເຄື່ອນໄຫວ ແລະ ປ່ຽນແປງສິດນຳໃຊ້ທີ່ດິນໃຫ້ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂັ້ນເມືອງ ພ້ອມທັງສືບຕໍ່ການສ້າງເງື່ອນ ໄຂໃຫ້ແກ່ການຫັນເປັນທັນສະໄໝກ່ຽວກັບລາຍຮັບຈາກທີ່ດິນ.

ສຳລັບທິດທາງແຜນວຽກຈຸດສຸມໄລຍະ 6 ເດືອນທ້າຍປີ 2024 ລັດຖະບານຈະໄດ້ສຸມໃສ່ວຽກງານດ້ານເສດຖະກິດ ດັ່ງນີ້:

1. ສຸມໃສ່ແກ້ໄຂບັນຫາຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ໂດຍສະເພາະການເໜັງຕີງຂອງອັດຕາແລກປ່ຽນ, ການເໜັງຕີງຂອງລາຄາສິນຄ້າ, ບັນຫາເງິນເຟີ້ ແລະ ໜີ້ສິນຕ່າງປະເທດ ດ້ວຍການບັງຄັບໃຊ້ບັນດາມາດຕະການທີ່ວາງອອກ ໃຫ້ປາກົດຜົນເປັນຈິງ ແລະ ເປັນຮູບປະທຳຫຼາຍຂຶ້ນກວ່າເກົ່າ, ໃນນັ້ນ ຈະຄົ້ນຄວ້າປັບປຸງນະໂຍບາຍອັດຕາດອກເບ້ຍເງິນຝາກທີ່ເປັນເງິນກີບ ເພີ່ມຂຶ້ນໃນໄລຍະເວລາໃດໜຶ່ງ ເພື່ອສ້າງຄຸນຄ່າຂອງເງິນກີບໃຫ້ສູງຂຶ້ນ, ສ້າງຄວາມເຊື່ອໝັ້ນໃຫ້ແກ່ສັງຄົມໃນການຖືຄອງເງິນກີບ, ປະຕິບັດການຊຳລະສະສາງຢູ່ພາຍໃນປະເທດດ້ວຍເງິນກີບ ແລະ ປະຕິບັດການລວມສູນເງິນຕາຕ່າງປະເທດຢູ່ທະນາຄານ.

2. ສຸມໃສ່ການເກັບລາຍຮັບງົບປະມານປີ 2024 ໃຫ້ໄດ້ຕາມແຜນ ຫຼື ເກີນແຜນໃຫ້ເປັນປີທີ 4 ຕິດຕໍ່ກັນ, ໃນນັ້ນ ສຸມໃສ່ຂະຫຍາຍຖານລາຍຮັບໃໝ່ໃຫ້ເພີ່ມຂຶ້ນ, ເກັບລາຍຮັບຈາກຖານທີ່ມີຢູ່ແລ້ວໃຫ້ຄົບຖ້ວນ, ເລັ່ງຫັນການເກັບລາຍຮັບໃຫ້ເປັນທັນສະໄໝໃຫ້ກວ້າງ ແລະ ກວມເອົາຫຼາຍຂົງເຂດໂດຍສະເພາະການເກັບລາຍຮັບຢູ່ດ່ານ, ລາຍຮັບຈາກຄ່າທຳນຽມ, ຄ່າບໍລິການ ແລະ ອື່ນໆ; ສືບຕໍ່ປະຕິບັດລາຍຈ່າຍງົບປະມານຢ່າງຮັດກຸມ, ປະຢັດມັດທະຍັດໂດຍໃຫ້ບຸລິມະສິດການເບີກ




ຈ່າຍເງິນເດືອນ, ເງິນອຸດໜູນ, ການຊຳລະໜີ້ສິນຕ່າງປະເທດ, ການເປັນປະທານກອງປະຊຸມອາຊຽນ; ສ່ວນການຈັດຊື້ໃໝ່ ຖ້າບໍ່ຈຳເປັນແທ້ໆ ແມ່ນຈະໄດ້ໂຈະໄວ້ກ່ອນ.

3. ສືບຕໍ່ປັບປຸງສະພາບແວດລ້ອມ ແລະ ນະໂຍບາຍສົ່ງເສີມການລົງທຶນ ແລະ ການດຳເນີນທຸລະກິດ ຢູ່ ສປປ ລາວ ໃຫ້ແຂງແຮງກວ່າເກົ່າ ແລະສາມາດຕັດຂັ້ນຂອດທີ່ອຸດຕັນອອກໃຫ້ໄດ້; ສຸມໃສ່ຕິດຕາມກວດກາບັນດາໂຄງການລົງທຶນທີ່ໄດ້ຮັບອະນຸມັດຜ່ານມາ, ໂຄງການໃດທີ່ບໍ່ມີຄວາມຄືບໜ້າ ຫຼື ມີຄວາມຄືບໜ້າຊ້າກໍໃຫ້ເຊີນບໍລິສັດມາແຈ້ງເຕືອນ ແລະ ເຮັດບົດບັນທຶກໄວ້ ພ້ອມທັງກຳນົດເວລາໃຫ້ບໍລິສັດໄປແກ້ໄຂ, ຖ້າແກ້ໄຂບໍ່ໄດ້ ແມ່ນຈະໄດ້ກ້າວໄປສູ່ການຍົກເລີກ ຫຼື ແຈ້ງສິ້ນສຸດສັນຍາ ໂດຍສະເພາະໂຄງການກໍ່ສ້າງທາງດ່ວນ,
ໂຄງການບໍ່ແຮ່.

4. ສຸມໃສ່ແກ້ໄຂບັນຫາການສະໜອງພະລັງງານໄຟຟ້າບໍ່ພຽງພໍກັບຄວາມຕ້ອງການດ້ວຍການເລັ່ງຊຸກຍູ້ບັນດາໂຄງການທີ່ໄດ້ຮັບອະນຸມັດຜ່ານມາໃຫ້ກໍ່ສ້າງສຳເລັດຕາມແຜນ COD ທີ່ໄດ້ກຳນົດໄວ້, ເລັ່ງພັດທະນາພະລັງງານລົມ, ພະລັງງານແສງອາທິດທີ່ສາມາດກໍ່ສ້າງໄວໂດຍສະເພາະພະລັງງານແສງອາທິດໃນເຂດອ່າງນ້ຳໜ້າເຂື່ອນໄຟຟ້າ, ເຂດທີ່ດິນປອກໂລ້ນ, ດິນຫີນແຮ່ທີ່ບໍ່ເໝາະສົມແກ່ການພັດທະນາກະສິກຳ; ພ້ອມກັນນັ້ນ, ກໍໃຫ້ເລັ່ງກໍ່ສ້າງສາຍສົ່ງໄຟຟ້າ ເພື່ອ ລຳລຽງເອົາກະແສໄຟຟ້າຈາກບ່ອນທີ່ມີຫຼາຍ ແລະເຫຼືອນຳໃຊ້ໄປສູ່ບ່ອນຂາດແຄນ ແລະ ເຊື່ອມຕໍ່ກັບປະເທດໃກ້ຄຽງ.

5. ສຸມໃສ່ການຈັດຕັ້ງປະຕິບັດສິນເຊື່ອເພື່ອກະຕຸ້ນເສດຖະກິດ ແລະ ສິນເຊື່ອເພື່ອກະຈາຍລົງສູ່ທ້ອງຖິ່ນ ຕາມຂໍ້ຕົກລົງ 93/ນຍ ໃຫ້ເປັນຮູບປະທຳ, ພ້ອມກັນນັ້ນ ກໍໃຫ້ຮີບຮ້ອນອອກເປັນນິຕິກຳເພື່ອກຳນົດເງື່ອນໄຂໃນການຄັດເລືອກບໍລິສັດເພື່ອປະຕິບັດນະໂຍບາຍການສະໜອງທຶນໃນການເກັບຊື້ຜະລິດຕະພັນກະສິກຳເພື່ອສົ່ງອອກໄປຕ່າງປະ ເທດ ແລະ ນຳເງິນຕາຕ່າງປະເທດ ມາຂາຍໃຫ້ທະນາຄານຄືນ.

6. ເລັ່ງຫັນໂຄງການທົດລອງແຮ່ທາດ ໄປສູ່ກົນໄກປົກກະຕິຕາມກົດໝາຍກຳນົດ, ຢຸດຕິການອະນຸຍາດໃຫ້ຂຸດຄົ້ນຄຳຕົກຂ້ອນຢ່າງເດັດຂາດ; ພ້ອມກັນນັ້ນ, ພາຍຫຼັງທີ່ສະພາແຫ່ງຊາດຮັບຮອງເອົາຜົນການປະເມີນຄືນບັນດາໂຄງການບໍ່ແຮ່ແລ້ວ, ລັດຖະບານຈະໄດ້ຮີບຮ້ອນປະຕິບັດມາດຕະການຕ່າງໆຢ່າງເຂັ້ມງວດໂດຍສະເພາະແມ່ນໂຄງການທີ່ຖືກຈັດໃນປະເພດອ່ອນ ແລະ ອ່ອນຫຼາຍ (C+ ແລະ C) ພ້ອມກັນນັ້ນ ຈະໄດ້ສຸມໃສ່ມາດຕະການຄຸ້ມຄອງການຂຸດຄົ້ນ ແລະ ປຸງແຕ່ງແຮ່ຄຳ, ແຮ່ຫາຍາກ ແລະ ອື່ນໆ ທັງຈະໄດ້ຮີບຮ້ອນຄົ້ນຄວ້ານະໂຍບາຍຕົວຈິງຈຳນວນໜຶ່ງເພື່ອໃຫ້ມີການສ້າງໂຮງງານປຸງແຕ່ງແຮ່ສຳເລັດຮູບຢູ່ລາວ.

7. ເລັ່ງປັບປຸງຂັ້ນຂອດການບໍລິການຂົນສົ່ງສິນຄ້າຜ່ານດ່ານຊາຍແດນ ແລະ ບັນດາທ່າບົກ ໃຫ້ງ່າຍດາຍ, ວ່ອງໄວ, ສະດວກກວ່າເກົ່າ ແລະ ຫຼຸດຄ່າໃຊ້ຈ່າຍທີ່ບໍ່ຈຳເປັນ ເພື່ອສາມາດແຂ່ງຂັນໃນການເຊື່ອມຈອດ ແລະເຊື່ອມໂຍງກັບສາກົນໂດຍເລັ່ງຄົ້ນຄວ້າການເກັບຄ່າບໍລິການຜ່ານທ່າບົກ, ການຂົນສົ່ງສິນຄ້າຜ່ານທາງລົດໄຟ, ລົດບັນທຸກຂົນສົ່ງສິນຄ້າ, ຄ່າທຳນຽມ, ຄ່າບໍລິການຜ່ານດ່ານ ໃຫ້ເໝາະສົມ ແລະ ເປັນເອກະພາບກັນ.

8. ສຸມໃສ່ຍູ້ແຮງການສົ່ງເສີມການຜະລິດກະສິກຳ ເພື່ອຄ້ຳປະກັນສະບຽງອາຫານ, ທົດແທນການນຳເຂົ້າແລະເປັນສິນຄ້າສົ່ງອອກໃຫ້ຫຼາຍ; ສືບຕໍ່ສົ່ງເສີມຈຸນລະວິສາຫະກິດ ແລະ ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ໃຫ້ແຂງແຮງກວ່າເກົ່າ ແລະ ສືບຕໍ່ປະຕິຮູບລັດວິສາຫະກິດໃຫຍ່ໃຫ້ສຳເລັດຕາມແຜນການທີ່ວາງໄວ້.

## ສະພາແຫ່ງຊາດ...

(ຕໍ່ຈາກໜ້າ 1)

ນະບົດ ແລະ ແກ້ໄຂຄວາມທຸກຍາກ, ອັນພົ້ນເດັ່ນແມ່ນການປັບປຸງ ແລະ ກໍ່ສ້າງບັນດາພື້ນຖານໂຄງລ່າງຮັບໃຊ້ການຜະລິດແລະປັບປຸງຊີວິດການເປັນຢູ່ຂອງປະຊາຊົນຢູ່ເຂດຈຸດສຸມພັດທະນາທີ່ເປັນບຸລິມະ ສິດ, ເຂດຊົນນະບົດ, ຫ່າງໄກສອກຫຼີກ, ເຂດລຽບຕາມຊາຍແດນ, ເຂດຈຸດສຸມພັດທະນາຊົນນະບົດໃໝ່ ແລະເຂດພື້ນຖານການປະຕິວັດ; ຄຸນນະພາບຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ ໄດ້ຮັບການປັບປຸງຍົກລະດັບສູງຂຶ້ນ; ປະຊາຊົນສາມາດເຂົ້າເຖິງການບໍລິການດ້ານການສຶກສາ, ສາທາລະນະສຸກ, ການບໍລິການດ້ານສິນເຊື່ອ ແລະ ອື່ນໆ ນັບມື້ນັບສະດວກວ່ອງໄວຫຼາຍຂຶ້ນກວ່າເກົ່າ. ແຕ່ເຖິງຢ່າງໃດກໍຕາມ, ຄຽງຄູ່ກັບຜົນງານທີ່ກ່າວມາຂ້າງເທິງ ກອງປະຊຸມເຫັນວ່າຍັງມີຂໍ້ຄົງຄ້າງຈຳນວນໜຶ່ງ ຈະຕ້ອງໄດ້ສືບຕໍ່ແກ້ໄຂ ເປັນຕົ້ນ:

1. ການຈັດຕັ້ງຜັນຂະຫຍາຍ ແລະ ເຊື່ອມຊຶມບັນດານະໂຍບາຍ, ນິຕິກຳທີ່ກ່ຽວຂ້ອງກັບວຽກງານພັດທະນາຊົນນະບົດແລະແກ້ໄຂຄວາມທຸກຍາກບໍ່ທັນເລິກເຊິ່ງ ແລະ ທົ່ວເຖິງ; ວຽກງານກໍ່ສ້າງຮາກຖານເມືອງ, ວຽກງານພັດທະນາຊົນນະບົດ-ແກ້ໄຂຄວາມທຸກຍາກ, ວຽກງານ 3 ສ້າງ ຍັງບໍ່ເປັນເສົາຄ້ຳເຊິ່ງກັນ ແລະກັນ.

2. ຄາດໝາຍການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ຍັງມີ 3 ຄາດໝາຍທີ່ບໍ່ບັນລຸຕາມແຜນການເປັນຕົ້ນການສ້າງເມືອງພົ້ນທຸກໄດ້ 8 ເມືອງ (ຄາດໝາຍ 15 ເມືອງ), ສ້າງເມືອງເຂັ້ມແຂງຮອບດ້ານໄດ້ 3 ເມືອງ (ຄາດໝາຍ 4 ເມືອງ) ແລະ ການຂະຫຍາຍກອງທຶນພັດທະນາບ້ານໃຫ້ບ້ານຂອງເມືອງທຸກຍາກ ໄດ້ 8 ບ້ານ (ຄາດໝາຍ 12 ບ້ານ); ຈຸດສຸມພັດທະນາທີ່ເປັນບຸລິມະສິດຂອງລັດຖະບານ ແລະ ທ້ອງຖິ່ນການພັດທະນາບາງມາດຕະຖານຂອງຂະແໜງການຈຳນວນໜຶ່ງ ບໍ່ບັນລຸຕາມແຜນ.

3. ການປະເມີນມາດຕະຖານພົ້ນທຸກ ແລະ ມາດຕະຖານພັດທະນາ ຕາມດຳລັດ 348/ລບ ບາງຕົວເລກຄາດໝາຍຂອງສູນກາງ ແລະ ທ້ອງຖິ່ນ ຄາດເຄື່ອນກັນ; ການຈັດສັນພູມລຳເນົາ ແລະ ອາຊີບໃຫ້ປະຊາຊົນ ຕາມກົດໝາຍວ່າດ້ວຍການຈັດສັນພູມລຳເນົາ ແລະ ອາຊີບ ປະຕິບັດບໍ່ທັນໄດ້ດີເທົ່າທີ່ຄວນ; ການຈັດສັນທີ່ດິນທຳການຜະລິດໃຫ້ປະຊາຊົນ ບາງທ້ອງຖິ່ນ ຍັງບໍ່ທັນເໝາະສົມ, ປະຊາຊົນຈຳນວນໜຶ່ງ ບໍ່ທັນມີອາຊີບທີ່ໝັ້ນຄົງ.

4. ການນຳພາ-ຊີ້ນຳວຽກງານຕົວຈິງຢູ່ຂັ້ນຮາກຖານບໍ່ທັນເຂັ້ມແຂງເທົ່າທີ່ຄວນ; ຂະແໜງການກ່ຽວຂ້ອງຈຳນວນໜຶ່ງ ຍັງຂາດຄວາມຮັບຜິດຊອບ ແລະ ຖືວຽກພັດທະນາຊົນນະບົດແລະແກ້ໄຂຄວາມທຸກຍາກເປັນຄວາມຮັບຜິດຊອບຂອງຂະແໜງກະສິກຳ ແລະ ປ່າໄມ້.

ສຳລັບທິດທາງໃນຕໍ່ໜ້າ, ກອງປະຊຸມສະພາແຫ່ງຊາດ ໄດ້ມອບໃຫ້ລັດຖະບານຈັດຕັ້ງປະຕິບັດບາງມາດຕະການເພີ່ມຕື່ມ ດັ່ງນີ້:

1. ຄົ້ນຄວ້າຄືນການແຕ່ງຕັ້ງຄະນະຮັບຜິດຊອບ ແລະ ກົງຈັກເສນາທິການຂອງວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ຂັ້ນສູນກາງ ແລະ ທ້ອງຖິ່ນ ໃຫ້ເປັນລະບົບຄົບຊຸດ ຕາມຄຳສັ່ງຂອງກົມການເມືອງສູນກາງພັກ ເລກທີ 097/ກມສພ ແລະ ບົດແນະນຳຂອງຫ້ອງວ່າການສູນກາງພັກ ສະບັບເລກທີ02/ຫສພ, ລົງວັນທີ21/02/2023ວ່າດ້ວຍການຈັດຕັ້ງປະຕິບັດຄຳສັ່ງແນະນຳຂອງຄະເລຂາທິການສູນກາງພັກກ່ຽວກັບການຜັນຂະຫຍາຍຜົນສຳເລັດກອງປະຊຸມວຽກງານກໍ່ສ້າງຮາກຖານການເມືອງ ຕິດພັນກັບວຽກງານພັດທະນາຊົນນະບົດຮອບດ້ານແກ້ໄຂຄວາມທຸກຍາກແລະວຽກງານ 3 ສ້າງ.

2. ປັບປຸງການຈັດສັນງົບປະມານສະເພາະໃຫ້ວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ໃຫ້ແຕ່ລະແຂວງ ແລະ ນະຄອນຫຼວງ ໂດຍໃຫ້ຄະນະຮັບຜິດຊອບວຽກງານດັ່ງກ່າວນີ້ ມີສ່ວນຮ່ວມເລີ່ມແຕ່ຫົວທີ ໃນການຈັດສັນງົບປະມານໃສ່ 45 ຈຸດສຸມ ຕາມຂໍ້ຕົກລົງສະບັບເລກທີ 72/ນຍ, ລົງວັນທີ 11/8/2022 ວ່າດ້ວຍການຮັບຮອງເອົາຈຸດສຸມພັດທະນາ ທີ່ເປັນບຸລິມະສິດລະຫວ່າງສູນກາງ ແລະ ທ້ອງຖິ່ນ ໄລຍະ 2021-2025.

3. ກຳນົດແຜນພັດທະນາຊົນນະບົດແລະແກ້ໄຂຄວາມທຸກຍາກເຂດຫ່າງໄກສອກຫຼີກທີ່ສຸດ ແລະ ເຂດຊົນນະບົດທີ່ຕັ້ງຢູ່ລຽບຕາມຊາຍແດນ ທີ່ຕິດພັນກັບວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.

4. ຈັດສັນງົບປະມານເພື່ອສ້າງແລະປັບປຸງສູນສົ່ງເສີມເຕັກນິກການກະສິກຳທີ່ມີແລ້ວ ແລະ ສະໜອງພະນັກງານວິຊາການລົງນຳພາເຮັດຕົວຈິງ ເພື່ອຜະລິດເປັນສິນຄ້າ ແລະ ຫຼຸດຜ່ອນການນຳເຂົ້າ.

5. ປັບປຸງເງື່ອນໄຂຂອງທະນາຄານນະໂຍບາຍ ເພື່ອໃຫ້ປະຊາຊົນຢູ່ບ້ານ, ກຸ່ມບ້ານເປົ້າໝາຍພັດທະນາຊົນນະບົດແລະແກ້ໄຂຄວາມທຸກຍາກ ສາມາດເຂົ້າເຖິງສິນເຊື່ອໄດ້ສະດວກ, ວ່ອງໄວກວ່າເກົ່າ.

6. ສ້າງແຜນແມ່ບົດ ແລະ ຍຸດທະສາດກ່ຽວກັບວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ໃຫ້ເປັນລະບົບຄົບຊຸດ ເພື່ອເປັນບ່ອນອີງ ແລະ ສະດວກໃນການຈັດຕັ້ງປະຕິບັດໃນແຕ່ລະໄລຍະ.

7. ສ້າງກົນໄກໃຫ້ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໄດ້ປະຕິບັດສິດ ແລະ ໜ້າທີ່ຂອງຕົນ ໃນການຕິດຕາມກວດກາວຽກງານດັ່ງກ່າວແຕ່ຫົວທີ.

## ແກ້ຄຳຜິດ

ໜັງສືພິມ “ຜູ້ແທນປະຊາຊົນ” ສະບັບທີ 974 ປະຈຳວັນທີ 16-22 ມິຖຸນາ 2024 ໜ້າ 1 ຫົວຂໍ້ຂ່າວ: ກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດ IX ໄຂຂຶ້ນຢ່າງເປັນທາງການ ແມ່ນຜິດ, ຖືກແມ່ນ ກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດຊຸດທີ IX ໄຂຂຶ້ນຢ່າງເປັນທາງການ; ສ່ວນຂ່າວທີ່ບໍ່ມີຫົວຂໍ້ ເນື່ອງຈາກຄວາມຜິດພາດທາງດ້ານເຕັກນິກຂອງໂຮງພິມ, ຫົວຂໍ້ຂ່າວຢູ່ຕົ້ນສະບັບແມ່ນ ເຝິກອົບຮົມໃຫ້ແກ່ພະນັກງານກະກຽມຮັບໃຊ້ກອງປະຊຸມ AIPA ຄັ້ງທີ 45. ຂໍໃຫ້ເຂົ້າໃຈຕາມນີ້ດ້ວຍ.

ຂໍອະໄພຢ່າງສູງໃນຄວາມຜິດພາດຄັ້ງນີ້ດ້ວຍ.

**ບກ.**




# ມະນຸດສະທຳ

# ຕົ້ນກົບເມກ

ພວກເຮົາສ່ວນໃຫຍ່ກໍເວົ້າຕິດສົບຕິດປາກວ່າ ຄົນໃດໜຶ່ງໃຈຮ້າຍ ບໍ່ເມດຕາປານີ-ລັງແກບັງບຽດຄົນອື່ນ ໄຮ້ມະນຸດສະທຳ ເຊິ່ງສ່ວນໃຫຍ່ອາດບໍ່ຮູ້ຫຼັກທຳ 5 ປະການທີ່ເປັນຄຸນສົມບັດເຮັດໃຫ້ເປັນມະນຸດສົມບູນ ເພາະຈິດໃຈດີງາມ. ຫຼັກທຳ 5 ປະການ ຄ້ຳປະກັນຄວາມເປັນມະນຸດ ປ້ອງກັນບໍ່ໃຫ້ຕົກເປັນພຶດຕິກຳບໍ່ດີ ພວກເຮົາຄວນສຶກສາຮູ້ໄວ້ໃນຖານະຊາວພຸດກ້າເອີ້ນໂຕເອງວ່າເປັນຊາວພຸດ ເພາະມັນຄູ່ກັບສິນ 5 ຂໍ້.

ມະນຸດສະທຳຂໍ້ທີໜຶ່ງຄື: ເມດຕາກະລຸນາ ເປັນການຮັກແພງມະນຸດດ້ວຍກັນ ເຫັນໝູ່ເພື່ອນມະນຸດຮ່ວມໂລກດຽວກັນ ມີແນວຄິດ-ຮູ້ສຶກຮັກ-ຊັງທຸກຄົນຄືກັນເຮົາຈຶ່ງບໍ່ບຽດບຽນກັນ, ສອງ: ສຳມາອາຊີວະຄື: ມີອາຊີບສຸດຈະລິດ ຖືກຕ້ອງ ຄ້ຳປະກັນບໍ່ໃຫ້ເປັນຄົນຂີ້ລັກ, ສາມ: ການສັງວອນຄື: ການລະວັງການປະພຶດຜິດໃນກາມ, ບໍ່ໃຫ້ລະເມີດສິດຄົນອື່ນ ເຊັ່ນ: ເມຍເຂົາ-ຜົວເຂົາ ຫຼື ຄົນຮັກຄົນອື່ນ, ສີ່: ສັດຈະຄື: ຄວາມຈິງຊື່ສັດຕໍ່ກັນ, ເວົ້າຄວາມຈິງບໍ່ຫຼອກລວງ ແລະ 5: ສະຕິສຳປະຊັນຍະ ມີຄວາມລະນຶກຮູ້ໂຕວ່າເຮັດຫຍັງຢູ່ ບໍ່ຫຼົງກະແສໂລກ, ບໍ່ຫຼົງມົວເມົານຳຊັບສິນ ຈົນຂາດສະຕິປັນຍາຂໍ້ນີ້ ຄ້ຳປະກັນໃຫ້ຄົນເຮົາໃຊ້ຊີວິດໃຫ້ຖືກຕ້ອງ.

ຫຼັກມະນຸດສະທຳ 5 ປະການນີ້ ຕ້ອງປະຕິບັດຄູ່ກັນໄປກັບສິນ 5 ຂໍ້ ເພື່ອສ້າງໂຕເອງໃຫ້ເປັນຄົນດີ ເຊິ່ງສຳຄັນມັນກໍແມ່ນຫຼັກຄ້ຳປະກັນໃຫ້ເຮົາ ແຕກຕ່າງຈາກສັດ ເພາະມີທຳມະທີ່ເປັນຄຸນສົມບັດ ເຮັດໃຫ້ເປັນມະນຸດສົມບູນ;ການບໍ່ບຽດບຽນມີແຕ່ຮັກແພງ-ເມດຕາ, ການບໍ່ລະເມີດສິດໃນຊັບສິນ ຫຼື ກຳມະສິດຂອງຄົນອື່ນ ເຊັ່ນວ່າ: ບໍ່ລະເມີດຮີດຄອງ-ສິດ, ຄົນຮັກ-ຄູ່ຮັກ ຫຼື ຜົວ-ເມຍ ຄົນອື່ນ ເປັນສິ່ງຄ້ຳປະກັນໃຫ້ຄົນເຮົາຢູ່ຮ່ວມກັນຢ່າງສະຫງົບສຸກ.

ສັງລວມໄດ້ວ່າ: ຍ້ອນຄົນບໍ່ມີມະນຸດສະທຳ 5 ຂໍ້ນີ້ ຈຶ່ງພາໃຫ້ສັງຄົມສັບສົນວຸ້ນວາຍ ເພາະລະເມີດສິດທີກັນ ແລະ ກັນ ບັນຫາຈຶ່ງຕາມມາ !.






# ວິທີເຮັດວຽກ

**ພາກທີ 6**
**ວິທີນຳ**

ພວກເຮົາຕ້ອງກວດກາແນວນັ້ນຍ້ອນ ເຫດຜົນ 3 ຂໍ້ດັ່ງນີ້:

1. ມີການກວດການັ້ນ ຈຶ່ງຈະຮູ້ວ່າພະນັກງານ ແລະ ພວກຄົນຊ່ວຍວຽກຕ່າງໆດີ ຫຼື ຊົ່ວພໍປານໃດ.

2. ມີການກວດກາແນວນັ້ນ ຈຶ່ງຈະຮູ້ຂໍ້ດີ ຂໍ້ບົກພ່ອງຂອງ ສໍານັກງານຕ່າງໆ.

3. ມີການກວດກາແນວນັ້ນ ຈຶ່ງຈະຮູ້ຈັກຂໍ້ດີ ແລະ ຂໍ້ບົກພ່ອງຂອງຄຳສັ່ງ ແລະ ມະຕິຕົກລົງຕ່າງໆ.

ການກວດກາມີສອງວິທີຄື: ວິທີທີ່ໜຶ່ງ, ແມ່ນກວດກາແຕ່ເທິງລົງລຸ່ມ, ໝາຍຄວາມວ່າຜູ້ນຳກວດກາເບິ່ງຜົນງານຂອງສຳນັກງານຂອງຕົນ, ວິທີໜຶ່ງອີກ, ແມ່ນກວດກາແຕ່ລຸ່ມຂຶ້ນເທິງ. ໝາຍຄວາມວ່າປະຊາຊົນ ແລະ ພະນັກງານກວດກາເບິ່ງຂໍ້ຜິດພາດຂອງຜູ້ນຳ ແລະ ຊີ້ບອກວິທີແກ້ໄຂດັດແປງຂໍ້ຜິດພາດນັ້ນ. ວິທີນີ້ເປັນວິທີທີ່ດີກວ່າໝູ່ໃນການກວດກາ ພວກຄົນຊ່ວຍວຽກສ່ວນຫຼາຍໃນພັກນັ້ນ, ເວລາເປີດກອງປະຊຸມ, ສະມາຊິກຟັງຜູ້ນຳລາຍງານວຽກການ, ສະມາຊິກຟັງຕຳໜິຂໍ້ບົກພ່ອງ ແລ້ວກໍຕົກລົງວ່າຈະເລືອກຕັ້ງເພື່ອນສະຫາຍຜູ້ນີ້ ຫຼື ຜູ້ນັ້ນເຂົ້າໃນອົງການນຳຕໍ່ໄປອີກ, ນັ້ນແມ່ນກວດກາຕາມຫຼັກປະຊາທິປະໄຕລວມສູນ, ຕຳໜິຕົນເອງ ແລະ ຕຳໜິກັນ ເຊິ່ງເປັນຫຼັກການທີ່ພັກຕ້ອງປະຕິບັດຈົນສຸດຂີດ.ຢູ່ໃນໝູ່ປະສານງານປະຊາຊົນນັ້ນເມື່ອເວລາເປີດກອງປະຊຸມ, ຕຳໜິ ແລະ ສະເໜີຄຳຄິດຄຳເຫັນ ແລະ ເລືອກຕັ້ງຄະນະກຳມະການນັ້ນ ຫຼື ເລືອກເອົານັ້ນ ຫົວໜ້າອົງການນີ້, ນັ້ນກໍແມ່ນວິທີຂອງປະຊາຊົນທີ່ກວດກາພວກຜູ້ນຳຂອງເຂົາເຈົ້າ.

ອ່ານຕໍ່ສະບັບໜ້າ...




# ກະດັດກະດໍ້ – ກະດັກກະດໍ້ – ກະເດ້ຍກະດໍ້

'ຄຳໂຕງໂຕຍ' ແມ່ນຄຳເວົ້າທີ່ມີລັກສະນະຄ່ອງກັນ ຢູ່ໃນກຸ່ມຄຳອາດມີສຽງສະຫຼະສຳຜັດກັນ ຫຼື ມີພະຍາງຢູ່ໃນກຸ່ມຄຳຊ້ຳກັນສອງເທື່ອ ແລະ ອາດເປັນຄຳທີ່ມີຄຳຂະຫຍາຍແບບພິເສດໃຫ້ແກ່ຄຳວິເສດ.

ຄຳວ່າ 'ກະດັດກະດໍ້' ກໍເປັນຄຳໂຕງໂຕຍຊະນິດໜຶ່ງທີ່ມີພະຍາງໃນກຸ່ມຄຳຊ້ຳກັນສອງເທື່ອ ຄືມີຄຳວ່າ 'ກະ' ໃນພະຍາງທີໜຶ່ງຊ້ຳກັນກັບ 'ກະ' ໃນພະຍາງທີສາມ.

'ກະດັດກະດໍ້' ສາມາດແຍກອອກຈາກເປັນສອງສ່ວນ ຄື ສ່ວນສອງພະຍາງໜ້າ 'ກະດັດ' ແລະ ສ່ວນສອງພະຍາງຫຼັງ 'ກະດໍ້'. ທັງ 'ກະດັດ' ແລະ 'ກະດໍ້' ລ້ວນແຕ່ມີຄວາມໝາຍສະເພາະທີ່ມີລັກສະນະຄ້າຍຄືກັນເຊິ່ງຢູ່ໃນວັດຈະນານຸກົມພາສາລາວ ສະບັບສະຖາບັນວິທະຍາສາດສັງຄົມແຫ່ງຊາດ ປີ 2012 ໄດ້ໃຫ້ນິຍາມ 'ກະດັດ' ວ່າ "ໂພດ, ເຫຼືອເກີນ" ແລະ 'ກະດໍ້' ໝາຍເຖິງ "ໂພດ, ໂພດກາຍ, ໂພດເຫຼືອ, ເອົາແທ້ເອົາວ່າຈົນເກີນເລີຍ" ເຊັ່ນ

- ວ່າໂຕກະດັດ ເພິ່ນພັດແຮງກະດໍ້ ວ່າໂຕນັ່ງຈົ້ກໍ້ ເຂົານັ້ນພັດນັ່ງຕໍ່.

'ກະດັດ' ແລະ 'ກະດໍ້' ມັກໃຊ້ໂຮມເຂົ້າກັນເປັນຄຳໂຕງໂຕຍ 'ກະດັດກະດໍ້' ແຕ່ບາງເທື່ອກໍພົ້ງນສຽງເປັນ 'ກະດັກກະດໍ້' ຫຼື 'ກະເດ້ຍກະດໍ້' ເຊິ່ງກໍມີຄວາມໝາຍວ່າ "ໂພດ, ໂພດກາຍ, ໂພດເຫຼືອ, ເອົາແທ້ເອົາວ່າຈົນເກີນໄປ" ເຊັ່ນ

- ມື້ນີ້ອາກາດຮ້ອນກະດັດກະດໍ້.
- ຮ້ານນີ້ຂາຍແພງກະດັກກະດໍ້.
- ບົດເສັງນີ້ຈັ່ງແມ່ນຍາກກະເດ້ຍກະດໍ້.

'ກະເດ້ຍກະດໍ້' ສາມາດປ່ຽນເອົາ 'ກະດໍ້' ຂຶ້ນມາຢູ່ໜ້າເປັນ 'ກະດໍ້ກະເດ້ຍ' ໄດ້, ແຕ່ບໍ່ສາມາດປ່ຽນເອົາ 'ກະດໍ້' ຂຶ້ນມາຢູ່ໜ້າ 'ກະດັດ' ເປັນ 'ກະດໍ້ກະດັດ' ໄດ້.

ທ່ານເດ, ມັກໃຊ້ຄຳໃດ ລະຫວ່າງ 'ກະດັດກະດໍ້', 'ກະດັກກະດໍ້', 'ກະເດ້ຍກະດໍ້' ຫຼື ກະດໍ້ກະເດ້ຍ?



# ຂຽນຄໍາລາວໃຫ້ຖືກ

# ຄູແສງ

| ຖືກ | ຜິດ |
|---|---|
| ພິທີກອນ | ນັກພິທີກອນ |
| ຈິດຕະກອນ | ນັກຈິດຕະກອນ |
| ວິສະວະກອນ | ນັກວິສະວະກອນ |
| ວິທະຍາກອນ | ນັກວິທະຍາກອນ |
| ສຳມະນາກອນ | ນັກສຳມະນາກອນ |



## ສຸກສະບາຍຫາຍໂລກາ

# ສັບພະຄຸນທາງຢາຂອງຜັກຫອມເປ

ໂດຍ: ທິວກະທິ



ຜັກຫອມເປ ມີວິຕາມິນ ແລະ ແຮ່ທາດຫຼາຍຢ່າງທີ່ສຳຄັນກັບຮ່າງກາຍ; ນອກນັ້ນ, ຍັງມີສັບພະຄຸນທາງຢາ ຊ່ວຍປິ່ນປົວພະຍາດ ແລະ ຊ່ວຍບຳລຸງສ່ວນຕ່າງໆຂອງຮ່າງກາຍ ດັ່ງນີ້:

- ມີສານຕ້ານອະນຸມູນອິດສະລະຫຼາຍ ຊ່ວຍຢັບຢັ້ງການເສື່ອມຂອງເຊວຕ່າງໆໃນຮ່າງກາຍ, ຊ່ວຍບຳລຸງກະດູກ, ແຂ້ວ, ຜິວ, ເສັ້ນຜົມ ແລະ ເລັບ ໃຫ້ແຂງແຮງ;
- ຊ່ວຍຢັບຢັ້ງການຂະຫຍາຍຕົວຂອງເຊວມະເຮັງ, ຊ່ວຍປ້ອງກັນການເກີດພະຍາດມະເຮັງ, ຊ່ວຍຫຼຸດລະດັບຄວາມດັນເລືອດສູງໄດ້;
- ຊ່ວຍເຮັດໃຫ້ຕ່ອມໄທຣອຍ (ຄໍໜຽງ) ເຮັດວຽກໄດ້ຢ່າງປົກກະຕິ;
- ຊ່ວຍຮັກສາຄວາມສົມດຸນຂອງຮ່າງກາຍ;
- ຊ່ວຍບັນເທົາອາການເຈັບຫົວ, ແກ້ອາການເປັນຫວັດ ແລະ ຊ່ວຍຂັບເຫື່ອໄດ້ດີ;
- ຊ່ວຍແກ້ໄຂ້ມາລາເລຍ ດ້ວຍການໃຊ້ຕົ້ນມາຕົ້ມກັບນ້ຳແລ້ວດື່ມ;
- ຊ່ວຍແກ້ອາການທ້ອງອືດ, ຊ່ວຍລະບາຍທ້ອງ ດ້ວຍການດື່ມນ້ຳຕົ້ມໃບຜັກຫອມເປ;
- ຊ່ວຍຂັບນ້ຳປັດສະວະ ດ້ວຍການດື່ມນ້ຳຕົ້ມຮາກຜັກຫອມເປ;
- ຊ່ວຍແກ້ພິດງູ ດ້ວຍການເອົາຕົ້ນມາຕຳ ແລ້ວເອົາໄປພອກບໍລິເວນທີ່ຖືກງູກັດ;
- ຊ່ວຍປິ່ນປົວບາດແຜຊ້ຳເຮື້ອ ດ້ວຍການໃຊ້ໃບມາຕຳ ແລ້ວພອກບໍລິເວນທີ່ເປັນບາດແຜ ແລະ ໃບຂອງຜັກຫອມເປ ຍັງສາມາດຊ່ວຍໃຫ້ບາດແຜສົດ, ເລືອດຢຸດໄຫຼໄວ; ນອກນັ້ນ, ຍັງຊ່ວຍດັບກິ່ນຄາວຂອງອາຫານ.

**ຂໍ້ມູນຈາກ:**



## ພັກຫາຍ ສະບາຍ

(ເລື່ອງເບົາໆ ເອົ້າແບບກັບເອງ ບໍ່ເຄັ່ງພິທີການ)

# ສ້ຽມທ້ຽນ

❊ **ຊົມ**ເຊີຍວັນ**ແພດລາວ** ຄົບຮອບ **59** ປີ (18.6.1965-18.6.2024) ຂໍອວຍໄຊເອົາທີ່ປີ້ ຝາກສົ່ງພອນໄຊ ຂໍໃຫ້ມີຄວາມສຸກ ເຂັ້ມແຂງທັນທ້າວ **ນັກຮົບຊຸດຂາວ**ບ້າໃຈກວ້າງ ຫານທະເລມີທຽມເທົ່າ ປະຊາລາວຫວັງເພິ່ງຊົ້ນແພດທຸກຄົນຂໍໃຫ້ສຸກລາບລົ້ນ ຍືນໝັ້ນຊື່ອບໍລົບ **ທ່ານເອີຍ!**

❊ **ອາ**ທິດ**ທີສອງ**ຂອງກອງປະຊຸມສະໄໝສາມັນພອມຢູ່ໃນວາລະ**ອຽກງານສະພາແຫ່ງຊາດ** ແລະ **ກົດໝາຍ** ບັນຍາກາດຂ້າງໃນເຕັມໄປດ້ວຍຄວາມຄຶກຄື້ນ **ສສຊ** ກ່າວມີຄ່າເທັນ ທຸກປະເດັນວາຈາ ເພື່ອປະຊາລາວລ້ວນໝົດທັງມອບສະເໜີເນັ້ນ ຫຼາຍປະເດັນພົ້ນເດັ່ນ ເຮັດເພື່ອພົງພີ່ນ້ອງ ປະຊາເຊື້ອຊາດລາວ **ຊົມເຊີຍ!**

## ຊອບຍິ້ມ

# ແອ່ບຕຸ້ງ

### ເລື່ອງ: ເຈົ້າບໍ່ຮູ້ຈັກ

ໃນຫ້ອງຮຽນວິຊາຄະນິດສາດ ນາຍຄູກໍາລັງສອນວິທີບວກເລກ ເລີຍຖາມກັບສົມສີວ່າ:

**ນາຍຄູ:** ສົມສີ ຖ້າເຈົ້າມີເງິນຢູ່ 5,000 ກີບ ແລ້ວເຈົ້າໄປຂໍແມ່ອີກ 5,000 ກີບ ສະແດງວ່າເຈົ້າມີເງິນເທົ່າໃດ?

**ສົມສີ:** ມີ 5,000 ກີບນາຍຄູ

**ນາຍຄູ:** ຄືມີ 5,000 ກີບ ສະແດງວ່າເຈົ້າບໍ່ຮູ້ບວກເລກ

**ສົມສີ:** ແຕ່ເຈົ້າບໍ່ຮູ້ຈັກແມ່ຂ້ອຍ!!!



## ອາດ ກະວີລາວ

# ຊາຊົ່ງ

# ຄົມສິລປ໌

❊ ໃຫ້ເຈົ້າ ຮານງ່າສ້ານ
ຜ້າປ່າຍ ສົນໆເຫລົ່າ
ລຳໃດ ເຂັດຄະລຳດ້ວຍ
ໃຫ້ເອົາ ຂວານຖາກຖິ້ມ

ເກີນໝູ່ລຳກາຍ ນັ້ນນາ
ຊີຊີ່ເງົ່າງາມໄມ້
ມີຕາຕອງອຸບາດ
ເປັນສ້ຽງຊ່ຽນເຮັດຟືນ ເທາະເນີ

❊ ເພິ່ນວ່າ ຄວນວິພາກໄຈ້
ຈຶ່ງຈະມີຄຸນຄາມ
ໄມ້ງາມຄຳນຶງຮູ້
ໄດ້ໝູ່ມວນໄມ້ເຮືຮ້າຍ

ການເລືອກເໝາະສົມ ດີໄດ !
ປະໂຫຍດສົມຊົມໃຊ້
ຮັກສາດີສົມສ່ວນ
ເຮືອນເຈົ້າຊິບໍ່ງາມ ຫັ້ນແລ້ວ !

❊ ຢ່າຫ່ອນ ຮຽນຫານຊ້າງ
ຄັນແກ່ນກາງຊິເຫຫັກ
ບໍ່ເກິ່ງກາງພໍດີ້
ປ່ຽງຂວາຫີນແຜ່ນລ້ານ

ຊາຊົ່ງແມວບັກເຖິກ
ເອ່ນອຽງສະຫວຍໂຕ້ນ
ສອງຝາງຊິງຊິເອນອ່ຽງ
ທາງຊ້າຍສ່ຳສະໂນ ບໍ່ເປັນໄດ

❊ ຊາຊົ່ງ ສອງໜ່ວຍຕຸ້ມ
ຢ່າຫ່ອນ ໄກກັນຫລາຍ
ເອົາແຕ່ພໍກະບວນໃຊ້
ໃຫ້ດ່ຽງດຸນຖືກຕ້ອງ

ຕິດແທກພໍດີ
ລື່ນກາຍເກີນກະດໍ້
ປະສົມກັນກົມກ່ຽວ
ທັງສອງຂ້າງສ່ຳກັນ

❊ ບູຮານວ່າ...
ຍ່າງເຍັກວັບໆຍ້າຍ
ຍາບຍົກ ລີລາເຢາະ
ຄືນຊີຈາປະຈານຈົ້ມ
ຂາບໍ່ ສົມສ່ວນດ້າມ

ມີເມົາແນ່ກໍເສຍຂາ ຊົ້ນໄດ
ໂລດບໍ່ຄືຮຸນຮ້າຍ
ນິນທາຂວັນຫຍາມຢຽດ ເອົາເນີ !
ບັກຊຽງນ້ອຍເພິ່ນເມົາ ບໍ່ເດ !






## ຄະຕິເຕືອນໃຈ

# ດອກຫຍ້າ

ຢູ່ໃກ້ປູກມອນ ໜີໃກ້ຊອນຮົ້ວ

ລັດຖະສະພາຕ່າງປະເທດ

# ສະວິດ ອະນຸມັດກົດໝາຍສົ່ງເສີມ ການຜະລິດພະລັງງານທົດແທນ



*ລັດຖະບານສະວິດ ຮັບຮອງກົດໝາຍທີ່ມີເປົ້າໝາຍເລັ່ງລັດການພັດທະນາພະລັງງານທົດແທນເຊິ່ງເປັນສ່ວນໜຶ່ງໃນຄວາມພະຍາຍາມຂອງປະເທດເພື່ອບັນລຸຄວາມເປັນກາງຂອງກາກບອນໃນປີ 2050.*

ສຳນັກຂ່າວ AFP ລາຍງານຈາກນະຄອນເຈນີວາ, ປະເທດສະວິດ ຫຼື ສະວິດເຊີແລນ ເມື່ອວັນທີ 10 ມິຖຸນາຜ່ານມາວ່າ ຜົນການລົງປະຊາມະຕິຢ່າງເປັນທາງການ ເປີດເຜີຍໃຫ້ເຫັນວ່າເກືອບ 69% ຂອງປະຊາຊົນສະວິດສະໜັບສະໜູນກົດໝາຍ "ການສະໜອງໄຟຟ້າທີ່ໝັ້ນຄົງຈາກພະລັງງານທົດແທນ" ເຊິ່ງສອດຄ່ອງກັບແນວໂນ້ມຂອງການສຳຫຼວດຄວາມເຫັນຂອງປະຊາຊົນ ທີ່ເຜີຍແຜ່ກ່ອນການລົງປະຊາມະຕິທົ່ວປະເທດ.

ສອງເດືອນກ່ອນໜ້ານີ້, ສະວິດ ໄດ້ກາຍເປັນປະເທດທຳອິດທີ່ຖືກສານສາກົນຕຳນິວ່າດຳເນີນການຍັງບໍ່ພຽງພໍເພື່ອຕໍ່ສູ້ກັບການປ່ຽນແປງຂອງດິນຟ້າອາກາດ ໃນຄຳຕັດສິນຂອງສານສິດທິມະນຸດເອີຣົບ (European Court of Human Rights - ECHR).

ກົດໝາຍພະລັງງານທົດແທນ ໄດ້ຮັບການອະນຸມັດຈາກລັດຖະສະພາສະວິດເມື່ອປີຜ່ານມາ ແລະ ອົງການຈັດຕັ້ງດ້ານສິ່ງແວດລ້ອມສ່ວນໃຫຍ່ ລວມທັງ Greenpeace ແລະ ກອງທຶນສັດປ່າໂລກ (World Wildlife Fund - WWF) ສະໜັບສະໜູນກົດໝາຍດັ່ງກ່າວ.

ໃນຂະນະທີ່ທ່ານ ອັນເບີດ ຣອສຕິ (Albert Rosti) ລັດຖະມົນຕີກະຊວງສິ່ງແວດລ້ອມ ແລະ ພະລັງງານຂອງສະວິດ ກ່າວວ່າ: ກົດໝາຍສະບັບນີ້ ແມ່ນບາດກ້າວສຳຄັນສຳລັບການເສີມສ້າງຄວາມໝັ້ນຄົງຂອງການສະໜອງພະລັງງານໃນສະວິດ ໂດຍສະເພາະໃນລະດູໜາວ, ເຊິ່ງມີຈຸດປະສົງເພື່ອເພີ່ມການມີສ່ວນຮ່ວມເລັກນ້ອຍການນຳໃຊ້ພະລັງງານລົມ ແລະ ພະລັງງານແສງຕາເວັນໃນປັດຈຸບັນໃນການປະສົມປະສານພະລັງງານຂອງສະວິດ ພ້ອມທັງເພີ່ມການຜະລິດພະລັງງານນ້ຳ ເພື່ອເຮັດໃຫ້ປະເທດທີ່ຮັ່ງມີທີ່ບໍ່ມີຊາຍແດນຕິດກັບທະເລ ຫຼຸດຜ່ອນການເພິ່ງພາອາໄສໄຟຟ້າທີ່ນຳເຂົ້າ.

ຄາດວ່າກົດໝາຍດັ່ງກ່າວຈະກຳນົດໃຫ້ຕິດຕັ້ງແຜ່ນພະລັງງານແສງຕາເວັນ (solar panel) ຢູ່ເທິງຫຼັງຄາເຮືອນ ແລະ ດ້ານໜ້າອາຄານ; ນອກຈາກນີ້, ຍັງຈະເຮັດໃຫ້ການໄດ້ຮັບອະນຸຍາດໃນການວາງແຜນສຳລັບການຕິດຕັ້ງກັງຫັນລົມ (wind turbine) ແລະ ແຜ່ນພະລັງງານແສງຕາເວັນຂະໜາດໃຫຍ່ງ່າຍຂຶ້ນ.

# ຮົງກົງ ກຽມສະເໜີກົດໝາຍຫ້າມຢາສູບໄຟຟ້າ ເພີ່ມໂທດສູບຢາໃນທີ່ສາທາລະນະ



*ລັດຖະບານຮົງກົງ ວາງແຜນສະເໜີຮ່າງກົດໝາຍຫ້າມນຳໃຊ້ຜະລິດຕະພັນຢາສູບໄຟຟ້າ ແລະ ຢາສູບທາງເລືອກ ພ້ອມທັງປັບປຸງກົດໝາຍວ່າດ້ວຍການສູບຢາຢູ່ສະຖານທີ່ສາທາລະນະໃຫ້ເຂັ້ມງວດກວ່າເກົ່າ.*

ວັນທີ 07 ມິຖຸນາຜ່ານມາ, ຄະນະຜູ້ບໍລິຫານເຂດບໍລິຫານພິເສດຮົງກົງ, ສປ ຈີນ ພະຍາຍາມຊອກຫາວິທີທາງຫ້າມສູບຢາສູບໄຟຟ້າ ແລະ ການນຳໃຊ້ຜະລິດຕະພັນຢາສູບ ທາງເລືອກອື່ນໆ ເຊິ່ງເປັນສ່ວນໜຶ່ງຂອງແຜນການ 10 ຂໍ້ ແນໃສ່ຫຼຸດອັດຕາການສູບຢາໃຫ້ເຫຼືອຮ້ອຍລະ 7.8 ໃນປີ 2025 ຈາກ 9.1 ເມື່ອປີ 2023.

ທ່ານ ໂລ ຊຸງ-ເໝົາ (LO Chung-mau) ລັດຖະມົນຕີກະຊວງສາທາລະນະສຸກຂອງຮົງກົງ ກ່າວວ່າ: "ພວກເຮົາຈະບັງຄັບໃຊ້ມາດຕະການຫ້າມຜະລິດຕະພັນຢາສູບທາງເລືອກຢ່າງເດັດຂາດ, ຄວາມຄິດເຫັນຂອງຄົນສ່ວນໃຫຍ່ ເຫັນດີວ່າຮົງກົງຄວນເປັນເຂດປອດຄວັນຢາສູບ" ໂດຍມາດຕະການໃນອະນາຄົດຈະປະກອບມີ: ຫ້າມສູບຢາໃນຂະນະທີ່ລຽນແຖວລໍຖ້າ, ຂະຫຍາຍເຂດຫ້າມສູບຢາ ແລະ ປັບໃໝເພີ່ມຂຶ້ນສອງເທົ່າເປັນ 3,000 ໂດລາຮົງກົງ (1 ໂດລາຮົງກົງ ປະມານ 3,250 ກີບ) ແລະ ລັດຖະບານຍັງສືບຕໍ່ກວດກາຄືນພາສີຢາສູບ.

ການນຳໃຊ້ຢາສູບໄຟຟ້າບໍ່ແມ່ນເລື່ອງໃໝ່ໃນຮົງກົງ, ເຖິງວ່າລັດຖະບານໄດ້ອອກມາດຕະການຫ້າມຂາຍຜະລິດຕະພັນຢາສູບທາງເລືອກ ເມື່ອປີ 2022 ແຕ່ການນຳໃຊ້ສ່ວນບຸກຄົນຍັງໄດ້ຮັບອະນຸຍາດ; ແນວໃດກໍຕາມ, ມາດຕະການເຫຼົ່ານີ້ຈະໄດ້ຮັບການປັບປຸງໃນຮ່າງກົດໝາຍສະບັບໃໝ່.

ໂດຍຄະນະບໍລິຫານເຂດບໍລິຫານພິເສດຮົງກົງ ມີແຜນທີ່ຈະຍື່ນຮ່າງກົດໝາຍດັ່ງກ່າວຕໍ່ສະພານິຕິບັນຍັດກ່ອນທ້າຍປີນີ້ ເພື່ອໃຫ້ໄດ້ຮັບການອະນຸມັດໃນປີ 2025.

**ແຫຼ່ງຂ່າວ: AFP**

# ເລີ່ມຕົ້ນໂຄສະນາຫາສຽງເລືອກຕັ້ງລັດຖະສະພາມົງໂກລີ

ວັນຈັນທີ 10 ມິຖຸນາຜ່ານມາ, ປະເທດມົງໂກລີ ໄດ້ເປີດຂະບວນການໂຄສະນາຫາສຽງຢ່າງເປັນທາງການສຳລັບການເລືອກຕັ້ງສະມາຊິກລັດຖະສະພາຕາມກຳນົດ.

ມົງໂກລີ, ມີປະຊາກອນ 3.5 ລ້ານຄົນ, ໄດ້ກຳນົດເອົາວັນທີ 28 ມິຖຸນາ 2024 ເປັນວັນເລືອກຕັ້ງຄັ້ງຕໍ່ໄປຂອງສະພາຄູຣານໃຫຍ່ (State Great Khural) ເຊິ່ງເປັນລັດຖະສະພາທີ່ມີສະພາດຽວ (unicameral) ຂອງປະເທດ.

ຄະນະກຳມະການການເລືອກຕັ້ງທົ່ວໄປໄດ້ລົງທະບຽນຜູ້ສະໝັກຮັບເລືອກຕັ້ງ 1,294 ຄົນ ຈາກ 19 ພັກການເມືອງ ແລະ 2 ພັກພັນທະມິດ ລວມທັງຜູ້ສະໝັກເອກະລາດ 42 ຄົນ ສຳລັບການເລືອກຕັ້ງສະມາຊິກລັດຖະສະພາ ແລະ ໄດ້ອອກບັດລົງສະໝັກຮັບເລືອກຕັ້ງໃຫ້ແກ່ພວກເຂົາໃນວັນທີ 10 ມິຖຸນາຜ່ານມາ.

ອີງຕາມກົດໝາຍວ່າດ້ວຍການເລືອກຕັ້ງສະພາຄູຣານໃຫຍ່, ການໂຄສະນາຫາສຽງເລືອກຕັ້ງຈະຖືກລະງັບ 24 ຊົ່ວໂມງກ່ອນວັນປ່ອນບັດ.

ຄາດວ່າຈະມີພົນລະເມືອງມົງໂກນ 2,238,360 ຄົນໄປປ່ອນບັດໃນວັນເລືອກຕັ້ງ.

ໃນວັນທີ 31 ພຶດສະພາ 2023 ລັດຖະສະພາຂອງມົງໂກລີ ໄດ້ອະນຸມັດການປັບປຸງເພື່ອເພີ່ມຈຳນວນສະມາຊິກລັດຖະສະພາ ຈາກ 76 ເປັນ 126 ທີ່ນັ່ງ ໃນລັດຖະທຳມະນູນຂອງປະເທດ.

**ແຫຼ່ງຂ່າວ: ຊິນຮວາ**

# ສະພາແຫ່ງຊາດອາຟຣິກາໃຕ້ເລືອກປະທານ ແລະ ປະທານາທິບໍດີ




*ເມື່ອວັນສຸກທີ 14 ມິຖຸນາ 2024 ທ່ານ ນາງ ໂທໂກ ດິດິຊາ (Thoko Didiza) ລັດຖະມົນຕີກະຊວງກະສິກຳຂອງອາຟຣິກາໃຕ້ ໄດ້ຮັບເລືອກຕັ້ງເປັນປະທານສະພາແຫ່ງຊາດຊຸດໃໝ່.*

ຫົວໜ້າຜູ້ພິພາກສາທ່ານ ເຣມອນ ຊອນໂດ (Raymond Zondo) ເຊິ່ງເປັນປະທານກອງປະຊຸມຄັ້ງປະຖົມມະລືກຂອງສະພາແຫ່ງຊາດ (ສະພາຕໍ່າ) ຊຸດໃໝ່ ໄດ້ປະກາດວ່າທ່ານ ດິດິຊາ ໄດ້ຮັບໄຊຊະນະໃນການເລືອກຕັ້ງ ໂດຍເອົາຊະນະຜູ້ສະໝັກແຂ່ງຂັນພຽງຄົນດຽວ ຄືທ່ານ ນາງ ເວໂຣນິກາ ເມນເຕ (Veronica Mente) ຈາກພັກນັກຕໍ່ສູ້ເພື່ອອິດສະຫຼະພາບທາງເສດຖະກິດ (Economic Freedom Fighters - EFF) ດ້ວຍຄະແນນ 284 ຕໍ່ 49 ສຽງ ຈາກສະມາຊິກສະພາແຫ່ງຊາດ (ສສຊ) ທີ່ລົງຄະແນນສຽງປິດລັບ.

ທ່ານ ດິດິຊາ ສະມາຊິກພັກສະມັດຊາແຫ່ງຊາດອາຟຣິກາ (African National Congress - ANC) ປັດຈຸບັນເປັນລັດຖະມົນຕີກະຊວງກະສິກຳ, ການປະຕິຮູບທີ່ດິນ ແລະ ການພັດທະນາຊົນນະບົດ.

ນອກຈາກນີ້, ສສຊ ຍັງໄດ້ເລືອກທ່ານ ນາງ ແອນເນລີ ໂລທຣິດ (Annelie Lotriet) ຈາກພັກພັນທະມິດປະຊາທິປະໄຕ (Democratic Alliance - DA) ເປັນຮອງປະທານສະພາແຫ່ງຊາດ.

ໃນວັນດຽວກັນ, ສະພາແຫ່ງຊາດ ມີມະຕິສຽງສ່ວນຫຼາຍ 283 ຈາກທັງໝົດ 400 ສຽງ ໂດຍການລົງຄະແນນສຽງປິດລັບ ຮັບຮອງປະທານາທິບໍດີ ໄຊຣິວ ຣາມາໂຟຊາ (Cyril Ramaphosa) ອາຍຸ 71 ປີ, ປະທານພັກ ANC ໃຫ້ດຳລົງຕຳແໜ່ງຜູ້ນຳປະເທດເປັນສະໄໝທີສອງຕິດຕໍ່ກັນ ຫຼືອີກ 5 ປີ; ຂະນະທີ່ຜູ້ຖືກສະເໜີຊື່ອີກຄົນ ຄືທ່ານ ຈູລຽດ ມາເລມາ (Julius Malema) ຈາກພັກ EFF ໄດ້ຮັບຄະແນນພຽງ 44 ສຽງ.

ອີງຕາມການລາຍງານຂອງສື່ມວນຊົນທ້ອງຖິ່ນ, ANC ແລະ DA ພັກຝ່າຍຄ້ານຕົ້ນຕໍ ໄດ້ບັນລຸຂໍ້ຕົກລົງເພື່ອຈັດຕັ້ງລັດຖະບານເອກະພາບແຫ່ງຊາດເຊິ່ງຈະປະກອບມີພັນທະມິດຮັກຊາດ (Patriotic Alliance - PA) ແລະ ພັກ Inkatha Freedom ຫຼື IFP.

ໃນການເລືອກຕັ້ງທົ່ວໄປເມື່ອວັນທີ 29 ພຶດສະພາຜ່ານມາ, ANC ໄດ້ຮັບ 159 ໃນຈຳນວນທັງໝົດ 400 ທີ່ນັ່ງໃນສະພາແຫ່ງຊາດ, ເຖິງວ່າຍັງໄດ້ຮັບໄຊຊະນະໃນການເລືອກຕັ້ງຫຼາຍທີ່ສຸດກໍຕາມ ແຕ່ນີ້ແມ່ນຄັ້ງທຳອິດໃນປະຫວັດສາດການເມືອງຂອງປະເທດ ທີ່ ANC ບໍ່ສາມາດໄດ້ຮັບຄະແນນສຽງສ່ວນຫຼາຍໃນສະພາແຫ່ງຊາດໄດ້.

ສະພາແຫ່ງຊາດ ມີສະມາຊິກທັງໝົດ 400 ທ່ານ; 200 ທ່ານ ຈະຖືກເລືອກຕັ້ງຈາກບັນຊີລາຍຊື່ຂອງພັກໃນທົ່ວປະເທດ, ສ່ວນອີກ 200 ທ່ານ ຈະຖືກເລືອກຕັ້ງຈາກບັນຊີລາຍຊື່ຂອງພັກລະດັບແຂວງ ໃນແຕ່ລະ 9 ແຂວງ.

ຜູ້ມີສິດເລືອກຕັ້ງຫຼາຍກວ່າ 27 ລ້ານຄົນ ໄດ້ໄປໃຊ້ສິດລົງຄະແນນສຽງຢູ່ໜ່ວຍປ່ອນບັດ 23,000 ແຫ່ງໃນທົ່ວປະເທດ ເພື່ອເລືອກຕັ້ງສະພາແຫ່ງຊາດຊຸດໃໝ່ ແລະ ສະພາປະຊາຊົນຂັ້ນແຂວງ, ອີງຕາມຄະນະກຳມະການການເລືອກຕັ້ງເອກະລາດ (Independent Electoral Commission - IEC) ຂອງອາຟຣິກາໃຕ້ ເຊິ່ງເປັນອົງການການເລືອກຕັ້ງຂອງປະເທດ.

ອີງຕາມຂໍ້ມູນຂອງ IEC, ມີ 70 ພັກການເມືອງ ແລະ 11 ຜູ້ສະໝັກຮັບເລືອກຕັ້ງເອກະລາດ ໄດ້ເຂົ້າຮ່ວມການເລືອກຕັ້ງປີນີ້; ບັນດາຜູ້ລົງສະໝັກຮັບເລືອກຕັ້ງເອກະລາດ ໄດ້ເຂົ້າຮ່ວມການແຂ່ງຂັນເປັນຄັ້ງທຳອິດ, ໃນຂະນະທີ່ຊື່ຂອງພວກເຂົາປາກົດຢູ່ໃນບັດລົງຄະແນນສຽງເລືອກຕັ້ງ ພາຍຫຼັງການປັບປຸງກົດໝາຍວ່າດ້ວຍການເລືອກຕັ້ງ.

ຜູ້ມີສິດເລືອກຕັ້ງທີ່ໄປຮອດໜ່ວຍປ່ອນບັດ ຕ້ອງນຳເອົາເອກະສານຢັ້ງຢືນຕົວຕົນມາດ້ວຍ ແລະ ຈະໄດ້ຮັບບັດລົງຄະແນນສຽງ 3 ໃບ ຄື: 2 ໃບສຳລັບລົງຄະແນນສຽງເລືອກຕັ້ງ ສສຊ ແລະ ໃບທີ 3 ເລືອກຕັ້ງສະມາຊິກສະພານິຕິບັນຍັດຂັ້ນແຂວງ ໃນແຕ່ລະ 9 ແຂວງຂອງອາຟຣິກາໃຕ້.

ການເລືອກຕັ້ງແຫ່ງຊາດ ແລະ ຂັ້ນແຂວງ ໃນປີ 2024 ເຊິ່ງກົງກັບການສະເຫຼີມສະຫຼອງ 30 ປີແຫ່ງອິດສະຫຼະພາບ ແລະ ປະຊາທິປະໄຕຂອງອາຟຣິກາໃຕ້, ເປັນການເລືອກຕັ້ງທົ່ວໄປຄັ້ງທີ 7 ທີ່ຈັດຂຶ້ນໃນປະເທດ ນັບຕັ້ງແຕ່ການແບ່ງແຍກສີຜິວໄດ້ສິ້ນສຸດລົງໃນປີ 1994.

**ແຫຼ່ງຂ່າວ: ຊິນຮວາ**

ເຝົ້າໄວ້ ໄດ້ບົດຮຽນ

❖ ວິເສດ ສະແຫວງສຶກສາ

# ລະບຽບການເພື່ອຄວບຄຸມການປະພຶດຂອງນັກທ່ອງທ່ຽວ

ມາຮອດມື້ນີ້, ພວກເຮົາພວມຢູ່ເຄິ່ງທາງຂອງປີທ່ອງທ່ຽວລາວ 2024 (Visit Laos Year 2024) ເຊິ່ງໂຕເລກໃນເບື້ອງຕົ້ນບອກວ່າພວກເຮົາໄປໄດ້ດີພໍສົມຄວນແລະອາດໄດ້ລື່ນຄາດໝາຍໃນທ້າຍປີ ຖ້າເຮັດໄດ້ຕາມເປົ້າໝາຍທີ່ວາງໄວ້. ເພື່ອເພີ່ມຕື່ມເຂົ້າບັນຍາກາດຂອງປີທ່ອງທ່ຽວນີ້, ຂໍສະເໜີບາງເລື່ອງຈາກຕ່າງປະເທດກ່ຽວກັບການພັດທະນາການທ່ອງທ່ຽວ ໃນນັ້ນ ບາງເລື່ອງກໍເຄີຍໄດ້ເວົ້າມາແດ່ແລ້ວແຕ່ຂໍຮື້ຟື້ນມາເລົ່າຕໍ່ເພື່ອກັນລືມ. ຢູ່ໄທບ່ອນທີ່ມີນັກທ່ອງທ່ຽວຕອມຫຼາຍທີ່ສຸດປະເທດໜຶ່ງນັ້ນ ເຂົາມີບົດຮຽນທີ່ຄິດວ່າຄວນຖອດຖອນນຳນັ້ນ ກໍຄືການຮັກສາພາບພົດຂອງປະເທດໃນການປະຕິບັດກົດໝາຍ ເຊິ່ງໄດ້ແກ່ມາດຕະການປາບປາມການຄ້າວັດຖຸສິ່ງຂອງປອມຫຼືສິນຄ້າແບຣນເນມ(ຍີ່ຫໍ້ຫຼູລາຄາແພງ) ຈາກຕ່າງປະເທດ ທີ່ມັກມີຄົນໄປລໍ້ຂາຍຕົບຕານັກທ່ອງທ່ຽວຕ່າງປະເທດ. ດັ່ງນັ້ນ, ເມື່ອປະມານ 6 ປີຜ່ານມາ ຈຶ່ງມີຂ່າວໃຫຍ່ທີ່ບອກວ່າ ທາງອົງການທ່ອງທ່ຽວໄທໄດ້ສົມທົບກັບບໍລິສັດທ່ອງທ່ຽວ ເຄື່ອນໄຫວໂຄສະນາບໍ່ໃຫ້ນັກທ່ອງທ່ຽວຕ່າງປະເທດຫຼົງກົນລວງຍົວະຊື້ສິນຄ້າປອມ ເພາະຈະພາໃຫ້ເສຍພາບພົດຂອງປະເທດ ທັງເປັນການລະເມີດລິຂະສິດ. ສິນຄ້າປອມຍ້ອມແມວທີ່ນັກທ່ອງທ່ຽວຕ່າງປະເທດຖືກຫຼອກໃຫ້ຊື້ນັ້ນ ຈະກາຍເປັນລະເບີດເວລາທຳລາຍຊື່ສຽງຂອງປະເທດວ່າຂາດລະບຽບກົດໝາຍຄຸ້ມຄອງ. ບັນດານັກທ່ອງທ່ຽວທີ່ຖືກຫຼອກເຫຼົ່ານັ້ນຈະຫຼາບ ບໍ່ຕ້ອງການຖືກຫຼອກອີກເປັນເທື່ອທີສອງ. ທາງການໄທຕ້ອງການນັກທ່ອງທ່ຽວທີ່ມາທ່ຽວແລ້ວຕິດໃຈຢາກມາອີກ ບໍ່ແມ່ນທ່ຽວເທື່ອດຽວແລ້ວຫຼາບຕາຍປານຕອນແມວ ! ຂ່າວບອກວ່າ ບັນດານັກເຄື່ອນໄຫວປ້ອງກັນບໍ່ໃຫ້ນັກທ່ອງທ່ຽວຕ່າງປະເທດຖືກຫຼອກໃຫ້ຊື້ຜະລິດຕະພັນປອມນັ້ນ ໄດ້ຕິດປ້າຍເຕືອນຢູ່ຕາມແຫຼ່ງທ່ອງທ່ຽວທີ່ສຳຄັນໃນທົ່ວປະເທດ, ນອກຈາກນັ້ນ, ທາງການຍັງໄດ້ຈັດກອງປະຊຸມຂ່າວຮ່ວມກັບບັນດາທູດຕ່າງປະເທດທີ່ປະຈຳການຢູ່ໄທກ່ຽວກັບບັນຫາດັ່ງກ່າວ ພ້ອມທັງໄດ້ຂໍຮ້ອງໃຫ້ທູດເຫຼົ່ານັ້ນຊ່ວຍເຕືອນສະຕິພົນລະເມືອງຂອງປະເທດຕົນ ບໍ່ໃຫ້ຖືກຫຼອກໃຫ້ຊື້ຂອງປອມເວລາໄປທ່ອງທ່ຽວຢູ່ປະເທດໄທ.

ຢູ່ປະເທດຈີນ, ທາງການໄດ້ອອກລະບຽບເຫຼັກເພື່ອຄວບຄຸມຄົນຈີນທີ່ທ່ອງທ່ຽວຢູ່ພາຍໃນປະເທດ ແລະ ອອກໄປເຄື່ອນໄຫວຢູ່ຕ່າງປະເທດ. ສຳລັບນັກທ່ອງທ່ຽວຂາອອກນັ້ນ ມີຂໍ້ຫ້າມດັ່ງນີ້: ຫ້າມພົວພັນກັບຢາເສບຕິດ, ການພະນັນ, ໂສເພນີ, ການລະເມີດກົດໝາຍປະເທດທີ່ໄປທ່ຽວ, ຫ້າມທຸກການກະທຳທີ່ເປັນອັນທະພານແລະກໍ່ການຮ້າຍ, ນັກທ່ອງທ່ຽວຈີນຕ້ອງເຄົາລົບຮີດຄອງປະເພນີຂອງປະເທດເຈົ້າພາບ. ໃນໄລຍະຜ່ານມາ ໄດ້ມີຫຼາຍກໍລະນີທີ່ນັກທ່ອງທ່ຽວຈີນມີການປະພຶດທີ່ຜິດກົດໝາຍເຊັ່ນ: ມີນັກຂ່າວຈີນສອງຄົນ ທີ່ໄປທ່ຽວເຢຍລະມັນ ໄດ້ຖ່າຍຮູບຕໍ່ໜ້າຫໍລັດຖະສະພາ ໃນທ່າຂໍ່ານັບແບບສະໄໝຜະເດັດການຮິດເລີ, ຈີນຖືກປັບໃໝ ແລະ ເນລະເທດ, ອີກກໍລະນີໜຶ່ງເກີດຂຶ້ນຢູ່ໃນສາຍການບິນໄທ ຄືນັກທ່ອງທ່ຽວຈີນຄົນໜຶ່ງໄດ້ສາດນໍ້າຮ້ອນໃສ່ພະນັກງານອາກາດຍິງ ຍ້ອນຂໍປ່ຽນບ່ອນນັ່ງບໍ່ໄດ້. ດັ່ງນັ້ນ, ທາງການຈີນຈຶ່ງມີມາດຕະການລົງໂທດນັກທ່ອງທ່ຽວຈີນທີ່ກະທຳຜິດໄປຄຽງຄູ່ກັບການລົງໂທດນັກທ່ອງທ່ຽວຕ່າງປະເທດທີ່ເຮັດແນວແຕກບອກນອກທາງເວລາໄປທ່ຽວຢູ່ຈີນ. ສຳລັບຢູ່ພາຍໃນປະເທດນັ້ນ, ທາງການຈີນເອົາໃຈໃສ່ການປະພຶດຂອງຜູ້ນຳທ່ຽວ ທີ່ຊອກຊູດຮີດ ຫຼື ເອົາລັດເອົາປຽບນັກທ່ອງທ່ຽວ ເຊັ່ນ ຜູ້ນຳທ່ຽວບາງຄົນ ຕີຄໍເຂົ້າກັບເຈົ້າຂອງຮ້ານຄ້າ, ຮ້ານອາຫານ, ຮ້ານບໍລິການອື່ນໆ ແລ້ວຫຼອກໃຫ້ນັກທ່ອງທ່ຽວໃຊ້ບໍລິການຕາມສະຖານທີ່ດັ່ງກ່າວ ເພື່ອຕົນຈະໄດ້ສ່ວນແບ່ງຜົນປະໂຫຍດ ອັນນີ້ເອີ້ນວ່າ: "ຜູ້ນຳທ່ຽວຜູກຂາດ" ນັ້ນເອງ.

TE SOLE

ທະນາຄານພັດທະນາລາວ
LDB Bank

ທຣມພາສາ ຜ່ານສຽງຫົວ



# ບໍ່ມີເວລາ

*#ບ່າວກະບື*

**ພ**ະນັກງານຍິງປະຈຳກະຊວງໜຶ່ງ ເລີ່ມແສ່ວເສື້ອກັນໜາວໃຫ້ຜົວ. ນາງແສ່ວແລ້ວເຄິ່ງດຽວກໍຢຸດ. ຜູ້ຜົວຖາມວ່າ "ເປັນຫຍັງ?".

ນາງຕອບວ່າ: "ສອງສາມວັນຜ່ານມານີ້ ນ້ອງບໍ່ໄດ້ໄປການ ດັ່ງນັ້ນ ຈຶ່ງບໍ່ມີເວລາແສ່ວເສື້ອໃຫ້ອ້າຍແລ້ວ".

# No Time

***# BAOKBU***

A female official working in a certain ministry, started to knit a sweater for her husband. She gave it up only half done.

Her husband asked her, "why?"

She replied: " I have not been going to office for the last few days, therefore I didn't have time to finish your sweater. "

ຕາມພາສາ ກາຕູນ




● ໂດຍ : ພູຜາ

## ແຈ້ງການ

ໃນໄລຍະດຳເນີນກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດຊຸດທີ IX, ຄະນະເລຂາທິການສະພາແຫ່ງຊາດ ໄດ້ຈັດຕັ້ງໜ່ວຍຮັບຄຳສະເໜີຂອງປະຊາຊົນຜ່ານໂທລະສັບສາຍດ່ວນ ເພື່ອຮັບເອົາຄຳຄິດຄຳເຫັນ ແລະ ຄຳສະເໜີໂດຍກົງຈາກປະຊາຊົນ ທີ່ຈະສົ່ງໄປຍັງກອງປະຊຸມ, ເຊິ່ງສາມາດສົ່ງໄດ້ຕາມວິທີລຸ່ມນີ້:

- ສາຍດ່ວນ: 156 (ໃນໂມງລັດຖະການ)
- ອີເມວ: nalao.156@gmail.com
- App: Laona

**ຜູ້ຊີ້ນຳ**
ທ່ານ ສີງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ
ທ່ານ ຄຳຫວັນ ດາລາວົງ

**ຄະນະບັນນາທິການ**
ທ່ານ ປອ. ພົດສະໄໝ ບຸນວິໄລ ຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ

**ກອງບັນນາທິການ**
ທ່ານ ນາງ ວັນນາລິນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ສຸພາວັນ ທອມສະນິດ
ທ່ານ ນາງ ປາກາລັກ ພົມມີໄຊ

**ອອກແບບ - ຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ